# ສ້ອຍສາຍຄຳ

ລິດຈະນາ ໂດຍ

ສຳລິດ ບົວສີສະຫວັດ

ຈັດພິມ ໂດຍ :
ໂຄງການປົກປັກຮັກສາຫນັງສືໃບລານລາວ
ການຮ່ວມມື ລາວ - ເຢຍຣະມັນ

# ສ້ອຍສາຍຄຳ

ຊຳຮະ ແລະ ລິດຈະນາ

**ສຳລິດ ບົວສີສະຫວັດ**

ຈັດພິມໂດຍ

ໂຄງການປົກປັກຮັກສາໜັງສືໃບລານລາວ

( ການຮ່ວມມື ລາວ-ເຢຍຣະມັນ )

1996

# ສ້ອຍສາຍຄຳ

ຊຳຣະ ແລະ ລຽບລຽງ
ໂດຍ ສຳລິດ ບົວສີສະຫວັດ

© ສະຫງວນ ລິຂະສິດ

ອອກແບບໜ້າປົກ : ວຽງຄຳ ບັນທະວົງດວງສີ
ຄອມພິວເຕີ : ຄຳມັກ ວົງສັກດາ
ຈັດພິມໂດຍ : ໂຄງການປົກປັກຮັກສາໜັງສື
ໃບລານລາວ
ການຮ່ວມມື ລາວ-ເຢຍຣະມັນ

ພິມທີ່ ໂຮງພິມ ໄຜ່ໜາມ
ຕາມ ທບ. 882/ພທປ 040895

ພິມເທື່ອທີສອງ
ຈຳນວນ 2.000 ຫົວ

# ຄຳນຳ

## ໃນການພິມ ຄັ້ງທີຫນຶ່ງ

ເນື່ອງຈາກ ຂ້າພະເຈົ້າໄດ້ຊຳຣະ ແລະ ລິດຈະນາ ຫນັງສືມູລະຕັນໄຕ ອັນເປັນກົດຫມາຍບູຮານ ຊຶ່ງໄດ້ຈັດພິມໄປແລ້ວ ໃນຂອບເຂດຂອງ ໂຄງການຂຶ້ນບັນຊີຫນັງສືຜູກໃບລານ ຂອງ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໃນສົກປີ 1992 ປາກົດວ່າມີຜູ້ສົນໃຈຢ່າງກວ້າງຂວາງ. ດັ່ງນັ້ນ ຈຶ່ງມາຄິດວ່າ ຄວນຈະຊອກຫາກົດຫມາຍບູຮານອື່ນໆ ມາລິດຈະນາ ແລະ ພິມເຜີຍແຜ່ ເພື່ອຕອບສະຫນອງກັບຄວາມຮຽກຮ້ອງຕ້ອງການ ຂອງຜູ້ມີຄວາມປະສົງຢາກຄົ້ນຄວ້າຕື່ມອີກ, ເພາະກົດຫມາຍບູຮານລາວນັ້ນ ມີຢູ່ຫລາຍຜູກຫລາຍມັດ ເຊັ່ນ : ກົດຫມາຍພະທຳມະສາດຫລວງ, ມູລະຕັນໄຕ, ສ້ອຍສາຍຄຳ ແລະ ອື່ນໆອີກ. ສະນັ້ນຈຶ່ງໄດ້ເຮັດ ໂຄງການປະລິວັດກົດຫມາຍລາວບູຮານຂຶ້ນ ແລະ ສະເຫນີຂໍຄວາມ ອຸບປະຖຳ ຈາກມູນນິທິໂຕໂຍຕາ ( TOYOTA FOUNDATION ) ປະເທດຍີ່ປຸ່ນເພື່ອພິມເຜີຍແຜ່ ຫນັງສືສ້ອຍສາຍຄຳ ທີ່ທ່ານເຫັນຢູ່ ດຽວນີ້.

ເຖິງຢ່າງໃດກໍດີ ຫາກບໍ່ມີອຸປະສັກ ຫວັງວ່າຈະພະຍາຍາມຄົ້ນຄວ້າຊຳຮະ ແລະ ປະລິວັດແລ້ວພິມເຜີຍແຜ່ກົດໝາຍບູຮານອື່ນໆອີກຕໍ່ໄປ ທັງນີ້ ກໍເພື່ອອະນຸລັກປົກປັກຮັກສາເອກະສານບູຮານດ້ານກົດໝາຍ ແລະ ເຜີຍແຜ່ ເພື່ອເປັນເຄື່ອງມືຄົ້ນຄວ້າຂອງນັກວິຊາການ ແລະ ຜູ້ສົນໃຈທົ່ວໄປ.

ອັນທີ່ຈິງ ບັນດາຄຳພີໃບລານ ຫລື ໜັງສືຜູກໃບລານ ທີ່ນັກປາດບຸບພາຈານໃນອະດີດ ໄດ້ແຕ່ງແປງ ແລະ ຈານ (ຂຽນໃສ່ໃບລານ) ໄວ້ຫລາຍເລື່ອງຫລາຍລາຍ ເປັນທີ່ໜ້າສົນໃຈ ສຶກສາຄົ້ນຄວ້າ, ນັບວ່າເປັນສົມບັດ ຫລື ມູນມໍລະດົກອັນມີຄ່າມະຫາສານ. ໃນປັດຈຸບັນ ມີຜູ້ສຶກສາຄົ້ນຄວ້າຕື່ມຂຶ້ນເລື້ອຍໆ ເພາະວ່າໃນເອກະສານເຫລົ່ານັ້ນ ຊົງໄວ້ເຊິ່ງສາຣະປະໂຫຍດຫລວງຫລາຍກາຍເປັນວັດທະນະທຳ ທີ່ສຳຄັນອັນໜຶ່ງ ຜູ້ສຶກສາຄົ້ນຄວ້າຈະໄດ້ຄວາມຮູ້ ທາງບູຮານຄະດີ, ສົມຄວນທີ່ເຮົາອະນຸຊົນຈະອະນຸຮັກຄຸ້ມຄອງປົກປັກຮັກສາໄວ້ ເປັນສົມບັດຄູ່ບ້ານຄູ່ເມືອງລາວ. ແມ່ນແຕ່ຊາວຕ່າງປະເທດ ເຂົາເຈົ້າກໍຍັງສົນໃຈໃຫ້ການສະໜັບສະໜູນທັງນີ້ ກໍເພາະວ່າ ຄຳພີໃບລານທີ່ເພິ່ນຈານໄວ້ນັ້ນ ໄດ້ບັນຈຸໄວ້ເຊິ່ງສາຣະເນື້ອໃນ ທັງທາງຄະດີໂລກ ແລະ ຄະດີທຳ ຕະຫລອດຮອດສາຣະຄະດີຫລາຍຮູບຫລາຍສີ ມີທັງປະຫວັດສາດ, ຕຳນານ, ນິທານ, ອັດຖະຄະດີ, ຮີດຄອງປະເພນີສາລະພັດຢ່າງ, ລວມທັງຕຳຣາໂຫລະສາດ, ຕຳຣາຢາບູຮານ, ສາຣະຄະດີດ້ານພະທຳຄຳສັ່ງສອນກໍມີພ້ອມບໍລິບູນ ທີ່ເປັນເຂັມທິດຊີ້ນຳປະຕິບັດທາງກາຍ ວາຈາໃຈ

ເຊັ່ນ : ຫລັກຂອງສີນ, ສະມາທິ, ປັນຍາ ເປັນຕົ້ນ.

ສຳລັບຄຳພີສອຍສາຍຄຳ ທີ່ລິດຈະນານີ້ ໄດ້ຕົ້ນສະບັບໃບລານ ຈາກຫໍສະຫມຸດແຫ່ງຊາດ, ວຽງຈັນ, ມີ 37 ໃບປາຍ ຫນຶ່ງຫນ້າ ກັບສອງແຖວ. ຫນ້າຫນຶ່ງມີຫົວບັນທັດ. ບອກໄວ້ວ່າ ສັງກະຣາດ ຣາຊາໄດ້ 1233 ຕົວ ປີມະແມ ຕີນີສົກ ເດືອນ 10 ແຮມ 5 ຄ່ຳ ວັນຈັນ, ມື້ເປີກສັນ ຂະຫນັບທຳມະວົງສາ ເປັນຜູ້ຂຽນ. ສະແດງວ່າ ໄດ້ຈານກ່າຍມາເປັນເວລາຮ້ອຍກວ່າປີແລ້ວ. (1357 - 1233=124) ສະພາບພໍອ່ານໄດ້ຢູ່ແຕ່ຕົກຫລົ່ນຫລາຍ ທັງການກ່າຍ ກໍຜິດພາດຫລາຍ ຈຶ່ງຮູ້ສຶກຫຍຸ້ງຍາກໃນການຊຳຣະ ແລະ ປະລິວັດ ແກ້ໄຂໄດ້ເປັນສ່ວນ ຫລາຍທີ່ສຸດ ທີ່ຍັງສົງໄສມີຫນ້ອຍຍັງຄົງໄວ້ຕາມເດີມ ເພື່ອໃຫ້ ໂອກາດຄົນຮຸ່ນໃຫມ່ ໄດ້ຄົ້ນຄວ້າສືບຕໍ່ໄປ.

ເນື້ອໃນສາຣະຂອງຄຳພີນີ້ ມີລັກສະນະແຕກຕ່າງຈາກ ມູລະຕັນໄຕ ເພາະຖືຫລັກວິໄນ ປາຕິໂມກເປັນເກນສຳລັບປຽບທຽບ ແລະ ໄດ້ວາງອັດຕາ ຂັນຄ່າຄໍ, ຂັນໄຫມ, ຂັນສົມມາ ໄວ້ຕາມຖານະ ຫນັກເບົາ ຂອງອາບັດພິກຂຸສົງ ໂດຍນຳມາປຽບທຽບກັນ. ນອກຈາກນີ້ ກໍມີຫລັກການປົກຄອງຂອງບູຮານແຊກໄວ້ ເປັນບາງ ຕອນ ( ລາຍລະອຽດເບິ່ງໃນປຶ້ມ ).

ທີ່ຈັດວ່າມີລັກສະນະພິເສດ ກໍຄືວ່າ ໄດ້ບອກຈະແຈ້ງວ່າ ແຕ່ງໃນຣັດຊະການ ພະເຈົ້າໂພທິສາຣະຣາດ ປະມານທ້າຍສະຕະວັດ ທີ 13 ຕົ້ນສະຕະວັດທີ 14 ນັບວ່າໄດ້ຮັບອິດທິພົນ ທາງພຸດທະ ສາດສະຫນາຫລາຍທີ່ສຸດ. ເພາະໃນຍຸກນີ້ ພະພຸດທະສາດສະຫນາ

ຈະເລີນຮຸ່ງເຮືອງເຫລືອງເຫລື້ອມຫລາຍໃນເມືອງລາວ ກ່າວຕາມທີ່ປາກົດ ໃນປະຫວັດສາດບອກໄວ້.

ບຸນກຸສົນ ຫລືຄຸນງາມຄວາມດີໃດໆ ຫາກເພິ່ງມີຈາກການຊຳຣະປະລິວັດ ແລະ ຈັດພິມປຶ້ມຫົວນີ້ ຂ້າພະເຈົ້າຂໍນ້ອມອຸທິດເປັນເຄື່ອງບູຊາຄຸນເຫລົ່າບຸບພາຈານເຈົ້າ ບັນພະບຸຣຸດຂອງຊາດລາວ ທີ່ໄດ້ສ້າງສົມ ມູນມໍລະດົກອັນລ້ຳຄ່າໄວ້ໃຫ້ອະນຸຊົນພາຍຊ້ອຍ ໄດ້ຄົ້ນຄວ້າ ແລະ ສຶກສາ ດ້ວຍຄວາມເຄົາຣົບຢ່າງສູງ ແລະຮູ້ບຸນຄຸນຢ່າງສຸດຊຶ້ງ.

ຂ້າພະເຈົ້າຂໍຂອບໃຈ ມູນນິທິໂຕໂຢຕາ ປະເທດຍີ່ປຸ່ນ ທີ່ເປັນຜູ້ອຸປະຖຳໂຄງການປະລິວັດ ກົດຫມາຍບູຮານລາວ ໂດຍການໃຫ້ທຶນໃນການຄົ້ນຄວ້າ ປະລິວັດ ແລະ ຈັດພິມປຶ້ມເຫລັ້ມນີ້ ມານະໂອກາດນີ້ດ້ວຍ. ຫາກວ່າປາດສະຈາກການຊ່ວຍເຫລືອອັນເຕັມໄປດ້ວຍຄຸນຄ່ານີ້ແລ້ວ ປຶ້ມຫົວນີ້ ຄົງຈະບໍ່ປາກົດໃນບັນນະໂລກ ເປັນແນ່ແທ້.

ວຽງຈັນ, ວັນທີ 2 ສິງຫາ 1992

ໂຄງການປະລິວັດກົດຫມາຍບູຮານລາວ

**ສຳລິດ ບົວສີສະຫວັດ**

# ຄຳນຳ
## ໃນການພິມເທື່ອທີສອງ

ຄຳພີ "ສ້ອຍສາຍຄຳ" ນີ້ ໄດ້ພິມເຜີຍແຜ່ມາແລ້ວເທື່ອໜຶ່ງ ພາຍໃຕ້ໂຄງການປະຣິວັດ ກົດໝາຍບູຮານລາວ " The Translite - ration of Lao Customary Laws Project " ໂດຍການອຸປະຖຳ ຂອງ ມູນນິທິໂຕໂຍຕາ " The Toyota Foundation " ແຫ່ງປະເທດ ຍີ່ປຸ່ນ ໃນປີ 1992 ປາກົດວ່າ ໄດ້ຮັບຄວາມນິຍົມສົມປາດຖະໜາ ຈາກປະຊາຊົນທົ່ວໄປ. ທ່ານ ອາຈານ ສຳລິດ ບົວສີສະຫວັດ ໄດ້ຈັດພິມ ເປັນທັມມະທານ ແລະ ກໍຜາກົດວ່າ ແຈກຢາຍເຜີຍແຜ່ໄປໝົດແລ້ວ. ແຕ່ຄວາມຮຽກຮ້ອງຕ້ອງການຂອງມວນຊົນ ຜູ້ມີຄວາມປະສົງຢາກໄດ້ ຍັງມີຫລາຍຢູ່ ຍ້ອນຮັບຮູ້ໃນຄຸນຄ່າ ແລະ ຄວາມສຳຄັນຂອງໜັງສືນີ້.

ມາບັດນີ້ **ໂຄງການປົກປັກຮັກສາໜັງສືໃບລານລາວ** ພາຍໃຕ້ການ ອຸປະຖຳ ຂອງ **ລັດຖະບານເຢຍຣະມັນ** ເຫັນຄວາມສຳຄັນຂອງ ເອກະສານນີ້ ຈຶ່ງຈັດພິມເຜີຍແຜ່ຊ້ຳອີກ ເພື່ອເປັນການຊ່ວຍສົ່ງເສີມ ວັດທະນະທຳຂອງຊາດ ດ້ານເນຕິທຳ ທີ່ນັບວ່າສຳຄັນ ແລະ ຈຳເປັນ ດັ່ງຄຣອວັນນະຄະດີອື່ນໆ.

ໂຄງການປົກປັກຮັກສາໜັງສືໃບລານລາວ ຂໍສະແດງຄວາມຮູ້ບຸນຄຸນ ຕໍ່ທ່ານອາຈານ ສໍາລິດ ບົວສະຫວັດ ທີ່ມີນໍ້າໃຈເອື້ອເຟື້ອອະນຸຍາດໃຫ້ຈັດພິມໃນເທື່ອນີ້. ພ້ອມທັງຫວັງຢ່າງຍິ່ງວ່າ ຜົນແຫ່ງຄວາມອຸດສາຫະວິຣິຍະ ຂອງ ທ່ານອາຈານ ຈັກອໍານວຍປະໂຫຍດແກ່ທ່ານຜູ້ອ່ານ ຕາມທາງຄວນ.

ວຽງຈັນ, ວັນທີ 12 ກຸມພາ 1996

ຫົວໜ້າໂຄງການ

**ດາຣາ ກັນລະຍາ**

24/VII
ຫ້າມຈຳໜ່າຍ

# ຄຳຊີ້ແຈງ

## ກ່ຽວກັບກົດໝາຍບູຮານລາວ

ກ່ອນອື່ນຢາກທຳຄວາມເຂົ້າໃຈໃນຄຳວ່າ "ປະຣິວັດ" The Transliteration ຄຳນີ້ ມີຄຳໝາຍສະເພາະເຈາະຈົງໃສ່ວິທີການຖ່າຍທອດເລື່ອງຕ່າງໆ ທີ່ຂຽນໄວ້ໃນລະບົບອັກສອນໜຶ່ງ ໄປຍັງລະບົບອັກສອນໜຶ່ງອີກ ທີ່ເປັນລະບົບແຕກຕ່າງກັນ ແຕ່ສາຣະເນື້ອໃນພາສາສຳນວນຄຳເວົ້າ ບໍ່ມີອັນໃດປ່ຽນແປງ ໃຫ້ຄົງໄວ້ຕາມສະບັບເດີມ ຫ້າມດັດແປງແກ້ໄຂ ຍົກເວັ້ນແຕ່ເຫັນຜິດຢ່າງຈະແຈ້ງ ສາມາດອະທິບາຍໄດ້ຢ່າງສົມເຫດສົມຜົນ ຈຶ່ງຍອມໃຫ້ແກ້ໄຂ ນັ້ນແມ່ນອຸດົມການຫລັກຂອງການປະຣິວັດ ແຕ່ນັກປະຣິວັດມີສິດຂຽນຄຳວິໄຈວິຈານໄດ້ ໃນຖານະນັກຄົ້ນຄວ້າ ຫ້າມປ່ຽນພາສາ ສາຣະເນື້ອໃນໃຈຄວາມ ສຳນວນໂວຫານຂອງເກົ່າເພິ່ນ ໃຫ້ປ່ຽນແຕ່ອັກສອນ ຫລືຕົວໜັງສື ເຊັ່ນ ຂ້າພະເຈົ້າໄດ້ປ່ຽນຈາກຕົວໜັງສືທຳ ມາເປັນຕົວໜັງສືລາວປັດຈຸບັນ ເພື່ອໃຫ້ຄົນສະໄໝໃໝ່ອ່ານໄດ້ ອັນນີ້ຮຽກວ່າ ການປະຣິວັດ ບໍ່ທັນຕັ້ງບັນຫາເລື່ອງຄົນສະໄໝໃໝ່ ຈະເຂົ້າໃຈໄດ້ດີຫລືບໍ່.

ຂັ້ນຕໍ່ໄປແມ່ນຂັ້ນສອງ ຮຽກວ່າດັດແປງ ແຕ່ງສຳນວນ " The Adaptation " ຂັ້ນນີ້ ປ່ຽນວາດວິທີ ລີລາການຂຽນໄດ້ ເພື່ອໃຫ້ເຂົ້າໃຈງ່າຍ ແຕ່ຫ້າມປ່ຽນຄຳໝາຍ ສາລະເນື້ອໃນໃຈຄວາມເປັນອັນຂາດ ເພາະບໍ່ແມ່ນເຮົາແຕ່ງ ຖ້າເປັນຂອງເຮົາແຕ່ງເອງນັ້ນເປັນອີກເລື່ອງໜຶ່ງ.

ຂ້າພະເຈົ້າໄດ້ຖືຫລັກການດັ່ງກ່າວນີ້ ໃນການປະຣິວັດ ກົດໝາຍບູຮານລາວມາໄດ້ 6 ຄຳພີແລ້ວ ໃນຄຳພີຕໍ່ໄປ ກໍຈະຕ້ອງໃຊ້ຫລັກການນີ້ຢູ່.

ໂຄງການປະຣິວັດກົດໝາຍບູຮານລາວນີ້ ມີກຳເນີດເກີດຂຶ້ນໃນປີ 1991 ໂດຍການອຸບປະຖຳຂອງ ມູນນິທິໂຕໂຍຕາ ເປັນໂຄງການນ້ອຍໆ ແລະ ຂ້າພະເຈົ້າເອງເປັນຫົວໜ້າໂຄງການ ໄດ້ດຳເນີນງານມາແລ້ວເປັນເວລາ 4 ປີ ມີຜົນງານເປັນຮູບປະທຳ ດັ່ງຈະນຳມາສະເໜີຕໍ່ໄປນີ້:

ປຶ້ມທີ່ໄດ້ຄົ້ນຄວ້າສຶກສາຊຳຣະ ແລະ ປະຣິວັດຈັດພິມຮຽບຮ້ອຍແລ້ວ ແລະ ໄດ້ເຜີຍແຜ່ແຈກຢາຍໄປແລ້ວ ມີຄື :

1. ຄຳພີສ້ອຍສາຍຄຳ
2. ຄຳພີທັມມະສາດຫລວງ
3. ຄຳພີສຸວັນນະມຸກຂາ
4. ຄຳພີຣາຊະສາດ

ສ່ວນຄຳພີສັງຄະຫະປະກອນ ກັບຄຳພີໂຄສະຣາດນັ້ນ ຈັດຕົ້ນສະບັບສຳເຫລັດຮຽບຮ້ອຍແລ້ວ ກະກຽມໄວ້ພິມເປັນປີທີ 5 ຫລື ທົວທີ 5 ຂອງໂຄງການ ສ່ວນປີທີ 6 ກະວ່າຈະພິມກ່ຽວກັບ ກົດຫມາຍລັກສະນະພະຍານ ແລະ ລັກສະນະກວ້ານ ຫລື ສານຂອງບູຮານ ຫລືບໍ່ກໍແມ່ນຄຳພີຄະດີໂລກຄະດີທຳ.

ທີ່ກ່າວແບບແບ່ງຮັບແບ່ງສູ້ ເຊັ່ນນີ້ ກໍເພາະວ່າຍັງຫາຕົ້ນສະບັບບໍ່ທັນໄດ້ ອັນນີ້ ເປັນບັນຫາຫນ້າຫນັກໃຈຢູ່ ແຕ່ຈະພະຍາຍາມຫາຕໍ່ໄປຈົນກວ່າຈະຫມົດຫົນທາງແທ້ໆ.

ສ່ວນຄຳພີມູນລະຕັນໄຕ ທີ່ພິມເຜີຍແຜ່ກ່ອນຫມູ່ນັ້ນ ຂ້າພະເຈົ້າໄດ້ກວດແກ້ຊຳຮະ ແລະ ປະຣິວັດພາຍໃຕ້ ໂຄງການຂົ້ນບັນຊີ ຄຳພີໃບລານທົ່ວປະເທດ ແລະ ກໍແມ່ນ ມູນນິທິໂຕໂຍຕາ ເປັນຜູ້ອຸບປະຖຳເຫມືອນກັນ ແຕ່ເປັນຄົນລະໂຄງການ ເປັນໂຄງການໃຫຍ່ ເຊິ່ງໄດ້ສິ້ນສຸດໄປແລ້ວ ຕາມປົກກະຕິ ມູນນິທິທີ່ກ່າວນີ້ ເຂົາຈະໃຫ້ເລີ່ມຕົ້ນພຽງ 3 ປີກ່ອນ ຖ້າໄດ້ຜົນຕາມຄາດຫມາຍກໍຈະໃຫ້ຕໍ່ອີກ 3 ປີ ລວມເປັນ 6 ປີ ອັນນີ້ ແມ່ນລະບຽບການຂອງເຂົາ.

ສ່ວນໂຄງການປະຣິວັດກົດຫມາຍບູຮານລາວ ດຳເນີນການມາແລ້ວ 4 ປີ ມີຜົນງານເປັນຮູບປະທຳດັ່ງກ່າວມາແລ້ວນັ້ນ ຍັງເຫລືອຢູ່ອີກພຽງ 2 ປີ ຈະໄດ້ສືບຕໍ່ແນວໃດ ຂຶ້ນຢູ່ກັບກັມມະການ ຂອງເຂົາເອງຈະພິຈາຣະນາ ເຖິງຢ່າງໃດກໍດີ ເຮົາກໍມີຄວາມພໍໃຈສົມຄວນ ທີ່ໄດ້

ທ້ອນໂຮມກົດຫມາຍບູຮານໄວ້ໄດ້ເກືອບຫມົດ ທີ່ຍັງເຫລືອນັ້ນ ຫວັງວ່າ ຈະໄດ້ຮັບການພິຈາລະນາຕໍ່ໄປ ຂອງອະນຸຊົນຮຸ່ນຫລັງ.

ເຈດຈຳນົງຫວັງອັນແທ້ຈິງຂອງຂ້າພະເຈົ້າ ໃນການດຳເນີນໂຄງການນີ້ ມີດັ່ງນີ້ :

1. ຕ້ອງການທ້ອນໂຮມກົດຫມາຍບູຮານລາວ ອັນເປັນຜົນຜະລິດທາງວຸທິປັນຍາ ຂອງບຸບພະບຸຣຸດລາວ.
2. ຢາກໃຫ້ຄົນຮຸ່ນໃຫມ່ໄດ້ສຳຜັດກັບພູມປັນຍາ ຂອງນັກປາດຮຸ່ນເກົ່າ ແລະ ຮັບຮູ້ໃນສັດຈະທຳ.
3. ຢາກສ້າງແນວຄິດໃຫ້ຮູ້ຈັກ ກະຕັນຍູກະຕະເວທີ ຕໍ່ບຸບພະບຸຣຸດຂອງຕົນ.
4. ຕ້ອງການໃຫ້ປຽບທຽບຊັ່ງຊາລະຫວ່າງອັນເກົ່າ ກັບອັນໃຫມ່ແລ້ວເລືອກໃຊ້ເປັນບົດຮຽນ.
5. ຕ້ອງການໃຫ້ທັດສະນະໃຫມ່ກັບທັດສະນະເກົ່າ ຕິດຈອດກັນອັນເປັນມູນເຊື້ອທາງວັດທະນະທຳ.
6. ຕ້ອງການໃຫ້ໃຊ້ເຫດຜົນ ວາງຕົນໃຫ້ເປັນກາງຢ່າງເຫມາະສົມຕໍ່ອັນທີ່ຮຽກວ່າ ເກົ່າ ແລະ ໃຫມ່ ໂດຍໃຊ້ປັນຍາຍານຕັດສິນບໍ່ຄວນໃຊ້ອາຣົມຈິດ ຄິດເອົາງ່າຍໆ.
7. ປະການສຸດທ້າຍຕ້ອງການໃຫ້ເບິ່ງກວ້າງມອງໄກ ໃນບັນຫາ

ຕ່າງໆ ຢ່າງເປັນສັດຈະທຳ ຮູ້ຈັກອະດີດ ປັດຈຸບັນ ແລະ ອະນາຄົດ ແລ້ວຕັດສິນບັນຫາໃນທາງທີ່ຖືກທີ່ຄວນ.

ວັດຖຸປະສົງຈຳນົງຫວັງດັ່ງກ່າວນີ້ ຈະສຳລິດທີ່ຜົນເປັນປະການໃດ ຂ້າພະເຈົ້າໄລ່ຈະນຳທ່ານໄປສຳຜັດກັບຕົວຈິງ ກັບຄຳພີທີ່ກ່າວນາມມາ ເພື່ອທ່ານຈະໄດ້ຕິດຕາມ ພິຈາຣະນາຕີຣາຄາ ດ້ວຍປັນຍາຍານຢ່າງອິດສະຫລະ ເສລີທີ່ສຸດ.

ຍຸກປັດຈຸບັນນີ້ ຊາວໂລກເອົາຕີລາຄາວ່າ ເປັນຍຸກໂລກາພິວັດ (Globalization) ໂລກຂອງເຮົາແຄບເຂົ້າ ຍ້ອນເຕັກນິກວິທະຍາສາດກ້າວໄກ ການຄົມນາຄົມກ້າວຫນ້າວ່ອງໄວ ສາມາດໄປຮອບໂລກໄດ້ໃນບໍ່ເທົ່າໃດຊົ່ວໂມງ.

ດັ່ງນັ້ນ ຈຶ່ງບໍ່ມີປະເທດຊາດໃດ ຈະດຳຣົງຄົງຕົວຢູ່ໄດ້ ໂດຍໂດດດ່ຽວ ປາດສະຈາກການພົວພັນກັບປະເທດອື່ນ ຊາດອື່ນ ອັນການພົວພັນນັ້ນ ຖ້າຫາກຂາດຄວາມຣະມັດຣະວັງ ບໍ່ມີຫລັກຫມັ້ນ ປະລະມູນເຊື້ອວັດທະນະທຳຂອງຊາດ ອາດມີຄວາມເສຍຫາຍເປັນອັນຕະຣາຍຕໍ່ຄວາມເປັນເຈົ້າຕົນເອງ ຖືກກືນເອົາໂດຍບໍ່ຮູ້ຕົວ ເພາະການພົວພັນນັ້ນມີທັງດ້ານຕັ້ງຫນ້າ ແລະ ດ້ານທໍ້ຖອຍ ຄືມີທັງໄດ້ ແລະ ເສຍ ມີທັງຄຸນ ແລະ ໂທດ ທີ່ນັບວ່າງ່າຍ ແລະ ໄວວາ ແມ່ນດ້ານວັດທະນະທຳ. ໃນປັດຈຸບັນນີ້ ຖ້າເຮົາຊາວສັງເກດຈະເຫັນຜົນສະທ້ອນຂອງມັນແລ້ວ

(Consequence) ທັງໃນດ້ານບວກ ແລະ ລົບ. ການຈະຫລົບຫລີກການພົວພັນບໍ່ແມ່ນວິທີທີ່ສະຫລາດ ເພາະບໍ່ສາມາດທຳໄດ້ ຍ້ອນວ່າແມ່ນຍຸກຂອງມັນ. ຫລັກສຳຄັນແມ່ນພ້ອມທີ່ຈະຜະເຊີນໜ້າ ດ້ວຍຄວາມກ້າຫານ ແລະ ມີຫລັກການ ແລະ ຫລັກໝັ້ນຈະແຈ້ງ ໂດຍຍຶດໝັ້ນບ່ອນຢືນ ແລະ ຈຸດພິເສດອັນເປັນມູນເຊື້ອມາແຕ່ບຸບພະຊົນ; ຄືເອກລັກທາງວັດທະນະທຳຂອງຊາດ ໃຫ້ຖືກຕ້ອງເໝາະສົມ ຕາມສະພາບເປັນຈິງທັງໃນດ້ານທັດສະນະ ແລະ ພຶດຕິກຳຕົວຈິງ.

ເພື່ອຕອບສະໜອງຕໍ່ຄວາມຈຳເປັນ ແລະ ຄວາມຕ້ອງການໃນບາງສ່ວນ ຄວນເບິ່ງຄືນວັດທະນະທຳປະຈຳຊາດ ດ້ານຕ່າງໆ ເພື່ອສະທ້ອນແສງແຍງໃຫ້ເຫັນຕົນເອງ ໃນທີ່ນີ້ ຢາກຊີ້ໃຫ້ເຫັນຈາກເອກະສານບູຮານ ດ້ານກົດໝາຍເກົ່າກ່ອນ ເຊັ່ນ ສຳນວນຄຳເວົ້າໜ້າພິຈາລະນາວ່າ :

" ຄັນວ່າເປັນພໍ່ບ້ານພໍ່ເມືອງ ໃຫ້ພິຈາລະນາຮັກສາ ອຸບປະຈານໄຮ່ ອຸບປະຈານນາ ແລະ ອຸບປະຈານບ້ານ ຢ້ານວ່າ ມີອ້າລັກຂະໂມຍໂຈນຜູ້ຮ້າຍຊາຍຊົ່ວ ເຂົ້າມາອ້າງົວ ຄວາຍ ແລະ ເຂົ້າມາຟັນໄມ້ລົກກົກເຮືອລັກບໍ່ເກືອ ແລະ ຕົ້ນເຜີ້ງ " ...

" ງົວລາກຫວາຍ ຄວາຍລາກຄາວ ບາວລາກສາວ ຂ້າໜີເຈົ້າບ່າວໜີນາຍ ຊ້າງຕາຍຂະໜາຍຫລອນ ເອົາມາລັກເມື່ອນອນຫລອນເມື່ອຫລັບ ເອົາໄດ້ເຂົ້າມາລວງລັດຕັດແດນ " ...

" ງົວຄວາຍກິນອ້ອຍ ເດັກນ້ອຍຜິດກັນ ຜິດເທື່ອໜຶ່ງໃຫ້ວ່າ ຜິດສາມທ່າ ໃຫ້ບອກໃຫ້ສອນ ຫລອນນ້ຳລອດຝາຍ ຄວາຍລອດຄອກ ລູກເຕົ້າບອກບໍ່ຟັງຄວາມພໍ່ແມ່ ໃຫ້ເຖົ້າແກ່ຊ່ອຍພິຈາລະນາ " ...

" ຊຸບໃນດິນສິບໃນນ້ຳ ອຸບປະຈານໄຮ່ 10 ວາ ອຸບປະຈານນາ 15 ວາ ອຸບປະຈານບ້ານສອງຊົ່ວຖີ້ມກ້ອນດິນຕົກ ອຸບປະຈານວັດກົດໃນເຂດອົງກົງອັນທະສີມາ ".

ຖ້ອຍຄຳສຳນວນເຫລົ່ານີ້ ມີຄຳໝາຍເລິກ ຄວນຄິດທວ່ຳຮ່ຳຮອນ ເພາະແຝງໄວ້ເຊິ່ງບັນຫາສັງຄົມນານາປະການ ທີ່ຍົກມານີ້ ມີຢູ່ໃນກົດໝາຍເກົ່າ ທີ່ຈະເອົາມາເລົ່າຫຍໍ້ໆ ພໍເປັນເຄົ້າໆ ດັ່ງຕໍ່ໄປນີ້ :

## * ຄຳພີມູລະຕັນໄຕ

ເປັນຄຳພີໃຫຍ່ ແລະ ເກົ່າແກ່ ບໍ່ຊາບແນ່ວ່າ ສ້າງຂຶ້ນໃນຍຸກໃດ ຮູ້ໄດ້ວ່າເກົ່າຍ້ອນຖ້ອຍຄຳ ແລະ ສຳນວນພາສາ ມີທັງໝົດ 10 ຜູກ ໄດ້ກວດແກ້ຊຳຮະ ແລະ ປະຣິວັດພິມແລ້ວ ເປັນຫົວໜາປະມານ 250-300 ໜ້າ ເນື້ອໃນສາຣະ ມີລັກສະນະຫລັກໃຫຍ່ 3 ປະການ ຄື : ເປັນຕຳນານນິທານ, ເປັນປິດສະໜາ ແລະ ເປັນຕົວຢ່າງພິຈາລະນາ ອັດຖະຄະດີ (Ancient Verdict) ເວົ້າງ່າຍໆ ແມ່ນຣັຖະສາດບູຮານລາວ ມີຫລາຍເລື່ອງໜ້າສົນໃຈສຶກສາ.

## * ຄຳພີພະທັມມະສາດຫລວງ

ເປັນຄຳພີໃຫຍ່ເຊັ່ນດຽວກັນ ເປັນກົດໝາຍຫລັກ ມີເຖິງ 431 ມາດຕາ ບອກວ່າມີຢູ່ 7 ຜູກ ແຕ່ເປັນທີ່ໜ້າເສຍດາຍ ເພາະຫາຍໄປແລ້ວຜູກໜຶ່ງ ຄືຜູກ 6 ເນື້ອໃນກົດໝາຍຫາຍໄປ 60 ມາດຕາ ຢູ່ຫ້ອງປານາຕິບາດ ຂ້າພະເຈົ້າພະຍາຍາມຊອກມັດອື່ນໆ ມາແກ້ໄຂ ໃນເກືອບທົ່ວປະເທດ ແຕ່ກໍບໍ່ພົບເຫັນ ໄດ້ສະບັບໜຶ່ງຈາກຊຽງໃໝ່ ເອົາພິມເປັນອັກສອນໄທ ຂາດໄປ 60 ມາດຕາເຊັ່ນດຽວກັນ ແລະ ບອກໄວ້ດ້ວຍວ່າ ໄດ້ຕົ້ນສະບັບໄປຈາກລາວ ດັ່ງນັ້ນ ຈຶ່ງສັນນິດຖານວ່າ ຄືງຫາຍໄປນານແລ້ວ ຍັງເຫລືອຢູ່ 6 ຜູກ ຂ້າພະເຈົ້າປະຣິວັດເອົາຕາມຕົ້ນສະບັບ ບໍ່ມີຫຍັງປ່ຽນແປງ ນອກຈາກແກ້ຄຳຜິດ ແລະ ຈັດໜ້າໃໝ່ ໃຫ້ອ່ານງ່າຍເທົ່ານັ້ນ.

ກົດໝາຍຄຳພີນີ້ ມີຄວາມສຳຄັນຫລາຍ ເພາະເປັນກົດໝາຍຫລັກ ມີລັກສະນະພິເສດ ເຫດວ່າອາໄສສິນຫ້າ ຫລື ປັນຈະສີລາ ເປັນຫລັກໃນການຈັດໝວດໝູ່ ໂດຍແບ່ງເປັນຫ້ອງໆ ຮຽກວ່າ:

ຫ້ອງ ປານາຕິບາດ

ຫ້ອງ ອະທິນນາທານ

ຫ້ອງ ກາເມສຸມິດສາຈານ

ຫ້ອງ ມຸສາວາດ

ຫ້ອງ ສຸຮາເມລະຍະມັດຊະ

* ຫ້ອງປານາຕິບາດ ເວົ້າເຖິງເລື່ອງຂ້າຟັນຣັນແທງ ທຸບຕີ ວິວາດຜິດຖຽງ ທຳຮ້າຍຮ່າງກາຍ ແລະ ທຳລາຍຊີວິດ ມະນຸດ ແລະ ສັດ.
* ຫ້ອງອະທິນນາທານ ເວົ້າເຖິງ ການລັກຂະໂມຍ ການຫລັກ ການໂລບ ສໍ້ສິນປຸ້ນສະດົມ ຊັບສິນເງິນຄຳ ພັດສະດຸ ສິ່ງຂອງຕ່າງໆ.
* ຫ້ອງກາເມສຸມິດສາຈານ ເວົ້າເຖິງການຜິດປະເວນີ ການ ຫລິ້ນຊູ້ສູ່ສາວ ການສ້າງຄອບຄົວແກວດອງ ຂອງຫມັ້ນ ຮິດຜົວຄອງເມຍ ການອິ່ນອື່ນຊຳເຮົາ ການປະຮ້າງ ແລະ ແບ່ງປັນສິນສົມຣິດ ເປັນຕົ້ນ.
* ຫ້ອງມຸສາວາດ ເວົ້າເຖິງການຕົວະ ລ່າຍ ພາງ ສໍ້ສິນສໍ່ສຽດ, ດ່າວ່າຫຍາບຊ້າ ລອກລວງ ແລະ ຕົວະຍົວະ ເປັນຕົ້ນ.
* ຫ້ອງສຸຣາເມລະຍະມັດຊະ ເວົ້າເຖິງການກິນເຫລົ້າເມົາຢາ ສິ່ງເບື່ອເມົາ ເສບຕິດຕ່າງໆ ອັນເປັນທີ່ຕັ້ງ ແຫ່ງຄວາມ ປະຫມາດ ຂາດສະຕິເປັນຕົ້ນ.

## * ຄຳພີສ້ອຍສາຍຄຳ

ເປັນຄຳພີສັ້ນປະມານ 30 ກວ່າລານ ແຕ່ມີເນື້ອໃນສາຣະ ແບບ ຫລັກການ ອີງໃສ່ພະປາຕິໂມກ 227 ສິກຂາບົດ ເປັນພື້ນຖານໃນການ

ປຽບທຽບ ແລະ ບັນຍັດລະອຽດ ກ່ຽວກັບຈະຣິຍະທຳສັງຄົມ ຄອບຄົວ ເປັນສ່ວນໃຫຍ່ ແລະ ທີ່ນັບວ່າມີລັກສະນະພິເສດ ຄືບອກຢ່າງຈະແຈ້ງວ່າ ແຕ່ງໃນຣັຊການຂອງພະເຈົ້າໂພທິສາຣາດ ປະມານ ສະຕະວັດທີ 14.

## * ຄຳພີສຸວັນນະມຸກຂາ

ເປັນລັກສະນະປະມວນກົດໝາຍບູຮານລາວ ( The Code of Lao Customary Law ) ກ່າວເຖິງຫລັກການໃຫຍ່ໆ ໂດຍທົ່ວໄປ ພ້ອມທັງນຳເອົາວັດຖຸນິທານ ແລະ ຕຳນານຕ່າງໆ ຈາກຊາດົກ ພຸດທະສາດສະໜາ ນິທານນາງຕັນໄຕ ແລະ ນິທານເວຕານ ອັນເປັນວັນນະຄະດີຊັ້ນຍອດ ຂອງອິນເດຍບູຮານ ມາປະກອບຄຳອະທິບາຍ.

## * ຣາຊະສາດ

ເປັນຄຳພີຂະໜາດກາງ ເວົ້າເຖິງຈະຣິຍະທຳສຳລັບເຈົ້າແຜ່ນດິນ ເປັນສ່ວນຫລາຍ ເຊັ່ນ ທົດສະຣາຊະທຳ, ໂລກະທຳ, ອະຄະຕິທຳ ແລະ ຮີດບ້ານຄອງເມືອງ ພ້ອມທັງຫລັກພິຈາລະອັດຖະຄະດີ ແລະ ຫລັກການ ປົກຄອງເປັນຕົ້ນ ມຸ້ງໜັກໃສ່ຜູ້ໃຫຍ່ທີ່ກຳອຳນາດໃນມື ໃຫ້ມີມະໂນທຳ ປະຈຳໃຈໃນການປົກຄອງບ້ານເມືອງ ບໍ່ຄວນໃຊ້ອຳນາດ ໃນທາງຜິດ ສິນທຳ ນຳໃຊ້ຣາຊະຊັບ ແລະ ຊັບສິນສ່ວນລວມ ເພື່ອທຸເລົາບັນເທົາທຸກ ແລະ ສົ່ງເສີມບຳຣຸງສຸກປະຊາຊົນພົນລະເມືອງ ແລະ ຄວນເປັນ ຜູ້ປະກອບດ້ວຍເມດຕາທຳ ມຸທຸອອນຫວານ ເປັນຕົ້ນ.

## * ຄຳພີສັງຄະຫະປະກອນ

ເປັນຄຳພີຂະໜາດກາງ ມີຢູ່ 4 ຜູກ ຢາກໜັກໄປທາງດ້ານວິໄນສົງເປັນສ່ວນຫລາຍ ແຕ່ກໍໄດ້ສົມທຽບ ກັບກົດໝາຍບ້ານເມືອງ ນຳຄຳພີນີ້ ມັກຍົກເອົາຈຸດເດັ່ນທີ່ເປັນບັນຫາໃນທາງພະວິໄນ ແລະ ໃນແງ່ກົດໝາຍມາສາທະຍາຍ ແລະ ຈຳແນກໂດຍອາໄສ ວິນະຍະປິດົກເປັນເກນ ນອກຈາກນີ້ ຍັງມີວິນະຍະກົດຕ່າງໆ ແລະ ບອກໄວ້ດ້ວຍວ່າ ຣາຊະຄູພູຊວງ ເປັນຜູ້ແຕ່ງໄວ້ໃຫ້ເປັນຕຳຣາຫລວງ ແຕ່ເປັນທີ່ໜ້າເສຍໃຈ ທີ່ເຮົາບໍ່ສາມາດຊາບໄດ້ວ່າ ເປັນຣາຊະຄູຢູ່ເມືອງໃດ ແລະ ຣາຊະຄູຂອງຣັຊະການໃດ ຂ້າພະເຈົ້າພຽງແຕ່ໄດ້ສັນນິດຖານວ່າ ຄົງເປັນ ຣາຊະຄູເມືອງຊຽງທອງ ແຕ່ບໍ່ອາດບອກໄດ້ວ່າ ໃນຣັຊະການໃດ ຫວັງວ່າຈະຄົ້ນຄວ້າຫາຂໍ້ມູນອື່ນໆຕື່ມອີກ.

## * ຄຳພີໂຄສະຣາດ ຫລື ໂພສະຣາດ

ຄຳພີນີ້ຕ່າງໝູ່ ເພາະຈານເປັນອັກສອນລາວ ຫລື ໜັງສືໄທນ້ອຍແບບບູຮານ ບໍ່ແມ່ນໜັງສືທັມ ເໝືອນຄຳພີອື່ນໆ ສຳນວນແຕ່ງເປັນຄຳກອນ ສ່ວນຫລາຍແມ່ນເວົ້າເລື່ອງພະຍານປະເພດຕ່າງໆ ແລະ ຊີ້ແຈງກ່ຽວກັບ ຄະດີທີ່ຄວນຮັບຟ້ອງ ຫລືບໍ່ຄວນຮັບຟ້ອງເປັນຕົ້ນ ຕອນສຸດທ້າຍມີກົດໝາຍລັກສະນະຂ້າທາດ ແລະ ກົດໝາຍການຄອບຄອງ ແລະ ກັມມະສິດທີ່ດິນ ຢ່າງລະປະມານ 10 ກວ່າມາດຕາ.

ນອກຈາກຄຳພີທີ່ກ່າວມາ ແລະ ໄດ້ອາດພາບພໍໃຫ້ເຫັນລາງໆ ດັ່ງເລົ່າມານີ້ແລ້ວ ຂ້າພະເຈົ້າຍັງບໍ່ທັນໄດ້ ຕົ້ນສະບັບໃບລານ ຈຶ່ງບໍ່ຢາກຈະວິຈານ ຈະໄດ້ພະຍາຍາມຄົ້ນຫາຕໍ່ໄປ. ຄິດວ່າຍັງຄົງມີຢູ່ອີກສ່ວນປະເພດ ຫຍິບຫຍ່ອຍເລັກນ້ອຍ ສ່ວນຫລາຍເປັນໜັງສືກ້ອມນັ້ນ ມີຫລາຍຢູ່ ແລະ ກໍມີຫລາຍເລື່ອງ ຫລາຍສຳນວນແຕກຕ່າງກັນ ແລະ ຊ້ຳກັນ ບາງທີ່ບໍ່ມີຮອດຊື່ ສົມກັບຄຳໂຕງໂຕຍທີ່ວ່າ " ໜັງສືກ້ອມ ຕ່າງຄົນຕ່າງມີ ກ້ອນຂີ້ຊີ ກ້ອນນ້ອຍ ກ້ອນໃຫຍ່ " ສຳນັກໃດແທ້ ຫລືທຣມ ຍາກທີ່ຈະວິໃຈ ສະນັ້ນ ຜູ້ໃດໄດ້ອ່ານຢ່າດ່ວນສະຫລຸບຕີລາຄາ ເພາະວ່າເປັນ ສຳນວນຫລາຍເກຈິອາຈານ ມີເປົ້າໝາຍຕ່າງກັນ ຄວນສອບທານໃຫ້ລຶກແນ່.

ການທີ່ຂ້າພະເຈົ້ານຳເອົາກົດໝາຍເກົ່າບູຮານ ອັນເປັນກົດໝາຍພາຍໃຕ້ລະບອບສັກດີນາ ໂດຍສະເພາະລະບອບສັກດີນາຍາສິດທິຣາດ ( Absolute Monachy ) ມາສະເໜີນີ້ ອາດມີບາງທ່ານເຂົ້າໃຈວ່າເປັນການຖອຍຫລັງໄປຫາຍຸກລ້າສະໄໝ ໄຮ້ຄວາມສີວິໄລ ຄວນຈະກ້າວໄປຂ້າງໜ້າຫາຍຸກໂລກາພິວັດ ( Globalization ) ຈະໄດ້ທັນສະໄໝນຳໝູ່ ຂ້າພະເຈົ້າຂໍເວົ້າໂດຍຄວາມຈິງໃຈວ່າ ບໍ່ມີເຈດຕະນາເຊັ່ນວ່ານັ້ນເລີຍ ໃນຈິດສຳນຶກແທ້ຈິງ ພຽງແຕ່ຢາກໃຫ້ສຳນຶກໄວ້ວ່າ ການຈະກ້າວໄປຂ້າງໜ້າຢ່າງໝັ້ນຄົງ ແລະ ຮັບປະກັນໄດ້ ຄວນຈະຮູ້ມູນເຊື້ອເບື້ອງຫລັງຂອງຕົນ ເພື່ອເປັນແປ້ນຢັນອັນສຳຄັນໄວ້ກ່ອນ

ເພາະຈະໄປຫນ້າຕ້ອງເບິ່ງຫລັງ, ບໍ່ດັ່ງນັ້ນວິຊາປະຫວັດສາດ ຈະມີຄຳຫມາຍແນວໃດ. ຢ່າງໃດກໍຕາມ ເພື່ອຄວາມສະບາຍໃຈ ໃນເມື່ອທ່ານອ່ານກົດຫມາຍບູຮານລາວ ຂໍໃຫ້ທຳຄວາມເຂົ້າໃຈພຽງວ່າທ່ານກຳລັງອ່ານປະຫວັດສາດກົດຫມາຍກໍແລ້ວກັນ ຜົນປະໂຫຍດຈະມີແນວໃດ ແມ່ນທ່ານເອງເປັນຜູ້ຕັດສິນ.

ແມ່ນແທ້ ສິ່ງເຫລົ່ານີ້ແມ່ນຂອງເກົ່າ ບາງຢ່າງຫລ້າສະໄຫມ ບາງຢ່າງຍັງໃຊ້ໄດ້ດີຢູ່ ຖ້າຮູ້ຈັກເລືອກເຟັ້ນ ດັ່ງນັ້ນ ເຮົາບໍ່ຄວນເບິ່ງໃນແງ່ແຕ່ຂອງເກົ່າ ຫລືຂອງໃຫມ່ ຄວນເບິ່ງໃນສາຣະອັນແທ້ຈິງຂອງມັນ ຈະເປັນສັດຈະທຳຫລາຍກວ່າ ເພາະສິ່ງທີ່ດີມີປະໂຫຍດບໍ່ໄດ້ຢູ່ທີ່ເກົ່າ ຫລືໃຫມ່ ຫາກຢູ່ທີ່ແກ່ນແທ້ ແລະ ສາຣະປະໂຫຍດຂອງມັນເອງເທົ່ານັ້ນ.

ອີກປະການຫນຶ່ງ ຄຸນຄ່າຂອງມັນ ກໍບໍ່ແມ່ນວ່າມັນຈະຕີລາຄາມັນເອງເປັນ ຫາກແຕ່ແມ່ນຜູ້ຮູ້ ຫລື ຜູ້ຊ່ຽວຊານ ດ້ານວິຊາສະເພາະເຂົາຈະກຳນົດຕາມກົດເກນ. ໃນທຳນອງດຽວກັນກັບ ແກ້ວແຫວນເງິນຄຳ ເຄື່ອງເອ້ຢ້ອງ ຫລື ອັນຍະມະນີທີ່ມີຄ່າມາກ ກໍບໍ່ທ່ອນໄດ້ຕີລາຄາຂອງມັນເອງ ຫາກແມ່ນນັກການຜູ້ຊ່ຽວຊານດ້ານນັ້ນໆເປັນຜູ້ຕີລາຄາ ເພາະເຂົາຮູ້ວ່າ ອັນໃດແທ້ ແລະ ອັນໃດທຽມອັນນີ້ແຫລະ ມີໄນຍະໂດຍປະການສັນໃດ ກົດຫມາຍເກົ່າບູຮານ ທີ່ກ່າວຂວັນກັນຢູ່ນີ້ ກໍມີໄນຍະສັນນັ້ນ ມັນຈະບໍ່ຂຶ້ນຢູ່ກັບຄວາມມັກຄວາມຊອບໃຈ

ຫລື ຄວາມລັງກຽດຄຽດຊັງ ຂອງໃຜຜູ້ໃດເລີຍ ແຕ່ມັນຈະຊົງໄວ້ເຊິ່ງຄຸນຄ່າໃນຕົວຂອງມັນເອງ ໃຜຈະຊົມເຊີຍຍົກຍໍປັ້ນ ຫລື ໃຜຈະເບິ່ງຕໍ່າຢຽດຫຍາມຄວາມສຳຄັນຂອງມັນ ກໍມີສໍ່າເກົ່າ ບໍ່ມີອັນປ່ຽນແປງ.

ຫັນເຂົ້າມາຫາຄົນເຮົາ ບູຮານເພິ່ນກ່າວໄວ້ຫນ້າຄິດ ເພິ່ນວ່າຄ້ອງກອງກໍດີ ເຄື່ອງດົນຕີດີດສີຕີເປົ່າກໍຕາມ ຢູ່ດີໆ ຫາກບໍ່ມີຄົນຫລິ້ນຄົນຕີເກີດດັງຂຶ້ນມາເອງ ເພິ່ນວ່າເຄື່ອງເຫລົ່ານັ້ນແມ່ນເຂັດຂວາງຫລາຍດັ່ງດຽວກັບຄົນ ທີ່ຂາດທີຣິໂອດຕັບປະ ມັກໂອ້ອວດຍ້ອງຍໍ ທໍານອງເອົ້າກະທໍຍໍຕົນເອງ ຢາກເດັ່ນຢາກດັງ ເກີນເຫດຜົນທີ່ຕົນມີ ຕໍ່ສູ້ທວງຖາມເອົາຜົນງານໂດຍປາດສະຈາກເຫດຜົນທີ່ຊອບທີ່ຄວນ ຈະເຂັດຂວາງຫລືບໍ່ ຂໍໃຫ້ພິຈາລະນາໃນທີ່ນີ້ ຂໍບໍ່ມີຄວາມເຫັນເພາະນອກປະເດັນກົດຫມາຍບູຮານລາວ.

ອີກປະການຫນຶ່ງ ກ່ຽວກັບເລື່ອງນີ້ ທີ່ຢາກກ່າວ ແມ່ນກາລະເວລາຫລື ຍຸກສະໄຫມ ກົດຫມາຍບູຮານລາວ ມັນກໍບອກຢູ່ໃນຕົວແລ້ວວ່າເປັນຂອງເກົ່າ ກາຍຍຸກກາຍສະໄຫມມາແລ້ວ ສະພາບການໃນຍຸກນັ້ນກັບຍຸກນີ້ ມີອັນແຕກຕ່າງກັນມາກຫລາຍ ໂລກະທັດຂອງຄົນຍຸກນັ້ນກັບຍຸກນີ້ ກໍແຕກຕ່າງກັນ ດັ່ງນັ້ນ ຫາກເຮົາຈະຕີລາຄາ ກົດຫມາຍບູຮານໂດຍເອົາປັດຈຸບັນໄປຍັດໃສ່ອະດີດ ກໍຈະຂາດຄວາມຍຸຕິທັມໄປ ເພາະຄົນລະຍຸກສະໄຫມ ສະພາວະການ ແລະ ສິ່ງແວດລ້ອມແຕກຕ່າງກັນ. ອະດີດ, ປັດຈຸບັນ ແລະ ອະນາຄົດ ກ່ຽວເນື່ອງກັນກໍຈິງ ຖ້າບໍ່ມີອະດີດ

ກໍຄືງບໍ່ມີປັດຈຸບັນ ຖ້າບໍ່ມີປັດຈຸບັນ ກໍຄືງບໍ່ມີອະນາຄົດ ແຕ່ເນື່ອງຈາກຫລັກການປ່ຽນແປງ ຄືຄວາມບໍ່ທ່ຽງ ຫລື ຫລັກອະນິດຈັງ ສະພາວະການທັງມວນ ລວມທັງວັດຖຸ ແລະ ຈິດໃຈ ກໍຍ່ອມປ່ຽນແປງໄປຕາມການເວລາ ຈະມາເກນໃຫ້ອະດີດ ຄືກັບປັດຈຸບັນທຸກປະການ ຫລືໃຫ້ປັດຈຸບັນຄືກັບອະນາຄົດທັງຫມົດ ຍ່ອມເປັນໄປບໍ່ໄດ້.

ດັ່ງນັ້ນ ເຮົາຈະເຫັນວ່າມີຫລາຍອັນໃນກົດຫມາຍບູຮານລາວຄົນສະໄຫມນີ້ ຍອມຮັບບໍ່ໄດ້ ຕົວຢ່າງງ່າຍໆ ເຊັ່ນ ເລື່ອງຂ້າທາດເລື່ອງສິດເສຣີພາບ ເຊິ່ງຂັດກັບສິດມະນຸດ ແຕ່ເມື່ອເຮົາເອົາການເວລາຫລື ຍຸກສະໄຫມ ເຂົ້າມາແກ້ໄຂຈະເຫັນໄດ້ວ່າ ມັນຄົນລະຍຸກສະໄຫມຄວາມຮັບຮູ້ຕໍ່ບັນຫາຕ່າງໆ ແຕກຕ່າງກັນ ການພັດທະນາມີລະດັບແຕກຕ່າງກັນ ຈຶ່ງບໍ່ຄວນຖືເປັນເລື່ອງຕຳຫນິຕິຕຽນ.

ເຮົາຄວນເລືອກເອົາແຕ່ສາຣະສຳຄັນທີ່ຍັງທັນສະໄຫມຢູ່ ເພາະວ່າມີຫລາຍຢ່າງຫລາຍປະການ ທີ່ບໍ່ຂຶ້ນກັບກາລະສະໄຫມ ໃຊ້ໄດ້ທຸກກາລະເຊັ່ນ ຫລັກການພິຈາລະນາຄວາມຕາມກາລະເທສະ ວັດຖຸລາຄາ ແລະໄນຍະຕ່າງໆ ເປັນຕົ້ນ.

ໃນທີ່ນີ້ ຂໍຍົກເອົາຫມາກຫົວໃຈຂອງຣັດຖະສາດ ໃນກົດຫມາຍບູຮານອັນຫນຶ່ງ ມາສະເຫນີເພື່ອພິຈາລະນາ ຕີລາຄາເບິ່ງຕາມທັດສະນະອັນສົມເຫດສົມຜົນຂອງຄົນປັດຈຸບັນ ດັ່ງຕໍ່ໄປນີ້ :

"ອຸກກັຕເຖ ສຸຣະມິດສັນຕິ ນັນຕີສຸ ອະກະຕຸພພະລັງ
ປີຍັມຈະ ອັນນະປານັມທິ ອັຕເຖກິຈເຈຈະປັນດິຕັງ"

ດັ່ງນີ້ ແປເປັນໃຈຄວາມວ່າ : " ຍາມເສີກຕ້ອງການຄົນຫານ ຍາມເປີກສາການ ຕ້ອງການຄົນ ບໍ່ເວົ້າໂລເລ ເວລາມີຂອງກິນແຊບ ຕ້ອງການຄົນຮັກຄົນແພງ ຍາມສະແດງວອຣກການສຳຄັນ ຕ້ອງການນັກປາດ " ຈາກຄາຖາບົດນີ້ ຊີ້ໃຫ້ເຫັນວ່າ ນັກການປົກຄອງທີ່ສະຫລາດ ຕ້ອງຮູ້ຈັກໃຊ້ຄົນໃຫ້ຖືກຕ້ອງເຫມາະສົມກັບວິຊາສະເພາະ ຄວາມຮູ້ ຄວາມສາມາດ ແລະ ຄຸນທັມປະຈຳໃຈ ຖ້າໃຊ້ຜິດຈະຄິດເສຍໃຈພາຍຫລັງ ເຂັມເພິ່ນໃຊ້ຫຍິບຜ້າ ຂວານເພິ່ນໃຊ້ຖາກໄມ້ຟັນໄມ້ ສົມມຸດວ່າ ຖ້າຫາກມີຜູ້ໃດ ອຸດຕະຣິ ເອົາເຂັມໄປໃຊ້ຖາກໄມ້ຟັນໄມ້ ແລະ ເອົາຂວານໄປໃຊ້ຫຍິບຜ້າ ຄັກແນ່ ບໍ່ມີທາງທີ່ຈະສຳເຫລັດໄດ້ ອັນນັ້ນ ຈະວ່າເປັນຄວາມຜິດຂອງໃຜ ເປັນຄວາມຜິດຂອງຂວານ ຫລື ເຂັມ ຫລືຈະວ່າ ເປັນຄວາມຜິດຂອງຄົນຜູ້ໃຊ້ ສາມັນຍະສຳນຶກ ຈະຕັດສິນໄດ້ເອງ.

ຫມວກສຳລັບໃສ່ຫົວ ເກີບສຳລັບໃສ່ຕີນ ຖ້າຜິດບ່ອນຈະເປັນແນວໃດ ຈະມີຫຍັງເກີດຂຶ້ນ ໃຜໆກໍຄົງຮູ້ ອີກປະການຫນຶ່ງ ຖ້າຫມວກກັບຫົວ ບໍ່ພໍດີກັນ ຫລື ເກີບກັບຕີນ ໃສ່ກັນບໍ່ໄດ້ ຄວນຈະແປງອັນໃດ ຈະແປງຫມວກໃສ່ຫົວ ຫລື ຈະແປງຫົວໃສ່ຫມວກ, ຈະແປງຕີນໃສ່ເກີບ

ຫລື ຈະແປງເກີບໃສ່ຕີນ ທັງຫມົດທີ່ກ່າວນີ້ ມີສາຣະເນື້ອໃນ ຈາກ ກົດຫມາຍບູຮານລາວ ຂ້າພະເຈົ້ານຳມາວາດມະໂນພາບ ເພື່ອເປັນ ອຸທາຫອນໃຫ້ທ່ານຜູ້ຊ່າງຄິດ ໄດ້ຮ່ຳຮອນ ຮ່ອນເອົາເອງ ວ່າພູມວຸທິ ປັນຍາຂອງບຸບພະຊົນລາວ ຄວນຈະຊົມເຊີຍ ຫລືໃດ ປະການໃດ ?

**ສຳລິດ ບົວສີສະຫວັດ**

ໂຄງການປະຣິວັດ ກົດຫມາຍບູຮານລາວ.

5 / 10 / 1995

# ສ້ອຍສາຍຄຳ

ສຸວິຣະຖະ ມະຫາອຸປາລີເຖຣະເຈົ້າ ຍົກຍັງອະພິທັມມາ 7 ຄຳພີ ອອກມາເທດສະໜາປານະສັດທັງຫລາຍແລ ໂສຕຸຊະນະເຈົ້າທັງຫລາຍແລ ໂຍຄາວະຈະຣະເຈົ້າ ອັນຈັກເອົາຕົນຂ້າມນ້ຳອະມຸດຕະມະຫານະຄອນ ຈິ່ງຟັງຄຳສອນແຫ່ງພະຕະຖາຄະຕະ ອັນມະຫາອຸປາລີເຖຣະເຈົ້າ ກ່າວແຕ່ພາຍຫລັງນີ້ເທີ້ນ.

ບັດນີ້ ຈັກກ່າວປະຣາຊິກພິກຂຸ ຜ່າຍຈາກສາດສະໜາພະພຸດທະເຈົ້າ ມີ 4 ປະການແລ ຄືວ່າ ເມຖຸນັງທັມມັງປະຣາຊິກ 1 ອະທິນນັງໄຖຍະປະຣາຊິກ 2 ສັນຈິດຈະມະນຸດສະວິຄະຫັງ ປະຣາຊິກ 3 ອຸດຕະຣິມະນຸດສະທັມມັງ ປະຣາຊິກ 4 ແລ. ເມື່ອວ່າ ເມຖຸນັງທັມມັງປະຣາຊິກນັ້ນ ຄືວ່າພິກຂຸໄປເສັບເມຖຸນະທຳໃນຍິງ 3 ປະການ ຄື ຍິງຄົນ 1 ຍິງຜີ 1 ຍິງສັດ 1 ໃນຍິງ 3 ປະການນີ້ ມີມັກຄະ 3 ແຫ່ງ ຄືວ່າ ວັດຈະມັກຄະ ແລະ ປັດສາມັກຄະ ມຸກຂະມັກຄະແລ ເມື່ອວ່າ ວັດຈະມັກຄະນັ້ນ ໃນຮູກົ້ນແລ ເມື່ອວ່າ ປັດສາມັກຄະນັ້ນໃນຮູຍ່ຽວແລ ເມື່ອວ່າ ມຸກຂະມັກຄະນັ້ນ ໃນຮູປາກແລ ພິກຂຸກະທຳອົງຄະຊາດແຫ່ງຕົນ ເຂົ້າໄປໃນມັກຄະ 3 ປະການນີ້ ຄືວ່າ ທະວານທັງ 3 ແຫ່ງ ຜູ້ຍິງ 3 ປະການນີ້

ແມ່ນມີປະຫມານທີ່ເສັ້ນຜົມ 1 ກໍເປັນເມຖຸນທຳປະຣາຊິກ ຂາດຄອງພິກຂຸເສຍແລ. ຍິງ 3 ປະການນີ້ ບໍ່ວ່າໃຫຍ່ ບໍ່ວ່ານ້ອຍ ແມ່ນວ່າຈິດເກີດມາຍາມນັ້ນ ອັນມີວັນແດງ ເຫມືອນດັ່ງຕ່ອນຊີ້ນ ນັ້ນກໍດີ ຄັນວ່າພິກຂຸໃຫ້ອົງຄະຊາດແຫ່ງຕົນ ເຂົ້າໄປທວານ 3 ປະການແຫ່ງຍິງນ້ອຍນັ້ນ ມາດຕາວ່າທີ່ເສັ້ນຜົມກໍເປັນປະຣາຊິກແລ ບໍ່ທີ່ແຕ່ຜູ້ຍິງແມ່ນຜູ້ຊາຍກໍດີມີມັກຄະ 2 ແຫ່ງ ຄືວ່າ ຣູກົ້ນ ຣູປາກ 2 ອັນນີ້ ຄັນວ່າ ພິກຂຸກະທຳໃຫ້ອົງຄະຊາດແຫ່ງຕົນ ເຂົ້າໄປໃນມັກຄະທວານ 2 ແຫ່ງ ຜູ້ຊາຍກໍເປັນເມຖຸນທຳປະຣາຊິກ ຂາດຄອງພິກຂຸເສຍແລ. ເມື່ອວ່າ ອະທິນນາປະຣາຊິກນັ້ນ ຄືວ່າພິກຂຸລັກຂອງທ່ານ ອັນມີເງິນ ແລະ ຄຳເປັນເຄົ້າ ລັກຂອງອັນໃດກໍດີ ມີປະຫມານຊີກຄຳ 1 ກໍດີ ເປັນອະທິນນາປະຣາຊິກແລ ພະພຸດທະເຈົ້າເທດສະຫນາວ່າ ປາທັງວາ ປາທະຣະຫັງວາດັ່ງນີ້ແລ ຜືວາຄະທະປະນະມີຄາທີ່ບາດ 1 ເປັນເງິນບາດລຽງກໍດີ ກໍເປັນອະທິນນາປະຣາຊິກຖ້ວນ 2 ຂາດຄອງພິກຂຸແລ. ເມື່ອວ່າ ສັນຈິດຈະມະນຸດສະວິຄະຫັງປະຣາຊິກນັ້ນ ພິກຂຸຂ້າຄົນ ຕັ້ງແຕ່ ພໍຖືພາຄັບພະໃນທ້ອງແມ່ ເປັນນ້ຳແຫລວທີ່ຕອມນ້ຳມັນ ອັນຍ້ອຍຢູ່ປາຍຫາງທວາຍ ອັນຜ່າ 7 ສຽງນັ້ນ ພິກຂຸໃດຂ້າຄົນ ຄືລູກໃນທ້ອງນັ້ນ ເປັນສັນຈິດຈະປະຣາຊິກຖ້ວນ 3 ຂາດຄອງພິກຂຸແລ. ເມື່ອວ່າ ອຸດຕະຣິມະນຸດສະທຳມະປະຣາຊິກນັ້ນໃດ ພິກຂຸກາວວ່າຕົນໄດ້ເຖິງຊານແລ ຄືວ່າໂມກຂະທຳ 8 ແລ ສະມາທິແລ ສະມາປັດຕິແລ ມັກຄະ 4 ຜະລະ 4 ແລ ວ່າດັ່ງນັ້ນ

ເປັນອຸດຕະຣິມະນຸດສະທຳມັງ ປະຣາຊິກຖ້ວນ 4 ຂາດຄອງພິກຂຸ ຈາກສາດສະໜາ ມີ 4 ປະການນີ້ແລ. ຄືວ່າໂທດແຫ່ງປະຣາຊິກ 4 ນີ້ ທົ່ນໂລກຊາວເມືອງວ່າເປັນອັນຄ່າຄໍ 4 ຣ້ອຍແລ ມີຍົດພໍຜ້ານກາງໂທດ 8 ຣ້ອຍ ຜູ້ມີຍົດໃຫຍ່ແທ້ໃຫ້ໃສ່ 16 ຣ້ອຍແລ. ຜີວ່າອ້ອຍທ່ານ 2 ຣ້ອຍ ຜີວ່າກະຣຸນາກັນໃຫ້ຜ່າຖອງ ເປັນອັນຊອບຄອງສິກຂາບົດແລ.

ຈາກປະຖົມປະຣາຊິກຖ້ວນ 1 ພິກຂຸເສບເມຖຸນະທຳມີສຸທິນເຖນເສບເມຍເກົ່າ ກໍເປັນອາທິກຳບໍ່ຄວນເປັນຄອງພິກຂຸ. ທຸຕິຍະປະຣາຊິກຖ້ວນ 2 ນັ້ນ ພິກຂຸລັກ ລັກທຳອິດເປັນອາທິກຳແລ. ຕະຕິຍະປະຣາຊິກ ຖ້ວນ 3 ນັ້ນ ພິກຂຸຂ້າຄົນ ສຸຖຸນະເຖນ ກໍເປັນອາທິກຳແລ. ຈະຕຸດຖະປະຣາຊິກຕົວຖ້ວນ 4 ນັ້ນ ພິກຂຸຢູ່ແທບຫລິ່ງນ້ຳ ມຸດທາກ່າວອຸດຕະຣິມະນຸດສະທຳຕົວບໍ່ເຖິງຊານວ່າຕົວເຖິງຊານ ຕົວບໍ່ແກ່ວ່າຕົວແກ່ນັ້ນ ບໍ່ຄວນເປັນພິກຂຸແລ ເປັນປະຣາຊິກຕົວຖ້ວນ 4 ນັ້ນແລ. ທົ່ນໂລກໃຫ້ໃສ່ອັນຄ່າຄໍແລ ຫົວພັນຫົວຣ້ອຍໃຫ້ໃສ່ 8 ຣ້ອຍ ຂຸນກວານນ້ອຍໃຫຍ່ຫລວງມະຫລັດນາ ຄົນຝູງນີ້ອັນຄ່າຄໍ 6 ຣ້ອຍ ຫລວງເມືອງ ຫລວງແພງນາ ຄົນຝູງນີ້ ອັນຄາຄໍ 5 ຣ້ອຍ ຫລວງຄັງງາ 5 ຣ້ອຍ ຊາວບ້ານຊາວເມືອງນັກບຸນຂຸນລ້າ ອັນຄ່າຄໍ 4 ຣ້ອຍ ຍິງອັນຄາຄໍ 2 ຣ້ອຍ ອ້ອຍຊາຍທ່ານອັນຄ່າຄໍ ຣ້ອຍ 1 ອ້ອຍຍິງອັນຄາຄໍ 5 ບາດ ອັນນີ້ອັນຄາຄໍທັງມວນແລ.

ບັດນີ້ ຈັກກ່າວສັງຄາທິເສດພິກຂຸ 13 ຕົວກ່ອນແລ. ສັນເຈຕະນິກາສຸກກະວິສັດຖິ ພິກຂຸສວ່າງອອກ ຍັງນ້ຳອະສຸຈິຕົນ ເໝືອນໄສຍະສັກກະເຖນເປັນສຸກກະວິສັດຖິ ສັງຄາທິເສດຖ້ວນ 1 ກາຍະສັງສັກຄັງ ພິກຂຸລູບບາຍຍັງກາຍະເນື້ອຕົນແຫ່ງຍິງນັ້ນ ຄືວ່າຖະໜົມອາພອນກໍດີ ປັດນ້ອຍສ້ອຍສັງວານກໍດີ ກາຍະສັງສັກຄັງສັງຄາທິເສດຖ້ວນ 2 ແລ. ທຸດຖຸນລາທິວາຈາທິ ພິກຂຸກ່າວຄຳອັນທຶກໜາເຊິ່ງຜູ້ຍິງມີຕົ້ນວ່າ ອົງຄະຊາດເປັນເລືອດເປັນໜອງ ຄືວ່າຈາເຖິງກົ້ນເຖິງທີ່ນັ້ນ ເປັນທຸດຖຸນລາທິວາຈາທິ ສັງຄາທິເສດຖ້ວນ 3. ອັດຕະກາມະປະຣິຈາຣິຍາ ພິກຂຸກ່າວຍ້ອງຍໍອົງຄະແຫ່ງຜູ້ຍິງ ໃຫ້ເອົາມັກຕົນດັ່ງນັ້ນ ເປັນອັດຕະກາມະປະຣິຈະຣິຍາ ສັງຄາທິເສດຖ້ວນ 4. ສັນຈະຣິຕັງ ພິກຂຸເປັນພໍ່ສື່ ນຳຄຳຜູ້ຊາຍໄປຫາຍິງໃຫ້ຂາເປັນຊູ້ເປັນເມຍກັນ ເປັນສັນຈະຣິຕັງ ສັງຄາທິເສດຖ້ວນ 5. ສັນຍາຈິ, ກຸຕິງພິກຂຸໄປເອົາຂວານ ສິ່ວຊີ ດອມຄົນທັງຫລາຍ ມາສ້າງກຸຕິນັ້ນ ເປັນສັນຍາກຸຕິງ ສັງຄາທິເສດຖ້ວນ 6 ແລ. ມະຫັນລະກັງ, ພິກຂຸສ້າງວິຫານອັນໃຫຍ່ອັນອ້ານລ່ວງຍິ່ງ ປະໝານໃນທີ່ອັນສົງບໍ່ໄດ້ສຳເໜາະ ອັນເປັນກັບດ້ວຍ ອຸບປັດທະຣົບອົນຕາຍອັນໜຶ່ງບໍ່ມີ ປະໝານບໍ່ພໍກຽມວຽນໄດ້ນັ້ນ ເປັນມະຫັນລະກັງ ສັງຄາທິເສດຖ້ວນ 7. ທຸດໂຖພິກຂຸກ່າວຫາພິກຂຸ ອັນເປັນປະຣາຊິກ ອັນຫາເຄົ້າຫາມູນບໍ່ໄດ້ ດັ່ງນັ້ນທູດໂຖ ສັງຄາທິເສດຖ້ວນ 8. ອະໂທ, ພິກຂຸເອົາອັນອື່ນມາເປັນເລດ ເໝືອນດັ່ງພິກຂຸສັບພັກຄີທັງຫລາຍ ກ່າວໃຫ້ເຈົ້າຕິສສະເຖນ

ພິກຂຸສັບພັກຄືນັ້ນ ລົງມາຈາກດອຍຄືດສະກູດເທັນແພະເຊີງກັນ ຈິ່ງເອີ້ນມາເປັນເລດວ່າ ແພະຕົວຜູ້ນັ້ນເປັນເຈົ້າຕິດສະເຖນ ແພະຕົວແມ່ນັ້ນເປັນພິກຂຸນີແລ້ວ ວ່າເຈົ້າຕິດສະເຖນເສບເມຖຸນະທຳ ກັບພິກຂຸນີນັ້ນ ເປັນອະໂຖ-ສັງຄາທິເສດຖ້ວນ 9 ແລ. ເພທາຍະພິກຂຸນ້າງສົງເຫມືອນດັ່ງເທວະທັດນ້າງສົງນັ້ນ ເປັນສັງຄະເພທາຍະສັງຄາທິເສດຖ້ວນ 10. ຕັດເສສັງຄະເພໂທພິກຂຸກັບຕາມຄືວ່າພິກຂຸອັນນ້າງສົງເຫມືອນດັ່ງສັງຄະເພໂທ ເປັນສັງຄາທິເສດຖ້ວນ 11. ພິກຂຸ-ມາອະວະຈຸຕຖະ ພິກຂຸສອນຍາກຄືວ່າ ອຸບປັດຊາກ່າວສັ່ງສອນ ດ້ວຍຄວນແກ່ສິກຂາບົດພະເຈົ້າຕັ້ງໄວ້ນັ້ນ ບໍ່ຖືເອົາເຫມືອນສັນນະເຖຣະເຈົ້າ ພິກຂຸທັງຫລາຍສອນບໍ່ຟັງ ເປັນອະວະຈຸດຖະ ສັງຄາທິເສດຖ້ວນ 12. ພິກຂຸປະເນ-ກຸລະທຸດສະໂກພິກຂຸປູກຫມາກໄມ້ທັງຫລາຍ ແລ້ວທຳລ່າຍແກ່ກະກຸນນັ້ນ ເປັນກຸລະທຸດສະໂກສັງຄາທິເສດຖ້ວນ 13. ສັງຄາທິເສດ 13 ຕົວນີ້ຜີວ່າອຸນພິຈາລະນາຕາມທົບໂລກໃຫ້ໃສ່ 2 ຮ້ອຍນັ້ນເທີ້ນຊອບແລ. ເຈົ້າອຸນພິຈາລະນາໃຫ້ຫລິງດູບຸກຄະລະຜູ້ບໍ່ຫຍາບຊ້າ ກ້າແຂງນັ້ນຫາກອ່ອນໂຍມຈັກຕັ້ງຢູ່ໃນຄຳສອນແທ້ໂທດ ແຫ່ງບຸກຄະລະຜູ້ນັ້ນກໍເບົາ ໃຫ້ໃສ່ 3 ບາດແກ່ມັນຊອບຄອງແລ ເປັນດັ່ງພິກຂຸ ແລະສາມເນນ ອັນໄດ້ກະທຳຜິດເມື່ອພາຍລຸນແລ ຕັ້ງຢູ່ໃນຄອງສິກຂາບົດພະພຸດທະເຈົ້າຍັງໃຫ້ອະນຸຍາດແລ ຈາຫ້ອງສັງຄາແລ້ວເທົ່ານີ້ແລ. ອາບັດອານິຍັດມີ 2 ຕົວນີ້ມາເປັນຖຸລລະໄຈ ປະຣາຊິກກໍເປັນຖຸນລະໄຈສັງຄາກໍເປັນແລ.

ອາບັດນິດສັກຄີ ມີ 30 ທົບໂລກ ໃຫ້ໃສ່ອັນແປງຮ້ອຍໜຶ່ງ ກໍຊອບແລ ອາບັດປາຈິດຕີນີ້ 92 ຕົວ ທົບໂລກໃຫ້ໃສ່ 5 ບາດ ກໍ ຊອບແລ. ອາບັດປະຕິເທດສະນີ 4 ທົບໂລກໃຫ້ໃສ່ອັນສົມມາ 2 ບາດແລ. ອາບັດເສກຂິຍາວັດ 75 ຕົວ ທົບໂລກໃຫ້ໃສ່ອັນສົມມາ ດອກໄມ້ເຜີ້ງທຽນ ເຟື້ອງສ້ຽວສະຫລຶງໜຶ່ງ ກໍຊອບຄອງສິກຂາ ບົດແລ. ສິນພິກຂຸເຈົ້າທັງຫລາຍ ມີເກົ້າພັນໂກດປາຍແປດຮ້ອຍໂກດ ໜຶ່ງປາຍສີ່ລ້ານສາມພັນທົກຕົວແລ. ອາບັດພິກຂຸເຈົ້າທັງຫລາຍນີ້ 7 ຕົວແລ. ປະຣາຊິກ ສັງຄາທິເສດ ອະນິຍັດນິດສັກຄີປາຈິດຕີ ປາຕິເທດສະນີເສກຂິຍະວັດທັງຫລາຍ ຕະຫມອບເອົາມາມີ 7 ຕົວແລ.

ຈັກກ່າວ ສັງຄາທິເສດ 13 ຕົວ ພິກຂຸໃດຕ້ອງນັ້ນ ຄວນໃສ່ ທັນດະກຳ ຄືວ່າ ໃຫ້ອັບໜີແລ້ວ ຈິ່ງສຳແດງເອົາພາຍລຸນ ກໍຍັງຄວນ ໄດ້ແລ. ທົບໂລກໃຫ້ໃສ່ອັນໄຫມ ທົວພັນທົວຮ້ອຍແລ ຂຸນກວານ ນ້ອຍໃຫຍ່ ໃຫ້ໃສ່ 3 ຮ້ອຍແລ. ຫລວງມະຫລັດໃຫ້ໃສ່ 3 ຮ້ອຍ ຫລວງເມືອງ ຫລວງແພງນາໃສ່ 2 ຮ້ອຍ 2 ບາດ ຫລວງຄັງງາ 2 ຮ້ອຍ 2 ບາດ ນັກບຸນຂຸນຄ້າໃສ່ 2 ຮ້ອຍ ຍິງໃສ່ຮ້ອຍໜຶ່ງ ຊາຍທ່ານໃສ່ 5 ບາດ ຍິງທ່ານໃສ່ 10 ສະຫລຶງ ຊອບຄອງ ສິກຂາບົດແລ ອັນນີ້ຈາທ້ອງສັງຄາ 13 ຕົວໆໃດ ກໍດັ່ງດຽວກັນແລ.

ບັດນີ້ ຈັກກ່າວອາບັດກ່ອນແລ. ອາບັດນິດສັກຄີ 30 ອາບັດ ປາຈິດຕີ 92 ຕົວ ປະສົມເຂົ້າກັນເປັນ 122 ຕົວ ພິກຂຸຕົນໃດຕ້ອງອາບັດ 122 ຕົວນີ້ ຄວນສັ່ງສອນແລ ທົບໂລກໃຫ້ໃສ່ອັນຕູ່ກໍດີ ອັນຕີກໍດີແລ ທົວພັນ ທົວຮ້ອຍໃຫ້ໃສ່ 2 ຮ້ອຍ ຂຸນກວານໃຫຍ່ນ້ອຍ 5 ບາດ

ຊາວບ້ານ ຊາວເມືອງ ນັກບຸນຂຸນຄ້າ ໃຫ້ໃສ່ 5 ບາດ ຊາຍທ່ານໃສ່ 5 ສະຫລຶງ ຍິງທ່ານໃສ່ 2 ສະຫລຶງເຟື້ອງແລ. ຍິງຊາວເມືອງໃສ່ 10 ສະຫລຶງ ອາບັດປາຕິເທດສະນີ 75 ຕົວ ອາບັດເສກຂິຍະວັດ 57 ຕົວ ຕະຫມອນເຂົ້າກັນມີ 132 ຕົວ ຕະຫມອນເຂົ້າກັນເປັນ 2 ຕົວ ພິກຂຸໃດຕ້ອງອາບັດ 2 ຕົວນີ້ ຄວນສັ່ງສອນ ໃຫ້ຕັ້ງຢູ່ໃນຄອງສະຣະນາຄົມເທີ້ນ. ຫົນໂລກໃສ່ອັນສົມມາ ຫົວພັນ ຫົວຮ້ອຍ ໃສ່ຮ້ອຍຫນຶ່ງ ຂຸນກວານໃຫຍ່ນ້ອຍ ໃສ່ 5 ບາດ ຊາວເມືອງ ນັກບຸນຂຸນຄ້າໃສ່ 10 ສະຫລຶງ ຍິງຊາວເມືອງໃສ່ 5 ສະຫລຶງ ຊາຍທ່ານໃສ່ 2 ສະຫລຶງ ຍິງທ່ານໃສ່ສະຫລຶງແລ.

ບັດນີ້ຈັກຈາຫ້ອງສົມມາກ່ອນແລ ຊອບຄອງສິກຂາບົດມີດັ່ງນີ້: ພະພຸດທະເຈົ້າ ຫາກເທດສະຫນາໄວ້ ຢ່າສົງກາເທີ້ນ. ກາຍະກຳ 3 ວະຈີກຳ 4 ມະໂນກຳ 3 ແລ. ກາຍະກຳ 3 ນັ້ນ ທ້າວພະຍາເວົ້າກັນຢູ່ຕົວຢ່າງກາຍບໍ່ຂໍທາງຫນຶ່ງ ຄູບາອາຈານເວົ້າກັນຢູ່ຕົວຢ່າງກາຍບໍ່ຂໍທາງຫນຶ່ງ, ກາຍເມຍທ່ານບໍ່ຂໍທາງຫນຶ່ງ ອັນຫນຶ່ງ ຂຶ້ນຄອບພໍ່ບ້ານນັ່ງກາຍອານາເຂດຫນຶ່ງ, ຂຶ້ນຄອບພໍ່ວັດນັ່ງກາຍອານາເຂດຫນຶ່ງ, ອັນຫນຶ່ງ ປິດຫມາກໄມ້ ສົ້ມຫວານຂອງວັດ ຂອງບ້ານບໍ່ຄອບເຈົ້າຂອງ ໂທດຝູງນີ້ຖືກທຸກກົດແລ. ສັງຄາຫົນໂລກ ໃຫ້ໃສ່ 10 ສະຫລຶງເທີ້ນ. ວະຈີກຳນັ້ນ ຜູ້ໃດໄດ້ດ່າພໍ່ ດ່າແມ່ເຖົ້າ ແມ່ນ້າອາວ ຊາວເຊື້ອກໍດີ ດ່າຄູບາອາຈານກໍດີ ໂຄດວົງສາທີ່ເພິ່ງທີ່ອາໄສກໍດີ ໂທດຝູງນີ້ຈະຖືກວະຈີກຳແລ. ຫົນໂລກວ່າເປັນສັງຄາແລ ອັນໄຫມແລ. ມະໂນທຳ 3 ນັ້ນ ໃຜໄດ້ປະຫມາດພໍ່ແມ່ ຄູບາອາຈານ

ນ້ຳອາວຊາວເຊື້ອກໍດີ ໄດ້ປະຫມາດລູກທ່ານເມຍທ່ານນັ້ນ ກໍດີ ໄດ້ປະຫມາດໂຄດຕະວົງສາທີ່ເພິ່ງອາໄສກໍດີ ຝູງນີ້ຖືກສັງຄາທິເສດ ທົບໂລກໃສ່ອັນໄຫມ 2 ຮ້ອຍ 2 ບາດ ຊອບຄອງສິກອາບັດແລ.

ບັດນີ້ ຈັກກ່າວຮິດສະຫຍາ ທາວພະຍານະຫາກະສັດແລ ເສນາອາມາດຣາຊະມູນຕີຝູງນີ້ ຖືກຖຸນລະໄຈແລ ລູກເອີຍ ກ່າວຮິດສະຫຍາພໍ່ເມຍ ຖືກປາຕິເທດສະນີ ລູກເອົ້າຫລານເອີຍ ກ່າວຮິດສະຫຍາເຈົ້າໂຄດເຈົ້າວົງ ຖືກທຸກກົດແລ ເຈົ້າໂຄດເຈົ້າວົງ ຮິດສະຫຍາລູກເອົ້າລູກເອີຍ ຖືກສັງຄາ ພໍ່ເມຍກ່າວຮິດສະຫຍາ ລູກເອົ້າຫລານເອີຍ ຖືກປາຈິດຕີແລ ແມ່ກ່າວຮິດສະຫຍາລູກເຕົ້າ ເຫງົ້າເອີຍ ຖືກອັນປາຕິເທດສະນີແລ ນ້ອງເອີຍກ່າວຮິດສະຫຍາ ພີ່ເມຍ ຜູ້ຊາຍໃສ່ອັນ 2 ບາດ ນ້ອງເອີຍກ່າວຮິດສະຫຍາພີ່ເມຍ ຜູ້ຍິງໃສ່ໂທດບາດຫນຶ່ງ ໃຜກ່າວຮິດສະຫຍາຫົວຄູສັງຄະຣາດ ຖືກໂທດທຽນເຫລັ້ມພັນ ນ້ຳມັນຫມື່ນ ກ່າວໂທດສົມເດັດສັງຄະ ຣາຊາພະພີ່ນ້ອງ ໂທດທຽນເຫລັ້ມຮ້ອຍ ກ່າວປະຫມາດຈົວເນນ ໂທດທຽນເຫລັ້ມບາດແລ ຫົວສົມເດັດພະພີ່ນ້ອງ ມີນທົບເສັ້ນກະດີ 7 ຫ້ອງ ເສົາກະດີທ່ານຫນ້າຕ່າງ 5 ກໍາ ດວດ 7 ສອກ ພື້ນ 2 ສອກ ຈິ່ງສົມຄວນເປັນວັດຫົວເຈົ້າຊາສົມເດັດພະພີ່ນ້ອງແລ ພະພຸດທະເຈົ້າອະນຸຍາໂຕຫາກໃຫ້ອະນຸຍາດແກ່ພິກຂຸທັງຫລາຍແລ. ປະຣາຊິກມີຄ່າ 4 ຮ້ອຍ ສັງຄາມີຄ່າ 2 ຮ້ອຍ 2 ບາດ ອະນິຍັດ ມີຄ່າຮ້ອຍ 4 ບາດ ອາບັດອະນິຍັດນັ້ນ ຮູ້ເກີດເປັນຖຸນລະໄຈປະຣາ ຊິກ ຖຸນລະໄຈສັງຄາກໍເປັນແລ. ປາຈິດຕີມີຄ່າຮ້ອຍຫນຶ່ງ

ປາຕິເຫດສະນີມີຄ່າຖອງ 5 ບາດ ທຸກກົດມີຄ່າ 2 ບາດ ທຸບພາສິດ ມີຄ່າບາດໜຶ່ງ.

ຈັກຈາອຸບປະຈານ ແກ່ບຸກຄະລະຜູ້ເປັນໃຫຍ່ກວ່າທ່ານ ຄືວ່າ ເປັນພໍ່ບ້ານລຳເມືອງ ໃຫ້ສົ້ງຊອມຮັກສາອຸບປະຈານນາ ອຸບປະຈານ ບ້ານ ອຸບປະຈານເຮືອນ ຢອງວ່າມີຂ້າລັກຄະໂມຍໂຊຍສົກ ຜູ້ຮ້າຍ ເຂົ້າມາລັກງົວຄວາຍ ຂ້າຄົນກໍດີ ເອົາມາລັກໄມ້ຄົກ ກົກເຮືອ ບໍ່ເກືອ ແລະຕົ້ນເຜີ້ງ ໂທດຝູງນີ້ຖືກອັນທຸກກົດແລ. ອັນໜຶ່ງງົວລາກຫວາຍ ຄວາຍລາກຄ່າວ ບ່າວລາກສາວ ຂ້າໜີເຈົ້າບ່າວໜີນາຍກໍດີ ເອົາໄດ້ເຂົ້າມາລັກ ເມື່ອນອນຫລອນເມື່ອຫລັບກໍດີ ອັນໜຶ່ງຄືວ່າ ຊ້າງຕາຍ ຂະໜາຍຫລ່ອນກໍດີ ເອົາໄດ້ເຂົ້າມາລ່ວງລັດຕັດແດນ ໃຫ້ພໍ່ບ້ານຕວດຕາດູແລ ໃຫ້ຄຶດຫາຮີດ ຂີດຫາຄອງ ຕອງຫາໂທດ ໂທດຝູງນີ້ຖືກອັນສັງຄາແລ. ອັນໜຶ່ງຄືວ່າ ງົວຄວາຍກິນອ້ອຍ ເດັກນ້ອຍຕີກັນຜິດ 3 ທີໃຫ້ດ່າ ຜິດ 3 ທ່າໃຫ້ພໍ່ແມ່ສັ່ງສອນ ຢອງວ່ານ້ຳລອດຝາຍ ຄວາຍລອດຄອກ ລູກບໍ່ເອົາຄຳບອກຄຳສອນ ພໍ່ແມ່ ໃຫ້ເຖົ້າແກ່ພິຈາລະນາ ໂທດຝູງນີ້ຖືກຖຸນລະໄຈແລ.

ອັນໜຶ່ງ ຄືວ່າຊັບໃນດິນສິນໃນນ້ຳ ອຸບປະຈານໄຮ່ 10 ວາ ອຸບປະຈານນາ 15 ວາ ອຸບປະຈານບ້ານ 30 ວາ ອຸບປະຈານວັດ ຕະຖາຄົດ ໃນເຂດຂົງຂັນທະສີມາ ສາລາເພີ່ນຄ້າຂາຍ ປາຍດ່ານ ຝ່າຍນີ້ ຖະໜີສອນກວນສ້າງໃນອຸບປະຈານ ນາຍບ້ານທີ່ນັ້ນທັງມວນ ແລ ໂທດຝູງນີ້ຖືກອັນສັງຄາທີເສດ ບຸກຄະລະຜູ້ມີປະຫຍາພິຈາລະນາ ຍັງຄຳຝູງນີ້ ໃຫ້ຖີ່ໃຫ້ສົມປາ ຢ່າເຫັນແກ່ຄ່າຈ້າງຮາງວັນ ຢ່າເຫັນ

ແກ່ລູກແກ່ເມຍ ພໍ່ ແລະ ແມ່ເທີ້ນ. ໃຫ້ພິຈາລະນາຕາມຄໍາສອນແຫ່ງພະພຸດທະເຈົ້າເທດສະໜາໄວ້ນີ້ເທີ້ນ ຄັນຫາກໃຜບໍ່ຟັງຄໍາສອນພະພຸດທະເຈົ້າທັງຫລາຍຝູງນີ້ ຈັກຖືກປະຣາຊິກຖ້ວນ 2 ເອົາຕົວໄປເຜົາເສຍໃນນະຣົກພຸ້ນບໍ່ສົງໄສຊະແລ ຢ່າສົງກາເທີ້ນ ຜິດທີ່ຮ້ອຍບາດ ຜິດປາກຮ້ອຍເບ້ຍ ຂອງເສຍໃຫ້ໃຊ້ທໍ່ຂອງໄດ້ ໃຫ້ທໍາຂວັນຕ່າງຫາກ ໂທດຕ່າງຫາກ ໂທດໃຫ້ເຖົ້າແກ່ສູ່ຂວັນນັ້ນ ຂອງມີເທົ່າໃດໃຫ້ສູ່ຂວັນເທົ່ານັ້ນເທີ້ນ. ບັດຝູງກ່າວແລ້ວ ແຕ່ພາຍຫລັງນັ້ນອອກມາແຕ່ມັດຊິມະນີກາຍພຸ້ນແລ.

ບັດນີ້ ຈັກກ່າວຂຸນພິຈາລະນາຖ້ອຍຄໍາ ບໍ່ຊອບເພິ່ງມ້າງເສຍມີ 6 ປະການ ຕັດດ້ວຍອໍານາດອາດຍາ ແຫ່ງຕົນອັນຕັດດ້ວຍບຣດບຣນເອົາຂອງທ່ານ ອັນໜຶ່ງໄຕ່ຄວາມເມື່ອກາງຄືນອັນໜຶ່ງຕົວຫາກໄຕ່ເຫັນແລທັບປະຕູເສຍແລ ຕັດອັນໄດ້ໄຕ່ຄໍາບໍ່ຕາມໂສພາບ ອັນ 1, ແມ່ຍິງຕັດຄວາມອັນ 1 ແລ ຄວາມທັງຫລາຍຝູງນີ້ ບໍ່ຊອບໃຫ້ມ້າງຈິ່ງຄວນຜັດຕັດໃໝ່ເທີ້ນ ຈິ່ງຊອບແລ.

ບັດນີ້ ຈັກກ່າວປະຣາຊິກກ່ອນແລ ຜີວ່າປະຣາຊິກແຫ່ງທ້າວພະຍາ ເສນາອາມາດຣາຊະມຸນຕີເສດຖີແລ ທວຍລາໜຶ່ງຮ້ອຍນ້ອຍໃຫຍ່ທັງຫລາຍ ຈັກກະຢາຍລາຖາວ່າກາຍະມິດສະກັງ ພຸມມະຊີວິຕັງ ໂຈຣັດທະນັງ ເມຖຸນັງ ທັມມັງກິດຈັງ ອະຣິດຕະກັງໂຍທານິຣິຍັງ ຍຸດທະກາປາຣາຊິກັງ ໂຍທະນະຄະຣະຄຸຣຸກິດຈັງນະຄະຣະຄັນຕະວາ, ປະຣາຊິກທັງ 9 ແລ. ກາຍະມິດສະກັງ

ກ່າວຕ້ານຈາຣະຈາດອນທ່ານຝູງອື່ນ ຜິດທຳນອງໂທດຝູງນີ້ ຖືກ ປະຣາຊຶກຖ້ອນ 1 ຊາຍ 4 ຕຳລຶງ ຍິງ 2 ຕຳລຶງ ພຸມມະຊີວິຕັງ ບຸກຄະລະຜູ້ໃດ ກະທຳໃຫ້ເສຍຊີວິດພະກະສັດ ໂທດຝູງນີ້ຖືກປະຣາ ຊຶກຖ້ອນ 2 ຊາຍ 6 ຕຳລຶງ ຍິງ 3 ຕຳລຶງ ໂຈຣັດທະນັງ ບຸກຄະລະ ຜູ້ໃດໄດ້ລັກເອົາເຂົ້າຂອງທ່ານນັ້ນ ໂທດຝູງນີ້ຖືກຖ້ອນ 3 ຊາຍ 8 ຕຳລຶງ ຍິງ 4 ຕຳລຶງ ເມຖຸນັງທັມມັງ ບຸກຄະລະຜູ້ໃດໄປເສບສົມ ເມຍທ່ານນັ້ນ ໂທດຝູງນີ້ຖືກປະຣາຊຶກຖ້ອນ 4 ຊາຍ 10 ຕຳລຶງ ຍິງ 5 ຕຳລຶງ ກິຈຈັງ ອະຣິຕະກັງ ບຸກຄະລະມະຫາເສນາໄປ ຊຸມນຸມ ຄວາມມິບໍ່ເວົ້າ ເມື່ອພາຍລຸນຈິງຣິດສະຫຍາຕິຕຣນທ່ານ ໂທດຝູງນີ້ຖືກປະຣາຊຶກຖ້ອນ 5 ຊາຍ 12 ຕຳລຶງ ຍິງ 6 ຕຳລຶງ ໂຍທານິຣິຍັງ ບຸກຄະລະມະຫາເສນາພາຣິພົນມະຫົນລະໂຍທາ ໄປລີ້ຢູ່ປ່າ ໂທດຝູງນີ້ຖືກປະຣາຊຶກຖ້ອນ 6 ຊາຍ 14 ຕຳລຶງ ຍິງ 7 ຕຳລຶງ ຍຸດທະທາປາຣາຊິກັງ ບຸກຄະນະຜູ້ໄປຣົບເສິກຢູ່ແລ ພາບ່າວຫນີຈາກເຈົ້າ ໂທດຝູງນີ້ຖືກປະຣາຊຶກ 7 ຊາຍ 16 ຕຳລຶງ ຍິງ 8 ຕຳລຶງ ໂຍທະນະຕະຣັງ ບຸກຄະລະມະຫາເສນາ ພາບ່າວຄົດ ຈາກເມືອງໂຕໄປເຂົ້າເມືອງອື່ນ ໂທດຝູງນີ້ຖືກປະຣາຊຶກຖ້ອນ 8 ຊາຍ 18 ຕຳລຶງ ຍິງ 9 ຕຳລຶງ ຄຸຣຸກິຈຈັງນະຄະຣະຄັນຕະວາ ບຸກຄະລະ ອັນເປັນມະຫາເສນາ ອັນຮູ້ຂີຍາອາການບ້ານເມືອງຮ້າຍດີ ບໍ່ໄປຊຸມນຸມໂທດຝູງນີ້ຖືກປະຣາຊຶກຖ້ອນ 9 ຊາຍຊັ່ງ 1 ຍິງ 10 ຕຳລຶງແລ. ຫົວຄູສັງຄະຣາດ ສູ່ເມຍເສນາອາມາດ ໂທດຜົ່ ຊາຍຖືກປະຣາຊຶກຖ້ອນ 9 ຍິງຖືກຕົວ ຖ້ອນ 4 ຫົວຊາພະຜີ່

ນ້ອງສູ່ເມຍຂຸນນາງ ໂທດພໍ່ຊາຍ ຖືກປະຣາຊີກຕົວຖ້ອນ 4 ຍິງຕົວຖ້ອນ 1 ແລ ຂຸນນາງສູ່ເມຍໄພນ້ອຍ ໂທດພໍ່ຊາຍຖືກປະຣາຊີກຕົວຖ້ອນ 8 ຍິງຖືກຕົວຖ້ອນ 1 ໄພ່ນ້ອຍສູ່ເມຍຂຸນນາງ ໂທດພໍ່ຊາຍຖືກປະຣາຊີກຕົວຖ້ອນ 4 ຍິງຖືກຕົວຖ້ອນ 1 ໄພ່ນ້ອຍສູ່ເມຍພະຍາເຈົ້າເມືອງຕີນາງນັກສະໜົມ ໂທດພໍ່ຊາຍຖືກປະຣາຊີກຖ້ອນ 9 ຍິງຖືກຕົວຖ້ອນ 4 ຕີ ພໍ່ຊາຍ 500 ຕີ ແມ່ຍິງ 150 ເອົາຄຸກ 3 ເດືອນຈິ່ງໃຫ້ອອກເປັນຂ້ອຍໜ້າຊ້າງມ້າ 3 ປີຈິ່ງໝົດແລ. ໄພ່ນ້ອຍສູ່ເມຍກັນ ຜົວໜີໄປເອົາການຫລີ້ນຊູ້ທາງຫລັງ ໂທດຊາຍ 122 ບາດ ຍິງ 6 ຕຳລຶງແລ ຜົວໄປທຸຣະຄ້າຂາຍ ຊາຍຊູ້ເອົາ 8 ຕຳລຶງ ຍິງ 4 ຕຳລຶງ ຄັນວ່າຜົວຢູ່ບ້ານຫລີ້ນຊູ້ ໃຫ້ເອົາໂທດຊາຍ 62 ບາດ ຍິງ 3 ຕຳລຶງແລ ລູກເຂີຍສູ່ແມ່ເມຍບໍ່ມີຜົວ ໂທດຊາຍ 3 ບາດ ຍິງຕຳລຶງ 1 ໃຫ້ເຖົ້າແກ່ກິນບາດ 1 ໃຫ້ເຈົ້າໂຄດບາດໜຶ່ງ ຄາຣະວະຫລັກຄຳ 3 ບາດ ຈິ່ງໝົດໂທດແລ. ພີ່ເຂີຍສູ່ນ້ອງເມຍບໍ່ມີຜົວ ໂທດຊາຍ 3 ບາດ ຍິງ 3 ບາດ ເຖົ້າແກ່ກິນ 2 ບາດ ສົມມາແມ່ 2 ບາດ ສົມມາພໍ່ບາດ 1 ເຈົ້າໂຄດຄວາຍຕົວ 1 ຈິ່ງໝົດໂທດແລ. ພີ່ເຂີຍສູ່ນ້ອງເມຍ ມີຜົວ ເອົາໂທດຊາຍຖືກປະຣາຊີກ 4 ຍິງຖືກສັງຄາ. ນ້ອງເຂີຍສູ່ພີ່ເມຍບໍ່ມີຜົວ ໂທດຊາຍຮ້ອຍ 1 ຍິງຮ້ອຍ 1 ປາຍບາດ ທັງຍິງທັງຊາຍຮ້ອຍປາຍບາດ ເຖົ້າແກ່ກິນບາດ 1 ສົມມາແມ່ 2 ບາດ ສົມມາພໍ່ 2 ບາດ ຈິ່ງໝົດໂທດແລ. ນ້ອງເຂີຍສູ່ພີ່ເມຍມີຜົວ ໂທດຊາຍຖືກປະຣາຊີກ 2 ຍິງປະຣາຊີກຖ້ອນ 1 ພໍ່ຫລີ້ນລູກສາວບໍ່ມີຜົວໂທດພໍ່ຖືກສັງຄາ ຍິງຖືກທຸກກົດ ໃຫ້

ເຖົ້າແກ່ກິນ 5 ບາດ ຄາຣະວະຫລັກຄຳ 5 ບາດ ໃຫ້ແມ່ 3 ບາດ ໃຫ້ເຈົ້າໂຄດ 2 ບາດ ຈິ່ງຫມົດໂທດແລ. ພໍ່ສູ່ລູກສາວມີຜົວ ໂທດຊາຍ ປະຣາຊິກ 8 ຍິງ ປະຣາຊິກ 1 ແລ ພີ່ອ້າຍສູ່ນ້ອງສາວບໍ່ມີຜົວ ໂທດຊາຍຖືກປາຈິດຕີ ຍິງຖືກຖຸນລະໄຈແລ ໃຫ້ເຖົ້າແກ່ກິນບາດ 1 ໃຫ້ເຈົ້າໂຄດບາດ 1 ຄາຣະວະຫລັກຄຳ ຕຳລຶງ 1 ເຜີ້ງພັນ 1 ຈິ່ງຫມົດໂທດແລ. ພີ່ອ້າຍສູ່ນ້ອງສາວມີຜົວ ໂທດຊາຍຖືກສັງຄາ ຍິງຖືກປາຈິດຕີ ເຖົ້າແກ່ກິນບາດ 1 ເຈົ້າໂຄດ 2 ບາດ ຄາຣະວະ ຫລັກຄຳ 5 ບາດ ຈິ່ງຫມົດໂທດແລ. ລູກຊາຍໄດ້ 15 ປີ ຢ່າໃຫ້ນອນ ນຳເອື້ອຍບໍ່ຄວນ ລູກຍິງໄດ້ 15 ປີ ບໍ່ໃຫ້ນອນດອມພໍ່ ແລະ ອ້າຍ ບໍ່ຄວນແລ.

ບັດນີ້ ຈັກກ່າວຍິງ 12 ຈຳພວກກ່ອນແລ. ພຸດທະລັກຂິຕາ, ທຳມະລັກຂິຕາ ສັງຄະຣັກຂິຕາ ສາມເນຣຣັກຂິຕາ ປິຕຸຣັກຂິຕາ ພາຕະຣັກຂິຕາ ພະຄິນີຣັກຂິຕາ ໂຄດຕະຣັກຂິຕາ ສະຫະທຳມິກະຣັກ ຂິຕາດັ່ງນີ້ແລ ພຸດທະຣັກຂິຕານັ້ນ ຍິງຜູ້ 1 ເປັນຂ້ອຍພະພຸທະເຈົ້າແລ. ທັມມະຣັກຂິຕານັ້ນ ຍິງຜູ້ 1 ເປັນຂ້ອຍພະທຳແລ ສັງຄະຣັກຂິຕາ ຍິງຜູ້ 1 ເປັນຂ້ອຍພະສົງແລ ສາມເນຣະຣັກຂິຕາ ຍິງຜູ້ 1 ເປັນຂ້ອຍເຈົ້າສາມເນນ ມາຕາຣັກຂິຕາ ຍິງຜູ້ 1 ແມ່ຮັກສາ ປິຕຸຣັກຂິຕາ ພໍ່ຮັກສາ ພາຕະຣັກຂິຕາ ຍິງຜູ້ 1 ພີ່ຊາຍຮັກສາ ພະຄິນີຣັກຂິຕາ ຍິງຜູ້ 1 ພີ່ຍິງຮັກສາ ໂຄດຕະຣັກຂິຕາ ຍິງຜູ້ 1 ພໍ່ແມ່ຕາຍ ອ້າຍນ້ອງຕາຍຫມົດ ໂຄດວົງຮັກສາແລ ພໍ່ແມ່ບໍ່ມີຢູ່ນຳ ບ້ານເມືອງສະຫາຍແລ ໃນຍິງ 9 ຄົນນັ້ນ ຜ່ອງວ່າມີຊາຍມາສູ່ຮັກມັກ

24/VII ອ້າມນຳລ້ອງມ່າຍ

ເອົາມາເປັນຄອງເຮືອນ ມີໃຫ້ຄວນແຕ່ງຕາມຮີດເທີ້ນ ຍິງຜູ້ 1 ປອງວ່າມີຊາຍຜູ້ໃດມາສູ່ຮັກມັກເປັນຄອງເຮືອນ ມີເຫລົ້າ 2 ໄຫ ໄກ່ 2 ໂຕ ເງິນຮ້ອຍເທົ່ານັ້ນແລ ຍິງສາວ 10 ຄົນນີ້ ປອງວ່າມີ ຊາຍມາສູ່ເອົາເປັນເມຍຄອງເຮືອນບໍ່ແຕ່ງ ຢູ່ບໍ່ນານເທົ່າໃດ ເມຍມັນກະທຳມິດສາຈານບໍ່ຂື້ນພໍ່ຊາຍຊູ້ນັ້ນ ໃຫ້ໃສ່ໂທດ 2 ຮ້ອຍ 2 ບາດ ຍິງໃສ້ຮ້ອຍປາຍບາດ ອ້າຍເຈົ້າຜົວໃສ່ໂທດ 4 ຮ້ອຍ 2 ບາດ ຊອບຄອງແລ ເຫດວ່າສັນທະວາສີມີນັ້ນຂາດເສຍແລ້ວ ຈິ່ງໂທດ ເພື່ອອັນແລ.

ບັດນີ້ ຈັກກ່າວເມຍ 12 ຈຳພວກກ່ອນແລ. ເມຍຈຳພວກ 1 ພໍ່ກ່າວເມຍໂອນ ເມຍຈຳພວກ 2 ທ້າວພະຍາປັນໃຫ້ເປັນເມຍ ເມຍຈຳພວກ 3 ໄດ້ໄຖ່ເອົາມາເປັນເມຍ ເມຍຈຳພວກ 4 ເອົາສູ່ກັນມີລູກ ໂຕໄປປົວກຳເອົາມາເປັນເມຍ ເມຍຈຳພວກ 5 ໂຕໄປໂອນເອົາເພິ່ນບໍ່ໃຫ້ ໂຕໄປຊູເອົາເປັນເມຍ ເມຍຈຳພວກ 6 ແຕກເສິກໄປສູ່ຂວັນເອົາກາງປ່າເອົາເປັນເມຍ ເມຍຈຳພວກ 7 ສາວມາສູ່ໂຕ ໂຕຈິ່ງໄປແຕ່ງເອົາມາເປັນເມຍ ເມຍຈຳພວກ 8 ນັ້ນ ໂຕໄປສູ່ເອົາໄວ້ຈິ່ງເອົາມາເປັນເມຍ ເມຍຈຳພວກ 9 ນັ້ນ ໂຕໄປ ອິ່ນເຫງເອົາລູກຫລານຕົນມາເປັນເມຍ ເມຍຈຳພວກ 10 ນັ້ນ ເອົາເປັນພະຍາດບໍ່ມີເງິນຕັ້ງຄາຍ ໂຕຈິ່ງປົວເອົາເປັນເມຍ ເມຍຈຳພວກ 11 ນັ້ນ ອັນກິນອັນພັນເປັນເມຍທ່ານ ເມຍຈຳພວກ 12 ນັ້ນ ເອົາລູກເອົາມາເປັນເມຍແລ ອັນ 1 ອິນເຫງເອົາເມຍເອົາ ເອົານຳມາໂຕອ້າຍຜົວເອົາເສຍເອົາເປັນເມຍໂຕແລ ໃນເມຍ 12

ຈໍາພວກນີ້ ໄດ້ແຕ່ງແປງຕາມບູຮານຈາຣິດ ບູຮານທໍາແລ້ວ ຢູ່ບໍ່ນານເທົ່າໃດ ເອົາກະທໍານິດ ສາຈານພານຄອງເມືອງ ໃຫ້ໃສ່ໂທດ ດັ່ງກ່າວມານີ້ເທີ້ນ. ເມຍຈໍາພວກ 1 ໂທດ 122 ບາດ ເມຍຈໍາພວກ 2 ໂທດ 12 ຖ້ອນ. ເມຍຈໍາພວກ 3 ໂທດ 122 ບາດ. ເມຍຈໍາພວກ 4 ໂທດ 11 ຖ້ອນ. ເມຍຈໍາພວກ 5 ໂທດ 10 ຕໍາລຶງ 2 ບາດ. ເມຍຈໍາພວກ 6 ໂທດ 10 ຕໍາລຶງຖ້ອນ. ເມຍຈໍາພວກ 7 ໂທດ 9 ຕໍາລຶງ 2 ບາດ. ເມຍຈໍາພວກ 8 ໂທດ 9 ຕໍາລຶງຖ້ອນ. ເມຍຈໍາພວກ 9 ໂທດ 8 ຕໍາລຶງ 2 ບາດແລ. ເມຍຈໍາພວກ 10 ໂທດ 8 ຕໍາລຶງຖ້ອນ. ເມຍຈໍາພວກ 11 ໂທດ 7 ຕໍາລຶງ 2 ບາດ. ເມຍຈໍາພວກ 12 ໂທດ 7 ຕໍາລຶງຖ້ອນແລ. ໃນເມຍ 12 ຈໍາພວກນີ້ ຄັນເອົາທໍານິດສາຈານພານຄອງເມືອງ ໃຫ້ໃສ່ໂທດດັ່ງກ່າວມາ ນີ້ເທີ້ນຊອບແລ.

ບັດນີ້ຈັກກ່າວຈາຄອງເມຍປະຮ້າງກັນ ເຈົ້າຂອງສ້າງໄດ້ ນໍາກັນນັ້ນ ຄວນປັນບໍ່ຄວນປັນໃຫ້ຮູ້ເທີ້ນ. ເມຍຈໍາພວກໜຶ່ງ ວັນຄືນເຊົ້າຄໍ່າ ຄອຍອົບຂວາຍອຸປະຖາກຜົວຕົນ ເໝືອນດັ່ງເຈົ້າ ຈິດຕະສາມເນນ ອຸປະຖາກພະມະຫາຕິດສະເຖນນັ້ນ ຊື່ອຸດຕະມະ ເມຍແລ. ຜີວ່າຜົວຊົ່ວເຮັດຮ້າຍປະໜີ ຂອງເຮືອນອັນສ້າງໄດ້ນໍາກັນ ບໍ່ຄວນເອົາໜີຈາກເມຍຈັກສິ່ງແລ ທໍ່ເວັ້ນໄວ້ບໍ່ແມ່ນຂອງເຮືອນ ຫລັງຈິ່ງເອົາເທີ້ນ. ເມຍຈໍາພວກ 2 ນັ້ນ ກໍສ້າງແປງທໍ່ແຕ່ຜົວໆຫຍຸບ ກົກ ເມຍຫຍຸບປາຍ ບົວລະບັດຄອງວັດ ລາງເທື່ອໄດ້ລາງເທື່ອບໍ່ໄດ້ ຄັນຊົ່ວຮ້າຍ ໜີປະ ຂອງສ້າງນໍາກັນໃຫ້ຜ່າ 3 ໂກຖາກ ຜົວເອົາ

ໂກຖານ 1 ເມຍເອົາ 2 ໂກຖານແລ ເມຍຈຳພວກ 3 ນັ້ນ ຢຳຜົວເໝືອນດັ່ງພີ່ຊາຍ ຂອງກິນອັນໃດແຊບແພງໄວ້ໃຫ້ຜົວ ບົວລະບັດຕາມຍົດປັນຍາຕົວດັ່ງນັ້ນ ຄັນຜົວຫາກຊັ່ງປະ ຂອງອັນສ້າງນຳກັນໃຫ້ປັນ 4 ໂກຖານ ໄວ້ແກ່ເມຍ 3 ໂກຖານ ໃຫ້ຜົວໂກຖານ 1 ເມຍຈຳພວກ 4 ນັ້ນ ກວນແຕ່ຫລິ້ນຊູ້ສູ່ຊາຍ ວັນຄືນຕັ້ງແຕ່ກະທຳມາຍາສາໂຫດ ຜົວເຫັນຮ້າຍຫນີປະ ຂອງອັນສ້າງໄດ້ນຳກັນໃຫ້ຜົວເອົາຫນີໃຫ້ຫມົດສ້ຽງເທີ້ນ. ເມຍຈຳພວກ 5 ນັ້ນ ອິ່ມຜົວເປັນດັ່ງອ້ອຍຜົວຈິ່ມແຕ່ນ້ອຍມັນຍູ້ຍົມ ກວນແຕ່ຜິດ ແຕ່ເລວກັນຊູ່ມື້ຊູ່ວັນ ຜົວເຫັນຮ້າຍຫນີປະ ຂອງອັນສ້າງນຳກັນໃຫ້ຜ່າ 5 ໂກຖານ ໃຫ້ເມຍໂກຖານ 1 ຜົວເອົາ 4 ໂກຖານແລ. ເມຍຈຳພວກ 6 ນັ້ນ ມັນກໍຜີປອງຂ້າຜົວດ້ວຍງ້ວນສານດ້ວຍບັງລັບນັ້ນ ຜົວເຫັນຮ້າຍຫນີປະ ຂອງອັນສ້າງນຳກັນໃຫ້ຜົວເອົາຫນີຫມົດໃຫ້ສ້ຽງເທີ້ນ. ເມຍຈຳພວກ 7 ນັ້ນຕັ້ງແຕ່ຕົວະລ່າຍຜົວສະຫລັບປາກ ຖະແຫລງແປງຄວາມ ທຳການເຮືອນເຍື່ອງໃດມັນວ່າໄຂ້ວ່າຫນາວ ມັນຫລັບມັນນອນ ຜົວເຫັນຮ້າຍປະຫນີ ຂອງອັນໄດ້ສ້າງນຳກັນໃຫ້ຜ່າ 4 ໂກຖານ ໃຫ້ແກ່ເມຍໂກຖານ 1 ຜົວເອົາ 3 ໂກຖານເທີ້ນ. ອັນ 1 ຮ້າງດ້ວຍການເສິກ ຂອງອັນສ້າງໄດ້ນຳກັນ ຊູ່ຄົນຊູ່ບໍ່ໄດ້ ຢ່າວ່າສັງເທີ້ນ. ອັນ 1 ຮ້າງດ້ວຍໄຂ້ປ່ວຍທັງເພິ່ນທັງໂຕຂອງອັນສ້າງນຳກັນ ໃຫ້ຜ່າ 3 ໂກຖານ ໃຫ້ຜົວໂກຖານ 1 ເມຍເອົາ 2 ໂກຖານແລ. ອັນ 1 ຮ້າງດ້ວຍພໍ່ແມ່ໂຄດວົງໄລ່ຫນີ ຂອງອັນສ້າງໄດ້ນຳກັນໃຫ້ຜ່າ 6 ໂກຖານ ໃຫ້ເມຍ 3 ໂກຖານ ຜົວເອົາໂກຖານ 1 ໃສ່ຮາຊະໂກດຮາຊະຄັງ 2 ໂກຖານແລ.

ບັດນີ້ ຈັກກ່າວຕັດຄອງຜົວຄອງເມຍ ຂາດບໍ່ຂາດກ່ອນແລ. ໃຫ້ຮ່ຳເພິງຕາມທຳ 2 ຕົວນີ້ເທີ້ນ. ຄືວ່າອິສາຕັນຫາແລ ອາໄລຍະຕັນຫາເທີ້ນ. ເມື່ອວ່າ ອິສາຕັນຫານັ້ນ ຜູ້ຊາຍຜູ້ຍິງກັດຕິດອມກັນຄືວ່າຜູ້ຊາຍໄດ້ ລູບຕີນລູບມືແມ່ຍິງໆໄດ້ລູບແຂນຜູ້ຊາຍ ທໍ່ວ່າໄປໄດ້ໃຫ້ຂອງຝາກ ໄປເປັນປະຕິຍານ ທໍ່ວ່າບັງເກີດຕັນຫາເຊິ່ງເພິງໃຈກັນຊື່ວ່າບຸຖາຕາລະຕັນຫາລາຍອອກ ຍັງບໍ່ຄວນເປັນເມຍຄວນເປັນແຕ່ຊູ້ແລ ປະລາຖະຄະຕັນຫານັ້ນໃດ 2 ຜົວເມຍເອົາກັນ ມາຮ້າງຈາກກັນຄວາມຂາຫາກຂາດກັນແລ້ວ ເມື່ອພາຍລຸນຢູ່ ຜູ້ຊາຍມີໃຈຄືນມາຢູ່ກັບເມຍ ທໍ່ໄປໄດ້ຖືກຕ້ອງກໍດີ ບໍ່ໄດ້ໃຫ້ປະຕິຍານເປັນດັ່ງເມື່ອກ່ອນກໍດີ ຊື່ວ່າອະປະລະຄະຕັນຫາແລ ບໍ່ຄວນຄືນສູ່ແລ້ວແລ ເຫດສົມຄຳພະພຸດທະເຈົ້າເທດສະໜາ ໃນທັມມະບົດວ່າດັ່ງນີ້ ອິລະກະຖາຕິ ອິສາເຣທຸສະທະອິສາຕັນຫາ ຕັນຫາປຸດຕັງ ປະເສນາສາຕຸນິງຍະຖາດັ່ງນີ້ອິສາລະປະຣິຫາກັດຕາຕົນນັ້ນ ທຽນຍ່ອມຊັກໃຈຜູ້ຍິງ ຜູ້ເອົ້າໄປຫາກັນທຸກເມື່ອແລ ອິສາເຣກັດສະມິງທຸສະປະໂຣ ທັງຫລາຍນີ້ ແມ່ນວ່າໜີໄປໄດ້ 10 ໂຍດກໍດີ ລຳກັດຕິຮັກເມຍເສຍນັ້ນ ຕັນທະມຸທຸສັຕຕາເປັນດັ່ງສັດຕິເດຍລະສານທັງຫລາຍ ຣາຄະຫາກຜູກໄວ້ກັບກັນແລປະເສສັດຕຸນີ້ ຫາກໄວ້ໂດຍມັກແຫ່ງຕົນທັ້ນແລ ໄນຍະໜຶ່ງຜູ້ຊາຍໄດ້ເອົາຂອງຝາກໄປໃຫ້ຍິງໆຮັບ ຍິງບໍ່ໃຫ້ປະຕິຍານເປັນເມຍບໍ່ໃຫ້ໂອກາດອັນໃດອັນໜຶ່ງ ຜູ້ຊາຍເພິງໃຈເປົ່າດາຍແລ ມາດຕາທໍ່ມາກ່າວວ່າເມຍກູໆດັ່ງນີ້ກໍດີ ອິສາຕັນຫາເປົ່າດາຍເສຍ ບໍ່ຂຶ້ນບໍ່ຄວນເປັນເມຍດາຍ ເປັນແຕ່ລຳເທິງແທນເປົ່າດາຍ ດ້ວຍອິສາຕັນຫານັ້ນ

ເຫມືອນດັ່ງສັດເດຍລະສານທັງຫລາຍເປົ່າດາຍແລ. ເຫດສົມຄໍາພະເຈົ້າເທດສະຫນາວ່າດັ່ງນີ້ : ທັດສະລະນັນຕາ ທານິໂນຕັນຫາວິຕານິນາຣຸຈະຍະລະສາປະວັດຕິ ທຸຣາທະມີສສາ ນັສມິງວະໂຣຕັນຫາຈິດຕິ ດັ່ງນີ້ແລ ຕັນຫາຈັດຕິດັ່ງນີ້ ກໍຈໍາເລີນໃນມະນຸສສານັງແຫ່ງຄົນທັງຫລາຍ ປະມັດຕາຈະກໍປະຫມາດ ຫາສັດຈະບໍ່ໄດ້ຫາກໃຫ້ຕົນຫາຍເສຍ ນາລຸຈະວິຍະ ເປັນປະດຸດຈະດັ່ງເຄືອເອົາອັນກິບໄມ້ອັນຜາກໃຫ້ໄມ້ຈິບຫາຍເສຍນັ້ນແລ ໂສປະລະວາຕິ ອັນຄົນຜູ້ປະກອບດ້ວຍອິສາຕັນຫານັ້ນ ຍ່ອມໃຫ້ຖ້ອຍຄໍາອັນບໍ່ຫມັ້ນບໍ່ທ່ຽງ ອິຈະວະນະໂນເປັນດັ່ງວອກ ອິສັງ ອັນມັກໂລບໃນຫມາກໄມ້ ຫຼລາຫຼລັງມັນຍ່ອມໂລບເອົານໍາຕົວອື່ນ ແລ້ວເລົ່າໄປເສຍອະນັສມິງ ໃຫ້ທົ່ວໄປໃນປ່ານັ້ນແລ ໄນຍະ 1 ອາໄລມີ 2 ອັນ ຄືວ່າ ອາໄລຂາດ ອັນບໍ່ເປັນຜົວເມຍກັນແລ ໄນຍະ 1 ອາໄລນີ້ແຮ່ງຊໍ້າຫມັ້ນ ຍັງເປັນຜົວເມຍກັນຫມັ້ນທ່ຽງກໍຍັງມີແລ ເມື່ອວ່າຄວາມຜົວເມຍຂາຂາດຈາກກັນນັ້ນຍັງມີຊາຍກັດຕິຮັກກັນ ມາຢູ່ກັບກັນກໍດີ ໃຫ້ປະຕິຍານແກ່ກັນກໍດີແລບໍ່ນານເທົ່າໃດຜູ້ຊາຍເລົ່າປະເສຍ ຫນີໄປຫາຜູ້ອື່ນກໍດີ ໄປຢູ່ນໍາພໍ່ແມ່ມິດສະຫາຍ ນ້ອງນຸ່ງ ເອື້ອຍອ້າຍ ຜູ້ໃດຜູ້ຫນຶ່ງກໍດີ ແລ້ວບໍ່ຍິນດີບໍ່ເສບດ້ວຍກາມະຄຸນ ບໍ່ຍິນດີນໍາງົວຄວາຍສິ່ງຂອງເຮືອນຊານ ບໍ່ເອົາມາກິນອາຫານເຢື່ອງໃດເຢື່ອງຫນຶ່ງແລ້ວ ຂອງເພິ່ງໃຈຜູ້ຊາຍມັນເອົາຫນີສ້ຽງແລ ມັນໃຫ້ເຖົ້າແກ່ຮູ້ກໍດີ ບໍ່ໃຫ້ຮູ້ກໍດີ ຜູ້ຊາຍກະທໍາດັ່ງນີ້ຄໍາຜົວຄໍາເມຍຂາດຈາກກັນ ແລ້ວແລ ທໍ່ຍັງປຸດສາໂຈທະນາດ້ວຍຄໍາວ່າ ຜົວກູເມຍກູດັ່ງນີ້ກໍດີ ທໍ່ອາຄາດໄວ້ເປົ່າດາຍເລີຍ ເຫມືອນ

ດັ່ງໃບແມງໄມ້ອັນຂາດຈາກຕົວແລ້ວນັ້ນແລ ເທດສົນລຳພະພຸດ
ທະເຈົ້າເທດສະໜາວ່າດັ່ງນີ້ ເຍນະເລຕານະ ກັດຕິໂສຕັງສະຕັຕຕັງ
ມະກັດໂກຈະຂະນັງ ເອຕັງປີເສຕະວາ ນາວະຊັງທິນະ ເປກຂາ
ໂບນາເມສັພພັງປະຍະ ເຍຊະນາອັນວ່າຄົນທັງຫລາຍ ຝູງຣາຄຣັຕ
ຕາ ກັຕຕິ ດ້ວຍກາມະສຸນາ ອະນຸປັຕຕິກໍຕົກໄປ ຕັງຍັງຕາມກະແສ
ແຫ່ງຕົນອັນຮ້າຍ ເຕຊະນາອັນວ່າຄົນທັງຫລາຍຝູງນັ້ນ ເອຕັງ
ປີເສຕະວາ ລະວະຊັງຕິກັງ ເປັນອັນມາຕໍຍັງຄອງຕັນຫາອັນສ້ຽງ
ແລ້ວ ເວັ້ນເສຍບໍ່ຢາກຄືນມາຫາທີ່ເກົ່າຕົວແລ ສະຍັງກັຕຕັງ
ຄົນທັງຫລາຍກໍບໍ່ທໍ່ຍັງເອົາອາຣົມວ່າ ເມຍກູຄົວເຮືອນກູວ່າດັ່ງນັ້ນ
ມະມະກັຕໂຕວາຊານັງ ເອຕັງປີເສຕະວານະວະຕິ ເຫມືອນດັ່ງແມງ
ຢ້າງຊີ້ນ ບໍ່ຂ້ອງແລ້ວແລໜີໄປແປງຮັງອັນໃຫຍ່ ມັກຢ່າໃຫ້ໃບຂາດ
ຈາກຕົວແລ້ວຜໍໄວ້ແຮ່ຕົວຈັກສະໜ່ອຍ ບໍ່ຜໍໃຫ້ຕົກຈາກຕົ້ນໄມ້
ເຫມືອນດັ່ງເຈຍນັ້ນແລ ນັກປາດເຈົ້າທັງຫລາຍ ຢ່າເອົາຄວາມອາໄລ
ນັນວ່າ ເມຍກູ ຄົວເຮືອນກູນັ້ນເທີ້ນ ປະການໜຶ່ງ ອາໄລ 2 ຂາ
ຍິງຊາຍກັຕຕິຮັກມັກກັນຕໍ່ຊາຍ ໃຫ້ຂອງຝາກຍິງຮັບເອົາແລ້ວ
ຍິງໃຫ້ປະຕິຍານເປັນ (ຕາປັຕຕັງ) ຜູ້ຊາຍຮັບຂອງທັງມວນວ່າເມຍກູ
ຄົວເຮືອນກູງົວຄວາຍກູ ວ່າສັນນີ້ ຈິ່ງໄດ້ຊື່ວ່າ ເປັນຜົວເປັນເມຍກັນ
ເທດສົນຄວາມພະເຈົ້າເທດສະໜາວ່າດັ່ງນີ້ ລະຕັງລະຕະລະທັງ
ພັນທະນະຕຸທິນາຍະສັທທາລຸຊຊາປັພພະຊັນຍະ ຄືວ່າຜູກດ້ວຍຊືກ
ທອງແລ ຜູກດ້ວຍຫຍ້າປອງຫຍ້ານຸ້ງກະຕ່າຍ ຄືວ່າຜູກດ້ວຍປານ
ດ້ວຍປີກໍດີ ນະຕັງພັນທະນະ ມາຕຸທິນາ ນັກປາດເຈົ້າທັງຫລາຍ

ກ່າວວ່າ ຊີກອັນນັ້ນເປັນອັນບໍ່ຫມັ້ນ ມີດດວງຫນາຜ້າດວງຄົມຕັດເສຍ ກໍຍັງຂາດແລ ບໍ່ລ້ຳແຕ່ເສຍຫາສິ່ງດຽວເລີຍ ເຫດສົມຄຳພະເຈົ້າ ເຫດສະຫນາວ່າ ຍັງອາເປກຂາສາລັນຕາລັນຕິມະນີກຸເລຄະ ປຸຕຕາສຸທາເລຈະ ໃນເມື່ອລູກເມຍອັນໄດ້ຖືຕ່າງແກ້ວ ຕັງທານະທັງ ພັນທະນາຫຸທີນາ ນັກປາດເຈົ້າທັງຫລາຍກ່າວວ່າ ຈັກເປັນເຊືອກອັນ ຫມັ້ນຍິ່ງກວ່າເຊືອກເຫລັກເຊືອກທອງ ເພື່ອເຫດດັ່ງນັ້ນ ຈິ່ງຄືນເປັນ ຜົວເປັນເມຍກັນແລ ເພື່ອອາໄລຍ່ອມໄດ້ຮັບເອົາຂອງຝາກ ຫມາກ ຄາວແກກັນ ກໍຈິ່ງໃຫ້ປະຕິຍານເປັນເມຍ ໄປຕາມປະຕິຍານທັ້ນແລ ໃຫ້ຫລີງບົດວ່າ ສາລະຕະສະລະຕາເລຍຸນີ ອີສາຊາຍຜົວເປັນ ປະມານດ້ວຍອີເສດ ຂາຜົວເມຍອັນຄວນຂາດ ອັນບໍ່ຄວນຂາດຈາກ ກັນນັ້ນ ມີ 4 ປະການ ອັນໄດ້ກ່າວແລ້ວ ແຕ່ພາຍຫລັງນັ້ນແລ. ອີສາສັນສາອາໄລຍະຕິມມະນະບະຣະຍະນັງນັ້ນໃດ ຍິງອັນຫນີຈາກຜົວ ບໍ່ໄດ້ຕັດ ອີສານະໄລບໍ່ຂາດດ້ວຍເຫດ 3 ປະການ ອີນີສາປະຣາຍີ ສັພພາປະຣາຍີ ໂອຍີນີກັດຕະປັນນະຍີນັ້ນ ອານີ ປານາຍີນັ້ນໃດ ຍິງອັນມີໃຈບໍ່ຮັກມັກຫນີຈາກຜົວ ເປັນດັ່ງນາງປັບພາວະດີຫນີຈາກ ພະຍາ ກຸສະຣາດວັນນັ້ນແລ ອີສາອາໄລພະຍາບໍ່ຂາດຈາກນາງ ຍັງເປັນເມຍພະຍາດັ່ງເກົ່ານັ້ນແລ. ສັພພາປະຣາຍີນັ້ນໃດ ຜູ້ທຳການ ຮັກສາຕົວຫນີຈາກຜົວ ເປັນດັ່ງນາງມະໂນລາຫນີຈາກ ທ້າວສີທົນ ປາງກ່ອນວັນນັ້ນ ຕັນຫາອາໄລທ້າວສີທົນບໍ່ຂາດຈາກນາງ ອັນໄດ້ ຄືນມາເປັນເມຍດັ່ງເກົ່າແລ ເມື່ອວ່າໂອກະຕະປະຣາຍີນັ້ນໃດ ຜູ້ຍິງ ອັນຈັງໄຣປາກກ້າອົ່ມເຫງຜົວ ໃຫ້ກຳຣາບໃຫ້ເອົາໄປສັ່ງສອນດີແລ້ວ

ຈິ່ງໃຫ້ເອົາຄືນມາເປັນເມຍດັ່ງເກົ່າເທີ້ນ ນັກປາດເຈົ້າທັງຫລາຍ ໃຫ້ຮ່ຳເພີງດັ່ງນີ້ ຈິ່ງໃຫ້ລະເສຍຈາກຕົວຕາຍ ເປັນດັ່ງເມຍສາວິຖາກຸມານ ໂພທິສັດເຈົ້າຍາມນັ້ນ ມັນຊັງຜົ່ຜົວແລ້ວ ມັນສໍ່ຕໍ່ຜົວໃຫ້ຂ້າຜົ່ເສຍ ມາວິຖາກຸມານຈິ່ງໃຫ້ເສນາເອົານາງໄປສັ່ງສອນເສຍດີແລ້ວ ຈິ່ງເອົາມາເປັນເມຍດັ່ງເກົ່າແລ ເຫດວ່າພະພຸດທະເຈົ້າເທດສະໜາໃນດີກາສອຍສາຍຄຳແລ.

ບັດນີ້ ຈັກກ່າວຄ່າຕົວຄົນທັງຫລາຍ ທັງຍິງຊາຍນ້ອຍໃຫຍ່ ໃຫ້ແຈ້ງແກ່ນັກປາດເຈົ້າທັງຫລາຍ ຝູງພິຈາລະນາ ຄົນທັງຫລາຍມວນເທີ້ນ ອາຍຸຊາຍສະກັນຕັ້ງ 8 ປີ ຮອດ 15 ປີ 11 ຕຳລຶງແລ. ອາຍຸຕັ້ງແຕ່ 15 ເທົ່າຮອດ 20 ປີ 12 ຕຳລຶງແລ. ອາຍຸຕັ້ງແຕ່ 20 ເທົ່າຮອດ 40 ທັດ 16 ຕຳລຶງແລ. ອາຍຸ 40 ເທົ່າຮອດ 60 ປີ 11 ຕຳລຶງແລ. ຄ່າຕົວຊາຍສະກັນທໍ່ນີ້ແລ. ຄ່າຕົວຊາຍຊະຣາແຕ່ອາຍຸ 60 ໄປເຖິງ 70 ປີ 8 ຕຳລຶງແລ. ອາຍຸ 70 ເທົ່າຮອດ 80 ປີ 4 ຕຳລຶງ 2 ບາດແລ. ອາຍຸ 80 ເທົ່າຮອດ 100 ປີ ຄ່າຕຳລຶງ 2 ບາດແລ. ຄ່າຕົວຊາຍຊະຣາມີທໍ່ນີ້ແລ.

ຈັກຈາຄ່າຕົວຍິງສະກັນ ອາຍຸ 7 ປີ ຮອດ 8 ປີ 7 ຕຳລຶງແລ. ອາຍຸ 9 ປີ ຮອດ 10 ປີ 9 ຕຳລຶງແລ. ອາຍຸ 10 ປີ ຮອດ 15 ປີ 10 ຕຳລຶງແລ. ອາຍຸ 15 ປີ ຮອດ 30 ປີ 12 ຕຳລຶງແລ. ອາຍຸ 30 ປີ ຮອດ 50 ປີ 10 ຕຳລຶງແລ. ອາຍຸ 50 ປີ ຮອດ 70 ປີ 80 ປີ ຄ່າ 8 ຕຳລຶງແລ. ອາຍຸ 80 ປີ ຮອດ 100 ປີ ຄ່າມີ 6 ບາດແລ.

ບັດນີ້ ຈັກກ່າວຄ່າເກົ້າຄ່າຫູກ້ອນແລ ຄ່າເກົ້າມີ 5 ບາດ

ຄ່າລີ້ນມີ 10 ບາດ ຄ່າຫູ 5 ບາດຄໍາ ດັງ 10 ບາດ ຄ່າແຂນເບື້ອງ 5 ຕໍາລຶງ ຄ່າຕາເບື້ອງ 5 ຕໍາລຶງ ຄ່າຂາເບື້ອງ 5 ຕໍາລຶງແລ. ຄ່າລູກຄວາຍ ເກີດມາໄດ້ 3 ວັນ ຂ້າຕາຍມີຄ່າ 2 ບາດ ມ້າເກີດ 3 ວັນ ຂ້າຕາຍຄ່າມີ 6 ບາດແລ. ລູກຊ້າງເກີດມາ 3 ວັນ ຂ້າຕາຍຄ່າມີ 2 ຕໍາລຶງ. ລູກຄວາຍຕົວແມ່ມີຄ່າບາດ 1. ລູກມ້າຕົວແມ່ມີຄ່າ 3 ຕໍາລຶງ. ລູກຊ້າງ ຕົວແມ່ມີຄ່າ 6 ບາດ. ແມ່ຄວາຍມີຄ່າ 10 ບາດ ລັບຕາຍມີຄ່າ 3 ຕໍາລຶງ. ພໍ່ຄວາຍມີຄ່າ 3 ຕໍາລຶງ ພໍ່ຄວາຍຕາຍມີຄ່າ 4 ຕໍາລຶງ. ແມ່ມ້າມີຄ່າ 4 ຕໍາລຶງ ລັບຕາຍມີຄ່າ 5 ຕໍາລຶງ. ພໍ່ມ້າມີຄ່າ 5 ຕໍາລຶງ ພໍ່ມ້າຕາຍມີຄ່າ 6 ຕໍາລຶງ. ແມ່ຊ້າງຄ່າມີຊັ່ງໜຶ່ງ ແມ່ຊ້າງຕາຍມີຄ່າ 5 ຕໍາລຶງ ພໍ່ຊ້າງມີຄ່າຊັ່ງ 5 ຕໍາລຶງ ພໍ່ຊ້າງຕາຍມີຄ່າ 30 ຕໍາລຶງແລ.

ບັດນີ້ ຈັກກ່າວຈາໂຈນລັກຂ້າ ລັກຂາຍກໍດີ ຄ່າຕາໜາຍຊ້າງພາຍ ໜາຍ 10 ບາດ ຕັດງວງຄ່າມີ 10 ບາດ ງາກິ່ງ 5 ຕໍາລຶງ ຫູໃບ 5 ບາດ ຫາງຊ້າງ 3 ຕໍາລຶງ ຕັດຫາງຊ້າງມີຄ່າ 5 ຕໍາລຶງ ໜາຍ 10 ບາດ ຫູໃບ 5 ບາດ ງວງ 10 ບາດ ອັນນີ້ຊ້າງລັງ ແລະ ຊ້າງລາດລໍາດັບລົງເທີ້ນ. ຕັດເຂົາຄວາຍກິ່ງ 4 ບາດ ຕາໜ່ວຍບາດ ຫູໃບບາດ ຫາງ 10 ສະລຶງແລ ຄ່າຄວາຍທ່ານຄ່າ 5 ບາດແລ. ຕາມ້າໜ່ວຍ 6 ບາດ ຫູມ້າໃບ 6 ສະລຶງ ຫາງມ້າຟັກ 6 ບາດ ຂ້າມ້າເຜີນຫາງ 3 ຕໍາລຶງແລ. ຕັດກ້ານກ້ອຍແນບໃຫ້ທໍາຂວັນກ້ານບາດ ໃຜຂຸດຕົ້ນກ້ອຍແນບອອກຖິ້ມ ໃຫ້ທໍາຂວັນ 5 ຕໍາລຶງ. ໃຜຂ້າໝາຂວັນລູກເຜີນຄ່າ 5 ຕໍາລຶງ ໃຜຂ້າໝາ

ເຮືອນເຜີ່ນຄ່າ 10 ບາດ ໃຜອ້າໝາເບື້ອ ເຮືອນບໍ່ມີນ່າງບໍ່ມີປີນຄ່າ 5 ບາດ. ໃຜເຈາະຕາໝາ ຂວັນລູກເຜີ່ນໜ່ອຍ 6 ບາດ ໃຜຕັດຫູໝາຂວັນລູກເຜີ່ນຄ່າ 6 ສະລຶງ ໃຜເຮັດຂາໝາຂວັນລູກເຜີ່ນຫັກຄ່າ 6 ບາດ ໃຜຕັດຫາງໝາຂວັນລູກເຜີ່ນຄ່າ 3 ບາດ ໃຜຕັດຫູໝາເຮືອນເຜີ່ນ 10 ສະລຶງ ໃຜເຈາະຕາໝາເຮືອນຄ່າມີໜ່ອຍ 5 ບາດ ໃຜຕັດຫາງໝາເຮືອນຄ່າ 3 ບາດ ໃຜເຮັດຂາໝາເຮືອນເຜີ່ນຫັກຄ່າ 6 ບາດແລ. ໃຜເຈາະຕາໝາເຮືອນເຜີ່ນໜຶ່ງໜ່ອຍ 10 ສະລຶງແລ ໃຜຕັດຫູໝາເຮືອນຄ່າ 2 ສະລຶງ ໃຜເຮັດຂາໝາເບື້ອເຜີ່ນຫັກຄ່າ 6 ບາດ ໃຜຕັດຫາງໝາເບື້ອເຜີ່ນຄ່າ 5 ສະລຶງ ໃຜຢ່າກະທຳເຫັນໂທດຝູງນີ້ຢ່າກະທຳເຫັນເປັນໂທດແລ. ໃຜລັກໄກ່ຂວັນລູກເຜີ່ນໄປອ້າໃຫ້ທຳຂວັນ 4 ບາດ ລັກໄກ່ລັກເຜີ່ນໄປອ້າຄ່າ 10 ສະລຶງ ລັກເຄືອພູຄ່າ 5 ບາດ ລັກເຄື່ອງຮົ້ວຂອງສວນຄ່າ 5 ບາດ ລັກຊຸດໃສ່ໂທດ 3 ບາດ ລັກລັບຄ່າ 10 ສະລຶງ ລັກສ້ອນຄ່າມີ 6 ບາດ ລັກໄຊຄ່າມີ 5 ບາດ ລັກຕຸ້ມຄ່າ 6 ສະລຶງ ລັກຄາດເຜີ່ນຄ່າ 4 ຕຳລຶງ ລັກໄຖຄ່າ 5 ຕຳລຶງ ລັກໄຖບໍ່ແມ່ນຍາມນາຄ່າ 10 ບາດ ລັກຄາດບໍ່ແມ່ນຍາມນາຄ່າ 8 ບາດ ລັກເຜີ້ງຊາວເມືອງຮວງ 10 ສະຫລຶງ ລັກເຜີ້ງເຜຍຮວງ 5 ບາດ ລັກກຸມມານເສນາຜູ້ໃຫຍ່ເອົາໂທດ 5 ຕຳລຶງ ຕີ 15 ບາດຈິ່ງໝົດ ໂທດແລ. ລັກເຮືອລາດຊາວເມືອງໂທດ 122 ບາດ ລັກເຮືອມະຫາເສນາຜູ້ໃຫຍ່ຕີ 10 ບາດ ລັກເຮືອລາດຫລວງຖືກປະຣາຊິກຕົນໃຫ້ຕີ 15 ບາດຈິ່ງໝົດໂທດແລ ລັກເຮືອທີ່ນັ່ງຖືກປະຣາຊິກແລ ໃຫ້ຕີ 25 ໃສ່ຄອກ ໄວ້ 3 ເດືອນ

24/VII ຫ້າມຈຳໜ່າຍ

ຈິ່ງໃຫ້ອອກເປັນຂ້ອຍຫຍ້າຊ້າງມ້າ 3 ປີ ຈິ່ງໝົດໂທດແລ.

ລູກຂ້າພໍ່ຖືກປະຣາຊຶກໃຫ້ຕີ 55 ແລ້ວຈິ່ງເອົາໃສ່ຄຸກໄວ້ 5 ເດືອນ ເອົາເປັນຂ້ອຍຫຍ້າຊ້າງມ້າເທີ້ນ. ລູກຂ້າແມ່ຖືກປະຣາຊຶກ 4 ໃຫ້ຕີ 55 ແລ້ວຈິ່ງເອົາເຂົ້າຄຸກໄວ້ 3 ເດືອນ ເອົາອອກເປັນຂ້ອຍຫຍ້າຊ້າງມ້າເທົ່າຊົ່ວຊີວິດເທີ້ນ. ພໍ່ຂ້າລູກຊາຍ ໃສ່ໂທດຊັ່ງ 5 ຕຳລຶງ ພໍ່ຂ້າລູກຍິງໃສ່ໂທດ 5 ຕຳລຶງແລ. ນ້າອາວຕາລຸງຂ້າຫລານຊາຍ ໃສ່ໂທດ 15 ບາດແລ ຂ້າຫລານຍິງໃສ່ໂທດ 12 ບາດແລ.

ຈັກຈາ ພໍ່ຄົນສີ້ມ້າໃສ່ໂທດ 3 ຕຳລຶງ. ລູກສີ້ມ້າໃສ່ໂທດ 6 ບາດ. ຫລານສີ້ມ້າໃສ່ໂທດ 3 ບາດ. ພໍ່ຄົນສີ້ຄວາຍໃສ່ໂທດ 10 ບາດ. ລູກສີ້ຄວາຍໃສ່ໂທດ 5 ບາດ. ຫລານສີ້ຄວາຍໃສ່ໂທດ 10 ບາດ. ລູກສີ້ຄວາຍໃສ່ໂທດ 5 ບາດ. ຫລານສີ້ຄວາຍໃສ່ໂທດ 10 ສະຫລຶງ. ພໍ່ຄົນສີ້ໝາໃສ່ໂທດ 6 ບາດ. ລູກສີ້ໝາໃສ່ໂທດ 3 ບາດ. ຫລານສີ້ໝາໃສ່ໂທດ 6 ສະຫລຶງ. ໃຜເຮັດຂ້າຊ້າງເພິ່ນໃສ່ໂທດ 5 ຕຳລຶງ. ໃຜເຮັດມ້າເພິ່ນໃສ່ໂທດ 3 ຕຳລຶງ. ໃຜເຮັດຂ້າຄວາຍເພິ່ນໃສ່ໂທດ 5 ບາດແລ.

ບັດນີ້ ຈັກກ່າວຄວນເຂົ້າສູ່ຫລັກຄຳແລ ບໍ່ຄວນເຂົ້າກ່ອນແລ. ຕຸຕຸສຸລະຫຸກັງໂລເກຕະໂຄຈະ ປັນນະກະຊາຕິໂກ ວຸທຫານັງ ໂອວາໂທນະຄັນທາຕິ ຕະໂຕປັນຈະຕິທັມຜ ປະມາທະໂທ ດັ່ງນີ້ ຕຸຕຸລຸ ອັນວ່າ ນຸ່ນງິ້ວ ສັລລະຫຸກັງ ເປັນອັນເບົາ ໂລເກໂລກນີ້ ປັນນະກະ ຊາຕິໂກ ອັນວ່າຜູ້ກອັກແກ້ກ ລະຫຸກັຕຕະລັງ ແຄວນເບົາກວ່ານຸ່ນ ນັ້ນແລ ໂອວາໂທ ອັນວ່າຄົນຜູ້ບໍ່ເອົາຄຳສອນແຫ່ງຜູ້ເຖົ້າແກ່ນັ້ນ

ລະທຸກະຕະລັງ ແຄວນເບົາກວ່າ ຕະໂຕປະນະກະຊາຕີໂກ ຄົນຜູ້ກອັກແກ້ກນັ້ນແລ. ປະມາໂທ ອັນວ່າຄົນປະໝາດ ຍາຕີທັມຜູ້ໃນແກ້ວທັງ 3 ນັ້ນ ສັລລະທຸກັງຕະໂຕເບົາກວ່າຄົນບໍ່ຟັງຄວາມສອນຜູ້ເຖົ້າຜູ້ແກ່ນັ້ນແລ ຄົນທັງຫລາຍ 3 ຄົນນີ້ ບໍ່ຄວນເອົາເຂົ້າສູ່ຫລັກຄໍາແລ. ຕະປະສິໂນ ທານະສີລາ ລົນາທັມມະປັທທະນາ ປຸສສະປາປຸຕຕະວັຕຕາ ເຕຊະນາໂນ ດັ່ງນີ້ ອັນວ່າ ບຸກຄະລະ ທັງຫລາຍ 8 ຄົນນີ້ ຄວນເອົາເຂົ້າສູ່ຫລັກຄໍາແລ. ຕະປະສິໂນ ຄືວ່ານັກປາດເຈົ້າຜູ້ມີສິນກໍດີ ທານະສີລາຄົນຜູ້ມັກໃຫ້ທານ ແລະ ຮັກສາສິນກໍດີ ກຸລີນາຜູ້ມີກະກຸນກໍດີ ວັທທິນາຄົນມີສັດຈະກໍດີ ທັມມະປັທທະນາ ຄົນຜູ້ຕັ້ງຢູ່ໃນຄອງທໍາກໍດີ ປຸສສະປາຄົນຜູ້ມີໃຈອັນຊື່ກໍດີ ປຸຕຕະວັຕຕາຄົນຜູ້ມີລູກຫລານຫລາຍກໍດີ ເຕຊະນາທັມໂມ ອັນວ່າຄົນຜູ້ມີຊື່ກໍດີ ຄົນທັງຫລາຍ 8 ຄົນນີ້ ຈິ່ງຄວນເປັນຂຸນແຕ່ງ ແປງແລ.

ບັດນີ້ ຈັກກ່າວຊີກຄາກ່ອນແລ ຊີກບາດໜຶ່ງຄາ 5 ບາດເຊືອກບາດໜຶ່ງຂີ້ຕີນ 2 ສະຫລຶງ ຄ່າແສ້ 2 ບາດເງິນຕໍ່ບາດແສ້ບາດໜຶ່ງແລເຈົ້າເຮີຍ. ປັສສະນະປັຕຕັງ ໂລເກຕະໂຕ ເທວານຸຈັກຂະນາ ຕະໂຕວຸທທານັງ ໂອວາໂທຕະໂຕ ພຸທທານະສາສະນັງປະສານະວັຕຕັງ ອັນວ່າຮອຍຕີນຄົນ ຍັງຄະລຸກັງ ເປັນອັນໜັກແລໂລເກໃນໂລກນີ້ແລ ເທວານຸວັກຂະນາ ອັນວ່າຄວາມເທວະດາທາກບອກກ່າວໃຫ້ຮູ້ນັ້ນ ຄຸຣຸນັງແຄວນໜັກ ຕະໂຕປາສານະສະໂຕກວ່າຫີນກ້ອນນັ້ນແລ ໂອວາໂທ ອັນວ່າຄໍາໂອວາດສັ່ງສອນວຸດທານັງແຫ່ງເຖົ້າແກ່ ພໍ່ແມ່ນັ້ນຄຸຣຸກະຕະຣັງແຄວນໜັກ

ຕະໂຕເທວານຸຈັກ ຂະນາກວ່າຄຳເທວະດານັ້ນແລ ພຸທທານະສາສະນັງ ອັນທຳມະເທດສະໜາ ພຸທທັງຍັງພະພຸດທະເຈົ້າ ຄຸຣຸກະຕະຣັງ ແຄວນໜັກຕະໂຕວຸດທານັງ ກວ່າຄຳເຖົ້າແກ່ນັ້ນ ໜັກມີ 4 ປະການນີ້ແລ. ພຸທທາສັງສາຣະຄັມພີຣັງ ສາລະຄັມພີຣັງ ຍານະຄັມພີຣັງ ເນຍຍະຄັມພີຣັງ ຕິຈະຕຸພິມໂພດັ່ງນີ້ ສັງສາຣາ ອັນວ່າວັຕຕະສົງສານ ຄັມພີຣັງເປັນອັນເລິກໜຶ່ງແລ ຄະລັງອັນວ່ານ້ຳ ສະໝຸດສາຄອນ ຄັມພີຣັງເປັນອັນເລິກໜຶ່ງແລ ຍານັງ ອັນວ່າ ຍານປະໜຍາຄັມພີຣັງ ກໍເປັນອັນເລິກໜຶ່ງແລ ເນຍຍັງ ອັນວ່າ ຖ້ອຍຄຳທັມມະເທສະໜາແຫ່ງພະພຸດທະເຈົ້າ ຄັມພີຣັງກໍເປັນອັນ ເລິກໜຶ່ງແລ ຈະຕຸພິມີ 4 ປະການນີ້ແລ ກິຈໂຈນະສາ ປັຕຕິລາໂພ ກິຈຈັງມັສສານັງ ຊີວິຕັງ ກິຈຈັງສະທັມມະສາວັນນະກິຈໂຈ ພຸທທານັງ ອຸປະໂທ ມະນຸສສາ ອັນວ່າຄົນທັງຫລາຍ ຕີໂພນັກປາດ ໄດ້ຮຳເພີງກິຈໂຈກໍເປັນອັນຍາກແລ ມະນຸສສາ ອັນວ່າຄົນທັງຫລາຍ ຊີວິຕັງ ອັນອົບຂວາຍລ້ຽງຊີວິດ ກິຈຈັງເປັນອັນຍາກນັກແລ ອັນມີ 4 ປະການນີ້ແລ.

ບັດນີ້ ຈັກກ່າວໂລກະທັມທັງ 8 ໃຫ້ຮູ້ເຫັນ ບາລີວ່າດັ່ງນີ້. ທານັງສີລັງ ປະຣິຈາຄັງ ອາຊຊະວັງ ມັທທະວັງ ຕັປປັງ ອັກໂກທັງ ອະວິຫິງສານັງ ຂັນຕີ ດັ່ງນີ້ແລ ເມື່ອແປວ່າ ທານັງ ນັ້ນໃຫ້ມີປົກກະຕິ ອັນຮູ້ໃຫ້ທານຢ່າຂາດ ສີລັງ ນັ້ນໃຫ້ມີປົກກະຕິ ອັນຮັກສາສິນຢ່າຂາດ ປາຣິຈາຄັງ ນັ້ນໃຫ້ປົກກະຕິ ອັນຮູ້ແຈກຢາຍໃຫ້ທ່ານກິນ ອາຊຊະວັງ ນັ້ນໃຫ້ມີປົກກະຕິ ອັນຊື່ຈີ່ຕາມຄອງ ຢ່າຕີປອງທາຍັງຄຳອັນໃຫຍ່

ມາເທີ້ນ ມັທທະວັງ ນັ້ນໃຫ້ມີປົກກະຕິ ອັນອ່ອນທອມປະຕິສັນຖານ ຕ້ານຈາຣະຈາ ພິຈາລະນາຫາຄຳອັນຊອບ ຍາປະກອບດ້ວຍໂກທະ ມານະກ້າແຂງ ຕັປປັງ ນັ້ນໃຫ້ຈຳເລີນເມດຕາພາວະນາຍາຂາດ ອະໂກທັງ ນັ້ນຍາມີໃຈເຂີງຄຽດຍາບັງບຽດສຽດຊັງໃຜ ອະຫັງສານັງ ນັ້ນຍາມີໃຈວິຕົກທ່ານ ຂັນຕິ ນັ້ນໃຫ້ມີໃຈຍາຄຽດເທີ້ນ. ທີຣີໂອຕຕັປປັງ ນັ້ນໃຫ້ຮູ້ລັກອາຍແຕ່ບາບພິລຸ ໃຫ້ສະທ້ານຢ້ານແຕ່ໂພຍໄພ ຊະຕະວິໂຍ ນັ້ນໃຫ້ນອນຕື່ນເດິກ ລຸກເຊົ້າ ຄຶດຫາແຕ່ຄຳສອນສ້າງແປງ ແຫ່ງ ຕົນເທີ້ນ. ອຸທທະລີ ນັ້ນເມື່ອຈັກປູກໃຫ້ພິຈາລະນາດູ ອັນຮ້າຍອັນດີແລ ນາມມະກະຣິໂຍ ນັ້ນບຸກຄະລະຜູ້ໃດກໍດີ ຫາກມາສັບສໍ່ຖ້ອຍຄຳອັນໜັກ ອັນເບົາ ອັນນ້ອຍອັນໃຫຍ່ກໍດີ ໃຫ້ໄວ້ໃນໃຈ ຫັ້ນກ່ອນ ສົມຜໍຟັງຈິ່ງຟັງ ບໍ່ສົມຜໍຟັງຢ່າຟ້າວຟັງເທີ້ນ. ອັນໜຶ່ງໃຫ້ຮັກສາລຳເມືອງ ອັນໜຶ່ງ ໃຫ້ຮັກສາແຫ້ງເມືອງ ອັນໜຶ່ງໃຫ້ຮັກສາຫູເມືອງ ອັນໜຶ່ງໃຫ້ຮັກສາ ຕາເມືອງ ອັນໜຶ່ງໃຫ້ຮັກສາໃຈເມືອງ ອັນໜຶ່ງໃຫ້ຮັກສາຝາເມືອງ ອັນໜຶ່ງໃຫ້ຮັກສາປະຕູເມືອງ ອັນໜຶ່ງໃຫ້ຮັກສາລຳເມືອງ ອັນເປັນ ທ້າວພະຍາໃຫ້ຫົດສະຣາດຄອງທຳ ຝົນຈິ່ງຕົກຮວາຍຮຳ ລ້ອນຖ້ອນ ສະເໝີກັນ ທຸກແຫ່ງທຸກພາຍ ເຂົ້າຈິ່ງນານາ ປາຈິ່ງມານ້ຳແລ ໃຫ້ຮັກສາແຫ້ງເມືອງນັ້ນ ເປັນທ້າວພະຍາໃຫ້ຫົດສະຣາດຄອງທຳ ຄືວ່າພາບ່າວໄພ່ໄປສ້າງສິນກິນທານອັນຊອບ ລົມຈິ່ງສະເໝີແລ ໃຫ້ຮັກສາຊຸ່ມເມືອງນັ້ນ ເປັນທ້າວພະຍາໃຊ້ບ່າວນຳທຽມບັນນະການ ໄປເມືອງອັນຢູ່ໄກກໍດີ ຢູ່ໃກ້ກໍດີ ທາງນ້ຳທາງບົກກໍດີ ບ້ານເມືອງຈິ່ງມີ ເດຊະຣາສີແລ ໃຫ້ຮັກສາຕາເມືອງນັ້ນ ເປັນທ້າວພະຍາ ເຖິງລະດູ

ປີໃໝ່ ໃຫ້ບອກຢ່າວເຕີນຄົນທັງຫລາຍໃຫ້ເອົາລັຮງດູຫູບ້ານ ຕາເມືອງ ມະເຫສັກຫລັກຕຸນຈຶ່ງຮັກສາດີແລ ໃຫ້ຮັກສາຕາເມືອງນັ້ນ ເປັນເຈົ້າພະຍາເຖິງລະດູປີໃໝ່ ໃຫ້ເອົາແຕ່ງເຄື່ອງບູຊາເມືອງ ທັງ 8 ດ້ານ ບ້ານເມືອງຈຶ່ງຢູ່ຊຸ່ມກິນເຢັນແລ ໃຫ້ຮັກສາໃຈເມືອງນັ້ນ ເປັນທ້າວພະຍາໃຫ້ລ້ຽງລູກຍິງລູກຊາຍໄວ້ ອັນຫນຶ່ງ ຢ່າເອົາລູກສາວ ໄພ່ຟ້າຂ້າເມືອງມາເປັນນັກສະຫນົມ ໄວ້ໃຫ້ເອົາເປັນສາວຢູ່ບ້ານເມືອງ ຈຶ່ງມີສີມີແສງແລ ໃຫ້ຮັກສາຝາເມືອງນັ້ນ ເປັນທ້າວພະຍາ ໃຫ້ຕັ້ງ ແຕ່ງຂຸນດ່ານຫນຶ່ງໄວ້ຮັກສາຝາແຫນແອມກະສັດ ອ້າເສິກສັດຕູ ຈຶ່ງບໍ່ມາລ່ວງລັດຕັດແດນໄດ້ແລ ໃຫ້ຮັກສາເມກເມືອງນັ້ນ ເປັນທ້າວ ພະຍາໃຫ້ເສນາອາມາດ ໃຫ້ເອົ້າຫານາເຝົ້າຣະວັງທັດຖະບາດ ຢ່າໄດ້ຂາດສັກຍາມເທື່ນ ອັນຫນຶ່ງໃຫ້ຮັກສາເຂດເມືອງນັ້ນ ເປັນທ້າວພະຍາ ໃຫ້ຢຳສາດສະຫນາຣັດຕະນະໄຕແກ້ວທັງ 3 ຄືວ່າຢ່າໄດ້ປະຫມາດຄອງສິນ ແລະ ທານແລ ໃຫ້ຮັກສາປະຕູເມືອງນັ້ນ ເປັນທ້າວພະຍາຢ່າກະທຳປານາຕິບາດແລ ໃຫ້ຮັກສາແກ່ນເມືອງນັ້ນ ເປັນທ້າວພະຍາໃຫ້ມີສີນາດ ນ້ຳນອກຫນ້າໄມ້ ປືນໄຟ ຫອກແຫລມ ງ້າວ ໄວ້ກັບເມືອງ ອ້າເສິກສັດຕູຈຶ່ງບໍ່ມາດູຫມິ່ນດູແຄວນໄດ້ແລ.

ບັດນີ້ ຈັກຈາສິກຂາບົດ ທ້າວພະຍາທັງ 4 ກໍດີ ທັງ 8 ກໍດີແລ. ອັນຫນຶ່ງ ຊື່ວ່າສ້ອຍສາຍຄຳແລ ເຈົ້າເຮີຍ ນັກປາດເຈົ້າທັງຫລາຍ ພິຈາລະນາໃຫ້ຊອບ ຄັນບໍ່ຊອບໄດ້ເອົ້າສູ່ອະບາຍບໍ່ສົງໄສແທ້ແລ. ບັດນີ້ ຈັກຈາຣາຊາຊ້ອຍໂຊດ ຕ້ອງໂທດທຶກຫນາ ປະຣາຊິກເຖິງຕົນ ຂຸນພົນຕັດໃສ່ໂທດ ໃທຍ່ເພິງຜໍ ອັນຄ່າຄໍພັນທົກຮ້ອຍ ຢ່າໄດ້ຕົກໃຈນາ

ຖືກສັງຄາບໍ່ນ້ອຍ 8 ຮ້ອຍອັນໄຫມ ຖຸນລະໄຈຖ້ອນຖີ່ 4 ຮ້ອຍອັນ ແປງດີ ນິດສັກຄືແຍງຢູ່ ອັນຕູ່ເບົາບາງ 2 ຮ້ອຍຈາງໃຫ້ຄອບໄດ້ຍິນດີ ປາຈິຕຕິໂດຍດ່ອນ ຖີ່ຖ້ອນໂດຍພະລັນຖືກອັນຕິ ຮ້ອຍຫນຶ່ງ ປາຕິເທດ ຍິ່ງນໍາມາ ອັນວາຈາຜິດປາກ 5 ບາດທາກຄວນທຸກກົດຫອນຢ່າໄດ້ ເອົາຈົມນໍ້າ ອັນທໍາຜິດ 10 ສະຫລຶງ ເລີຍຄືງເອົາຊໍ້າ ທຸກກໍ້ານວນມາ ທຸບພາສິດຕາພໍ່າພ້ອມ 5 ສະຫລຶງນ້ອມນໍາມາ ອັນສົມມາຍໍ່ຍິ່ນ ອັນຫນຶ່ງຫົວແສນ ກໍຍັງແຄນຈັກຫນ່ອຍ ປະຣາຊິກທ້ອຍຕາມມາ ອັນຄ່າຄໍພັນສອງ ສັງຄາຣອງຮັບໄວ້ ຊອກໄຊ້ມາເສຍ ອັນໄຫມເບັ້ຍ ບິ່ນ ຫົກຮ້ອຍປິ່ນແຄນມາ ຕາແນມຫລຽວໄປ ຖຸນລະໄຈບໍ່ໄດ້ຫລີກ ອັນແປງອີກຕາມເຍີ ຂານເອີບໍ່ໄດ້ຄຽດ 3 ຮ້ອຍປຽດມານີ ນິດສັກຄີລືຂຽນຮ້ອຍ 5 ບາດຕາມເຜງ ບໍ່ໄດ້ເກງອັນຕູ່ ພໍຢູ່ພໍກິນ ປາຈິດຕິຍິນຫນ່າຍ ອັນກ່າຍລ່າຍ ເອົາ 7 ບາດ 2 ສະຫລຶງ ເທົ່າເຖົ້າຕາຍ ປາຕິເທດຢາຍຢັງ ຕາມອັນຜິດປາກ ງາມແຫລ່ງ ຫລາກ 3 ບາດສະຫລຶງງາເຣີງຣົດ ທຸກກົດອັນທໍາຜິດປາກ ຢ່າຕິດ ເປັນໂພຍ 7 ສະຫລຶງ ເຜື້ອງໂອຍອິດອ່ອນ ບໍ່ໄດ້ຢ່ອນຕາມຄອງ ໃຫ້ຕອງຕາມຣິດ ທຸບພາສິດຕາມມາ ເປັນເງິນຕາທຸກເບື້ອງ 3 ສະຫລຶງເຜື້ອງວ່າບໍ່ຫລາຍ ພໍຣາດເຊື້ອສະເຫມີກັນ ອັນຫນຶ່ງ ຫົວພັນຮ້ອຍ ບໍ່ພ້ອຍບໍ່ກາຍ ປະຣາຊິກ ອັນທຶກເຫມືອນວ່າ ອັນຄ່າຄໍ ກົດແກວດ 8 ຮ້ອຍຕາມເມືອງຢ່າໄລປະຣິດບູຣານ ສັງຄານານະຈວບ ຫລາຍຂວບໄຫມເອົາຕາມເນົາໂດຍຮີບ 4 ຮ້ອຍຖີບຕາມຄອງ ຖຸນລະໄຈຍໍຍິ່ນ ຢັ້ງຢືນສຽງແຂງ ອັນແປງພີເຜືອກ 2 ຮ້ອຍເລືອກ

ເສີຍບາຍ ນິດສັກຄືປາຍຢັ້ງຢູ່ ອັນຕູ່ຍັງບໍ່ບ່ຽງ ຮ້ອຍຫນຶ່ງທ່ຽງ ເມືອງນິດ ປາຈິດຕີອັນຕີຄ່ອຍປອງ ຕາມຄອງນັກປາດ 5 ບາດ ຕາມກະບວນ ກໍຍັງຄວນເມືອງເນດ ປາຕີເທດຊີຊັບ ຜິດປາກນັບມາ 10 ສະຫລຶງ ເງິນຕາທຸກຫມູ່ ທຸກກົດຢູ່ນຳກັນ ອັນທຳຜິດທຸກເມື່ອ 5 ສະຫລຶງ ເຊື່ອຄອງທຳ ທຸບພາສິດນຳແນບ ອັນສົມມາແທບຫົວ ບໍ່ລອນກົວທຸກສິ່ງ 2 ສະຫລຶງເຟື້ອງຊົມບານ ອັນຫນຶ່ງຂຸນກວານ ນ້ອຍໃຫຍ່ ປະຮາຊີກໃສ່ອັນຄ່າຄຳ ເອົາທີ່ນີ້ 6 ຮ້ອຍທັດ ຖືກສັງຄາ ມາສອນອັນໄຫມ ບອກເຕີນເອົາເງິນເຮົາບໍ່ໂຜດ 3 ຮ້ອຍໂທດ ເສີຍເຕັມ ຖຸນລະໄຈເລັມກະລ່າງອັນແປງອ້າງແຕ່ຄວາມ 5 ບາດ ຕາມແຕ່ງພູດ ບໍ່ໄດ້ຊູດຕີທລີ ນິດສັກຕີເຕີນປ່າວ ອັນຕູ່ທ້າວຖາກເຫດ 7 ບາດເສດ 2 ສະຫລຶງ ຊ້ຳຕື່ມ ຫນ້າວີວາ ປາຈິດຕີລາວກ່ອນ ບໍ່ໄດ້ປ່ອນທວນງາມ ອັນຕີຕາມ 3 ບາດ ທຸກຂະຫນາດຍ່ອມ 2-3 ສະຫລຶງ ທອນອີກໃຫ້ປາຕີເທດສະນີເຫລືອແຫລ່ ອັນຜິດແທ້ເຜິງກົວ 7 ສະຫລຶງເຟື້ອງມົວເມົາຍິ່ງ ທຸກກົດຈິ່ງຕາມທີ ອັນຜິດມີເຜິງກົວ 3 ສະຫລຶງເຟື້ອງປາພະລາດອ່າວກົວຜິດ ທຸບພາສິດອໍໂລມເລົ່າ ທັບບາຍ ຊ່ອຍອາຍແດ່ນາ ອັນສົມມາຫລາຍຂອບ ສະຫລຶງເຟື້ອງລູບບາຍ ຍັງປາຍລາດຖອງ ໃຫ້ຄ່ອງຕາມຄຸນ ອັນຫນຶ່ງນັກບຸນຂຸນຄ້າ ລູກຫລານ ຊາວເມືອງ ປະຮາຊີກຜ່າຍຜ່ອງ ຖືກຕ້ອງຫລາຍທ່າ ອັນຄ່າຄໍຫາກມີ 4 ຮ້ອຍຄືເງິນດວງຖືກສັງຄາ ຫວງຕື່ມ ອັນໄຫມຊື່ນຊົມເດ ສອງຮ້ອຍ ເນີນວນຫມູ່ ຖຸນລະໄຈອັນແປງ ຕາແຍງພໍຮ້ອຍ ນິດສັກຕີຍ່ອຍ ຊຸມອັນຕູ່ ທ້າວຄຸມຄວ່າ 5 ບາດ ມາແຕ່ງໃຕ້ປາຈິດຕີໄວ້ປ່ອງ

ອັນຕິຜອງພີພ່າຍ 10 ສະຫລີງ ປາຍຕາມເຫດ ປາຕິເຫດຄວາມສູງ ລຸງອ່າວດູຫລ່າ ອັນຜິດປາກທັນ 5 ສະຫລີງ ຕ້ອງຕາລ້ອມແມ່ນ ທຸກກົດແລ່ນເມືອນຳ ອັນທຳຜິດບໍ່ຊ້າ ສອງສະຫລີງເຟື້ອງຖ້າຂໍຊົມ ທຸບພາສິດດົນຖີ່ຖ້ອຍ ອັນສົມມາອ່ອຍອັງເຊີນ ເງີນສະຫລີງບາດລາດ ອັນໜຶ່ງທີ່ມະຊາດເຮົາບອກປະຣາຊິກບອກເຖິງນັບ ອັນຄ່າຄໍ ມີແຕ່ສອງຮ້ອຍແກ່ເງີນ ລັຽງສັງຄາຮຽງນຳຄົນ ຂຸນໃຫຍ່ຈົບຫລາຍ ເປີກ ຮ້ອຍໜຶ່ງເລີກບາຍເອົາຖຸນລະໄຈ ເວົ້າແຂວງອັນແປງເວົ້າ ພໍຮ້ອຍ 5 ບາດທ້ອຍແຂວນແອວ ນິດສັກຄີແຂ່ວ ແກ່ທຸກທົ້ນດີງ ເປື້ອງອັນຕູ່ເຮື້ອງໂດຍສິບ ສະຫລີງຖີບຕາມມີ ປາຈິດຕີເນື່ອງນອບ ອັນຕິຄອບນຳເຖິງ ບໍ່ໄດ້ເທີງຕຳແອ່ 5 ສະຫລີງແມ່ ນຳເສຍ ປາຕິເຫດເປັນປືນ ອັນຜິດປາກກິນມາກຖ່ອງ ສອງສະຫລີງເຟື້ອງ ປອງຕັ້ງແຕ່ງ ທຸກກົດແຍ່ງແປງອັນ ທຳຜິດບໍ່ຕິດທັນຍ່າງຍ່າຍ ສະຫລີງປາຍພໍລາດ ທຸບພາສິດຊາດເຊື້ອອັນສົມມາ ເກີດຕາມຄອງ ສອງລາດຖ່ອງ ວາງໃຫ້ນັກປາດໄດ້ສົມຄວນ ຂອງທັງມວນຝູງນີ້ ຢ່າໄດ້ຊີ້ມີກາຍ ໃຫ້ແຈກຢາຍ 3 ສ່ວນ ພູດໜຶ່ງດ່ວນເມືອຖວາຍ ພະຣາຊາບາຍໄວ້ ພູດໜຶ່ງໄດ້ເຈົ້າຄວາມພູດໜຶ່ງຕາມເຈົ້າກວ້ານ ຢ່າໄດ້ຕ້ານເກາະກຽວ ໃຫ້ຮີບທຽວປັນກັນ ທີ່ໃນແຈກໂທດ ຕັ້ງແຕ່ ປະຣາຊິກ 4 ສັງຄາ 13 ຕົວ ຖຸນລະໄຈ 2 ຕົວ ນິດສັກຄີ 30 ປາຈິດຕີ 92 ທຸກກົດ 75 ທຸບພາສິດ 4 ຕົວ ແຈກເປັນໂທດທໍ່ນີ້ແລ.

ສຸວັງລະຖາມະຫາອຸບປາລີເຖຣະເຈົ້າ ຈັກຍົກອະພິທັມມາ 7 ຄຳພີ ອອກເທດສະໜາແກ່ປານະສັດ ທັງຫລາຍແລ ໂສຕຸຊະນະ

ທັງຫລາຍ ໂຍຄາວະຈະຣະເຈົ້າ ອັນຈັກເອົາຕົວອ້ານນ້ຳອະມຸດຕະມະຫານະຄອນ ຈິ່ງຟັງຄຳສອນແຫ່ງພະຕະຖາຄະຕະ ອັນມະຫາອຸບປາລີເຖຣະເຈົ້າກ່າວມາແຕ່ພາຍຫລັງນີ້ເທີ້ນ. ຫນັງສືສ້ອຍສາຍຄຳໂພສາທິຣາດເຈົ້າຫມົດ ເທົ່ານີ້ກ່ອນແລເຈົ້າເຮີຍ.

ເຍທັມມາ ອັນວ່າອາບັດທັງຫລາຍຝູງໃດ ອາບັດທຸບພາສິດເອົ້າມາ 4 ຕົວນີ້ ຈິ່ງເປັນອາບັດທຸກກົດ ຕົວຫນຶ່ງແລ. ອາບັດທຸກກົດເອົ້າມາ 75 ຕົວ ຈິ່ງເປັນອາບັດປາຕິເທດຕົວຫນຶ່ງແລ. ອາບັດປາຕິເທດເອົ້າມາ 4 ຕົວ ຈິ່ງເປັນອາບັດປາຈິດຕີຕົວຫນຶ່ງແລ. ອາບັດປາຈິດຕີເອົ້າມາ 92 ຕົວ ຈິ່ງເປັນອາບັດນິດສັກຄີຕົວຫນຶ່ງແລ. ອາບັດນິດສັກຄີເອົ້າມາ 30 ຕົວ ຈິ່ງເປັນອາບັດຖຸນລະໄຈຕົວຫນຶ່ງແລ. ອາບັດຖຸນລະໄຈເອົ້າມາ 2 ຕົວ ຈິ່ງເປັນອາບັດສັງຄາຕົວຫນຶ່ງແລ. ອາບັດສັງຄາເອົ້າມາ 13 ຕົວ ຈິ່ງເປັນອາບັດປະຣາຊິກຕົວຫນຶ່ງແລ.

ປະຣາຊິກ 404 ບາດ ສັງຄາ 202 ບາດ ຖຸນລະໄຈ 100 ປາຍບາດ ປາຈິດຕີ 6 ບາດ ທຸກກົດຊິກ ເຫລືອຫນຶ່ງ ທຸບພາສິດເຟືອງໃນຫນຶ່ງຊັກ ເຫລືອນັ້ນໃຫ້ເປັນອັນເຟືອງອັນຫຣຸນ ເອົ້າດອກດອກໄມ້ ສົມມາກັບກໍເປັນແລ. ທ່ວາ ໃຫ້ຫລືງດູຍັງກາລະແລ ປະເຜດວັດຖຸອັນຫນັກອັນເບົາແລ ອາທິກອນຄວາມເອົາກ່ອນເທີ້ນ. ຜີວ່າຍັງຄວນຕັດແທ້ຈິ່ງຕັດຕາມຄອງໃນພະເຈົ້າຕັ້ງໄວ້ນີ້ເທີ້ນ. ນັກປາດແລະ ອຸນພິຈາລະນາ ທັງຫລາຍ ຝູງມີພະຫຍາເຜີງຮູ້ດັ່ງນີ້ເທີ້ນ. ວັດຖຸອັນອອກໃນສະຫມັນປາຕິໂມກຂະສັງວະຣະສິນພຸ້ນແລ. ສະບັບ

ໜຶ່ງນັ້ນ ປະຣາຊິກ 400 ນ້ຳ 6 ສັງຄາ 200 ນ້ຳ 6 ນິດສັກຄີ 100 ນ້ຳ 6 ປາຈິດຕີ 5 ບາດ ນ້ຳ 6 ປາຕິເທດ 10 ສະຫລືງ ນ້ຳ 6 ປາຕິເທດ 10 ສະຫລືງ ນ້ຳ 6 ທຸກກົດເຟືອງໜຶ່ງ ທຸບພາສິດ ລຳຖ່ອງ ຖຸນລະໄຈຮອງຄໍສັງຄາ 104 ບາດ ນ້ຳ 6 ແລ. ບຸກຄະລະ ຜູ້ໃດມີໃຈແຂງຂະໜາດ ບໍ່ໂດຍອາດຍາ ພະຣາຊາກ່າວຟ້ອງ ຖືກ ຕ້ອງອາປັດຕິຍາ ປະຣາຊິກຕົວຕົ້ນບໍ່ພົ້ນບໍ່ກາຍອັນໜຶ່ງ 6 ປີ ປາຕິຕົນ ພະຍາເຈົ້າ ຢ່າປາກເວົ້າຕຽນທ່ານດີຫລີ ປະຣາຊິກມີຕົວ 2 ຖືກເນື້ອ ອັນໜຶ່ງຢ່າອ່າວລັກໂລບເອົາຂອງ ພະຈອມທອງພະຍາຫລວງ ທ່ານໄທ້ ປະຣາຊິກໄດ້ຕ້ອງຖືກຕິດຕາມ ຖືກຕົວ 3 ດີຫລີນາ. ອັນໜຶ່ງ ຢ່າກ່າວເວົ້າຕົວແປດນາງສະໜົມ ຢ່າເຊີຍຊົມເມຍພະຍານອນມີ ປະຣາຊິກ 4 ຖືກຕ້ອງເຖິງຕົນ ອັນໜຶ່ງໄດ້ຜ່ຕົນໄປລົບເສິກໃຫຍ່ ຢ່າປະໄປ່ພະຍາເຈົ້າແລ່ນຄືນ ແຜ່ນດິນກິນຕົນບໍ່ຊາ ປະຣາຊິກ 5 ຖືກຕ້ອງຕິດຕົນ ອັນໜຶ່ງໄດ້ຊຸມກັບຄວາມເມືອງແລ້ວ ພາກໜີ ຈາກທັບໄປຮອດຊານ ຢ່າພາງານມ້າງສະໜຍອງພານແກ່ທ່ານ ຄຽດແທ້ພົນ້ຳຕາຕົກ ປະຣາຊິກ 6 ເຖິງຕົນທັດທ່ຽງ ອັນໜຶ່ງຢ່າບ່ຽງ ຖ້ອຍຂຽນຂີດ ແປງຕາຂຽນໄປຫາຂ້າເສິກພາຍນອກ ບໍ່ບອກ ເຈົ້າພະຍາໃນເມືອງ ຍີນເຄືອງໃຈຄອຍທົວດ່າ ຖືກປະຣາຊິກ 7 ຕົວຕົນບໍ່ຄາດ ອັນໜຶ່ງຢ່າຍຸຍາດພົບຈາກພະຍຸບຸນ ເມື່ອພາຍລຸນ ເອົາຕົນວຽນແວດ ປະຣາຊິກ 8 ເຖິງເນື້ອບໍ່ນານ ອັນໜຶ່ງການເມືອງ ມີນາເຖິງຮ້ອນເຮົ້າ ໃຈເລ່ງໆມາບອກຮອດເຮືອນ ຢ່າບິດເບືອນບໍ່ເມື່ອ ຫາເຈົ້າ ຖືກປະຣາຊິກ 9 ທັດທ່ຽງ ຈຶ່ງນຳຣາຊາພົ້ນອ້ານເສຍບໍ່ມີໂທດ

ດູຊ້ອຍໂຊດທາຍບາບກຳເວນແລເຈົ້າເຮີຍ. ອັນນີ້ປະຣາຊີກເສນາແລ. ປະຣາຊີກຍີງຊາຍ ຍີງ 2 ຕຳລຶງ ຊາຍ 4 ຕຳລຶງ ປະຣາຊີກຖ້ອນ 2 ຍີງ 3 ຕຳລຶງ ຊາຍ 6 ຕຳລຶງ ປະຣາຊີກຖ້ອນ 3 ຍີງ 4 ຕຳລຶງ ຊາຍ 8 ຕຳລຶງ ປະຣາຊີກຖ້ອນ 4 ຍີງ 5ຕຳລຶງ ຊາຍ 10 ຕຳລຶງ ປະຣາຊີກຖ້ອນ 5 ຍີງ 6 ຕຳລຶງ ຊາຍ 12 ຕຳລຶງ ປະຣາຊີກຖ້ອນ 6 ຍີງ 7 ຕຳລຶງ ຊາຍ 14 ຕຳລຶງ ປະຣາຊີກຖ້ອນ 7 ຍີງ 8 ຕຳລຶງ ຊາຍ 16 ຕຳລຶງ ປະຣາຊີກຖ້ອນ 8 ຍີງ 9 ຕຳລຶງ ຊາຍ 18 ຕຳລຶງ ປະຣາຊີກຖ້ອນ 9 ຍີງ 10 ຕຳລຶງ ຊາຍຊົ່ງໜຶ່ງ.

ບັດນີ້ ຈັກກ່າວ ທ້າວພະຍາຊ້ອຍໂຊດ ໄດ້ຕ້ອງໂທດອັນທຶກປະຣາຊີກເຖີງຕົນ ຂຸນພົນຕັດໃສ່ໂທດໃຫ້ເພີງພໍ ອັນຄ່າຄໍພັນທຶກຮ້ອຍຢ່າໄດ້ຕົກໃຈນາ ຖືກສັງຄາບໍ່ນ້ອຍ 800 ເປັນອັນໄໝ ຖຸນລະໄຈຖ້ອນຖີ່ 400 ອັນແປງ ນິດສັກຄີແຍງຢູ່ ອັນຕູເບົາບາງ 200 ວາງໃຫ້ໄດ້ແລ້ວເລົ່າຍີນດີ ປາຈິດຕີໂດຍດ່ວນ ຖ້ອນຖີ່ຖືກອັນຕີ 100 ປາຕີເຫດຍີ່ນມາ ອັນວາຈາຜີດປາກ 5 ບາດທາກຄວນ ທຸກກົດທວນວ່າຍາໄດ້ເອົາຈົມນ້ຳ ອັນທຳ 10 ສະຫລຶງ ເລີຍດຶງເອົາຊ້ຳທຸກກ້ຳມວນມາ ທຸບພາສິດຕາພ່ຳພ້ອມ 5 ສະຫລຶງນ້ອມນຳມາ ອັນສົມມາຍຍີ່ນ ອັນໜຶ່ງຫົວໝື່ນຫົວແສນ ຍັງແຄນຈັກສະຫນ້ອຍ ປະຣາຊີກທ້ອຍຕາມມາ ອັນຄ່າຄໍພັນ 2 ສັງຄາຮອງຮັບໄວ້ ຊອກໄຊ້ມາເສຍອັນໄໝເບັ້ຍບີ່ນ 60 ປີ່ນແກມຕາແນນຫລຽວໄປ ຖຸນລະໄຈຍາໄດ້ຫລີກ ອັນແປງອີກກໍຕາມເຍີ ຂານໄດ້ຄຽດ 300 ຢຽດຢານີ ນິດສັກຄີ

ລືຄາດ 105 ບາດ ຢ່າໄດ້ຂາດ ເກ່ງອັນຕູ່ ຜີຢູ່ຜີກິນ ປາຈິດຕີ ຍັງໜາຍ ອັນຕີກາຍລ່ວງເອົາ 7 ບາດ 2 ສະຫລຶງເທົ່າເຖິງຕາຍ ປາຕິເຫດຢ່າຝາກຕາມ ອັນຜິດປາກງາມແຫລວຫລ້າ 3 ບາດ 3 ສະຫລຶງ ຖ້າເຮືອງຣົດ ທຸກກົດອັນທຳຜິດ ຢ່າໄດ້ຕິດເປັນພະຍາດ 10 ສະຫລຶງເຝືອງໂອຍອິດອ່ອນ ບໍ່ໄດ້ຢ່ອນຕາມຄອງ ໃຫ້ຕອງ ຕາມຣີດ ທຸບພາສິດອັນສົມມາ ເຖິງຕາທຸກເບື້ອງ 3 ສະຫລຶງເຝືອງ ວ່າບໍ່ຫລາຍ ບໍ່ບາຍຜິລາດ ເຊື້ອຊາດສະເໜີກັນ. ອັນໜຶ່ງຫົວພັນ ຫົວຮ້ອຍ ບໍ່ພ້ອຍປະຣາຊີກເໝືອນວ່າ ອັນຄ່າຄຳກວັດແກວ່ງ 8 ຮ້ອຍ ຕາມເປິງ ຢ່າເຫລີງຢ່າລະ ປະຣີດບູຣານ ສັງລານານຈອບ ຫລາຍ ຂວບໄຫມເອົາ ຕາມເນົາໂດຍຣີບ 4 ຮ້ອຍຖີບຄາຄໍ ຖຸນລະໄຈ ຍໍທື້ນເທົ່ງ ສຽງແຂງແປງເກີກ 2 ຮ້ອຍເລີກເລີຍບາຍ ນິດສັກຄີ ຢາຍຢັງ ອັນຕູ່ຍັງບໍ່ບ່ຽງ ຮ້ອຍໜຶ່ງທ່ຽງເມືອງນິດປາຈິດຕີ ອັນຕີ ຄ່ອນຜີປອງ ຕາມຄອງນັກປາດ 5 ບາດຕາມກະບວນ ກໍຍັງຄວນ ເມືອງເນດ ປາຕິເຫດຊີຊັບ ອັນຜິດປາກນັບມາ 10 ສະຫລຶງ ຕາທຸກໝູ່ ທຸກກົດຢູ່ດອມກັນ ອັນທຳຜິດທຸກເມື່ອ 5 ສະຫລຶງ ເຊື່ອ ຄອງທຳ ທຸບພາສິດນຳແນບ ອັນສົມມາແທບຫົວ ຢ່າລວນກົວທຸກ ເບື້ອງ 2 ສະຫລຶງເຝືອງຈົ່ງຊົມບານ ອັນໜຶ່ງຂຸນກວານນ້ອຍໃຫຍ່ ປະຣາຊີກໃສ່ອັນຄ່າຄໍ ເອົາທໍ່ນຳ 6 ຮ້ອຍທັດ ສັງລານັດສອກໃສ່ ອັນໄໝ ບອກເຕີນເອົາເງິນເຮົາຢ່າໂຜດ 3 ຮ້ອຍໂກດເຕັນ ຖຸນລະໄຈ ເລັ່ນກ່າງ ອັນແປງອ້າງແຕ່ຄວາມ ຮ້ອຍ 5 ບາດຕາມແບ່ງພູດ ບໍ່ໄດ້ຊູດດີຫລີ ນິດສັກຄີເຕີນປ່າວໄດ້ 7 ບາດ 2 ສະຫລຶງ

ປາຈິດຕີຟາດກ່ອນ ບໍ່ໄດ້ຢ່ອນຫອນງາມ ຂັນຕີຕາມ 3 ບາດ ທຸກຂະຫນາດຍ້ອນ 2-3 ສະຫລຶງທອນຈິ່ງແລ້ວ ເຈົ້າແກ້ວດວງດີ ປາຕິເທດມີເຫລືອແລ່ ຂັນຜິດປາກແທ້ ເພິງກົວ 10 ສະຫລຶງ ນົວເນົາຍິ່ງຄາມ ທຸກກົດຕາມຕິດ ຂັນທຳຜິດບໍ່ຍາວ ກ່າວ 3 ສະຫລຶງ ເຟື້ອງປາຍລາດ ກົວຜິດ ທຸບພາສິດຂໍໂຍມ ເລົ່າໂລມຫຍັບຍ້າຍ ຊ່ອຍອາຍແດ່ນາ ຂັນສົມມາຫລາຍຊຸບ ສະຫລຶງເຟື້ອງລຸບປາຍ ລາດຖ່ອງ ໃຫ້ຕອງຕາມຄຸນ. ອັນຫນຶ່ງນັກບຸນຂຸນຄ້າ ລູກຫລ້າຊາວ ເມືອງ ປະຊາຊີກເຮືອງຜາຍຜ່ອງ ຖືກຕ້ອງຫລາຍຂັນຄ່າຄໍຫາກມີຄ່າ 4 ຮ້ອຍຄີເງິນດວງ ຖືກສັງຄາຫວງຕື່ນ ຂັນໄຫມຊື່ນຊົມເດ 2 ຮ້ອຍເນມອນຫມູ່ ຖຸນລະໄຈຂັນແປງຕາມແຍງພໍຮ້ອຍ ນິດສັກຄີຊຸມ ຂັນຕູຄຸມ 5 ບາດມາແຕ່ໄດ່ ປາຈິດຕີໄງ້ປ່ອງ ຂັນຕີຜ່ອງຜີພາຍ 10 ສະຫລຶງຢາຍຕາມເຫດ ປາຕິເທດຄວາມຟູງລຸງອ່າວດູຫລາກ ຂັນຜິດປາກທັງປວງ 5 ສະຫລຶງຕວງຄອບແມ່ນ ທຸກກົດແລ່ນເມື່ອນຳ ຂັນທຳຜິດບໍ່ຊ້າ 2 ສະຫລຶງເຟື້ອງຖ້າຂໍຊົມ ທຸບພາສິດຄົນຖ່ອຍ ຂັນສົມມາອ່ອຍເຊິງເງິງ ເງິນ 10 ສະຫລຶງປາຍລາດ. ອັນຫນຶ່ງ ຄົນທີນະຊາດເຮົາບັງ ປະຊາຊີກນອກເຖິງມັນ ຂັນຄ່າຄໍມີແດ່ 2 ຮ້ອຍ ແກ່ເງິນລຽງ ສັງຄາຣຽງທາຄົບຂັນໄຫມ ຈົບຫລາຍເປີກຮ້ອຍຫນຶ່ງ ເລີກບາດເອົາ ຖຸນລະໄຈເຮົາເຈົ້າຂັນແປງ ເຈົ້າບໍ່ປ່ອຍ 5 ບາດ ທ້ອຍແຂວນແອວ ນິດສັກຄີແຊວເສບແອ່ງ ເປັນຂັນຕູ່ແຮງໂດຍຮີບ 10 ສະຫລຶງຖີບຕາມ ປາຈິດຕີເນື່ອງນອບ ຂັນຕີຕອບນຳເຖິງ ບໍ່ໄດ້ເທິງຕຳແອ່ 5 ສະຫລຶງແນ່ນາເສຍຕາມເຫດ ປາຕິເທດ

ເປັຍປີ່ນຟ້າວ ອັນຜິດປາກລ້າວບໍ່ດີ 2 ສະຫລີງເຟື້ອງກຸມຕັ້ງແຕ່ງ ທຸກກົດແຫ່ງອັນທຳຜິດ ທຸດຈະຣິດຍ່າງຍ່າຍ ສະຫລີງປາຍພິລາດ ທຸບພາສິດຊາດເຊື້ອ ອັນສົມມາເກື້ອຕ່າງ 2 ລາດຖອງວາງ ໃຫ້ນັກປາດໄທ້ສົມຄວນ ຂອງທັງມວນຝູງນີ້ ຢ່າໄດ້ຊີ້ມີກາຍ ໃຫ້ແບ່ງບາຍ 3 ສ່ວນ ພູດໜຶ່ງດ່ວນເມືອຖວາຍພະຣາຊາບາຍໄວ້ ພູດໜຶ່ງໄດ້ເຈົ້າຄວາມ ພູດໜຶ່ງຕາມເຈົ້າກວ້ານ ຢ່າໄດ້ຕ້ານເກາະກ່ອງ ໃຫ້ຮີບຫ່ອງປັນກັນເທາະເນີ. ອັນນີ້ໂລງແຈກໂທດແລເຈົ້າເຮີຍ.

ຜີວ່າ ພິກຂຸຕ້ອງອາບັດປະຣາຊິກ ທັງ 4 ຕົວໆໃດຕົວໜຶ່ງ ຂາດຈາກພິກຂຸແລ ທົນໂລກໄພ່ຊາວເມືອງຖືກອັນຄ່າຄໍ 4 ຮ້ອຍ ພິກຂຸຕ້ອງອາບັດສັງຄາທິເສດ 13 ຕົວໆໃດຕົວໜຶ່ງກໍດີ ບໍ່ສຳແດງອາບັດກັ້ງ ບັງໄວ້ສິ້ນຣາຕີເທົ່າໃດ ເພິ່ງຢູ່ປະຣິວາດສະກຳສິ້ນຣາຕີເທົ່ານັ້ນແລ ເພິ່ງຢູ່ມານັດ 6 ຄືນ ຈິ່ງອັບພານແລ ໃຫ້ອົບນ້ຳ 100 ຫາບ ອົບຊາຍ 100 ໃສ່ສົມ ໃສ່ວັດ ໃສ່ເຂດຈິ່ງພົ້ນໂທດແລ. ທົນໂລກໄພ່ຊາວເມືອງຖືກອັນຕີ 100. ພິກຂຸຕ້ອງອາບັດນິດສັກຄີປາຈິດຕີ ໃຫ້ເທດສະໜາອາບັດເສຍ ແລ້ວໃຫ້ອົບນ້ຳ 50 ຫາບ ຊາຍ 50 ຫາບ ຈິ່ງພົ້ນໂທດແລ. ທົນໂລກໄພ່ຊາວເມືອງຖືກອັນແປງ 5 ບາດແລ. ພິກຂຸຕ້ອງອາບັດປາຕິເທດສະນີ ໃຫ້ເທດສະໜາອາບັດເສຍແລ ໃຫ້ອົບນ້ຳ 25 ຫາບ ຊາຍ 25 ຫາບ ຈິ່ງພົ້ນໂທດແລ. ທົນໂລກຊາວເມືອງຖືກອັນຜິດປາກ 2 ບາດເຟື້ອງແລ. ພິກຂຸຕ້ອງເສກຂິຍະວັດອາບັດ ທຸກກົດໃຫ້ເທດສະໜາອາບັດເສຍແລ ໃຫ້ອົບນ້ຳ 12 ຫາບ ຊາຍ 12 ຫາບ ຈິ່ງພົ້ນໂລດແລ. ທົນໂລກຊາວເມືອງ

ຖືກອັນສົມມາບາດບັກແລ. ພິກຂຸຕ້ອງອາບັດທຸບພາສິດ ໃຫ້ເທດ ສະໜາອາບັດເສຍແລ້ວ ໃຫ້ອົບນໍ້າ 5 ທາບ ຊາຍ 5 ທາບ ຈິ່ງພົ້ນ ໂທດແລ. ທົ່ນໂລກຊາວເມືອງຖືກອັນສົມມາ 2 ບັກຊິກແລ ມີແຕ່ເອົ້າຕອກດອກໄມ້ເຜີ້ງທຽນສົມມາຄາຣາວະ ກໍເປັນ ທໍ່ວ່າໃຫ້ ຫລິງດູອາທິກອນ ຖ້ອຍຄໍາແຫ່ງຂາທັງສອງອັນຜິດກັນ ພາກັນເອົ້າ ມາສູ່ຂຸນພິນິດໄສ ໃຫ້ພິຈາລະນາຕາມຖ້ອຍຄໍາ ແຫ່ງຂາທັງສອງ ກ່າວນັ້ນ ແຈ້ງແຈບແລ້ວ ຈິ່ງໃຫ້ໃສ່ຕາມອັນໂທດ ຕາມໜັກຕາມເບົາ ນັ້ນເທີ້ນ. ອັນໂທດຜູ້ຍິງຊາວເມືອງກໍຜ່າຖ່ອງເອົາ ອັນໂທດຜູ້ຊາຍ ຊາວເມືອງນັ້ນແລ. ຜິວ່າຜູ້ຍິງມີຜົວ ໃຫ້ຜ່າຖ່ອງເອົາອັນໂທດຜົວນັ້ນ ຊູ່ອັນເທີ້ນ. ອັນຄ່າຄໍ ແລະ ອັນໂທດທັງຫລາຍນັ້ນ ຂຶ້ນຕາມປະດາຍົດ ປະດາສັກ ໂທດບໍ່ມີເຈົ້າປາລິຍົກໂທດໃສ່ ໃຫ້ເປັນອັນສົມມາ ເຈົ້າປາລິ ກໍຈັກໄດ້ວິບາກ ຢູ່ໃນນະຣົກພັນປີ ຜິວ່າຄວາມມັນພໍເຖິງອັນສົມມາ ເຈົ້າປາລິຍົກຂຶ້ນໃຫ້ເປັນອັນຜິດປາກ ເຈົ້າປາລິກໍຈັກວິບາກຢູ່ໃນນະຣົກ 3 ພັນປີ. ຜິວ່າຄວາມມັນພໍເຖິງຜິດປາກ ເຈົ້າປາລິຍົກຂຶ້ນໃຫ້ເປັນ ອັນແປງ ເຈົ້າປາລິກໍຈັກວິບາກຢູ່ໃນນະຣົກໄດ້ໝື່ນປີ. ຜິວ່າຄວາມມັນ ພໍເຖິງອັນແປງ ເຈົ້າປາລິຍົກຂຶ້ນໃຫ້ເປັນອັນຕີ ເຈົ້າປາລິກໍຈັກໄດ້ ວິບາກ ຢູ່ໃນນະຣົກໄດ້ແສນປີ. ຜິວ່າຄວາມມັນພໍເຖິງອັນຕີ ເຈົ້າປາລິ ຍົກໃຫ້ເປັນອັນໄໝ ເຈົ້າປາລິກໍຈັກໄດ້ວິບາກຢູ່ໃນນະຣົກໄດ້ 4 ແສນປີ. ຜິວ່າຄວາມມັນພໍເຖິງອັນໄໝ ເຈົ້າປາລິຍົກຂຶ້ນໃຫ້ເປັນ ອັນຄ່າຄໍ ເຈົ້າປາລິກໍຈັກໄດ້ວິບາກໃນນະຣົກ 8 ແສນປີ. ຜິວ່າຄວາມ ພໍພຽງໃດໃຫ້ວ່າພໍພຽງນັ້ນເທີ້ນ. ປະການໜຶ່ງ ບຸກຄະລະຜູ້ໃດ

ຍັງເປັນໄພຍາກັບຂາຄວາມດ້ວຍໃຈ ກໍໃຫ້ມີວິບາກຢູ່ໃນນະຣົກ 3 ຊາດ ແລ້ວຈັກໄດ້ສະເຫວີຍທຸກຢູ່ດອມນາຍກຸມພັນ ເປັນພັນປາຍ 3 ຊາດ ນາຍກຸມພັນຈິ່ງໃຫ້ຫນີທັ້ນແລ. ອັນນີ້ ໄດ້ຊື່ວ່າໄພຍາກັບຂາຄວາມໃນໃຈນັ້ນແລ. ຜີວ່າໄດ້ໄພຍາອອກປາກກັບຄວາມ ກໍຈັກໄດ້ທົ່ງວິບາກຢູ່ໃນນະຣົກ 6 ຊາດ ກໍຈັກໄດ້ອອກມາເຫວີຍທຸກດອມນາຍກຸມພັນ ເປັນພັນປາຍ 6 ຊາດ ແລ້ວນາຍກຸມພັນຈິ່ງໃຫ້ຫນີທັ້ນແລ. ອັນນີ້ໄດ້ຊື່ວ່າ ໄພຍາອອກກັບຂາຄວາມແລ. ກ່າວທັມມະຈັກອານາຈັກ ກໍແລ້ວເທົ່ານີ້ກ່ອນແລເຈົ້າເຮີຍ.

| | | |
|---|---|---|
| - ຣາຊະກະກຸນກິນເມືອງແສນຂຸນຫມື່ນ | ຂັນຄ່າຄໍ | 1800 |
| - ຣາຊະກະກຸນທົວເສິກ | ຂັນຄ່າຄໍ | 1600 |
| - ເຈົ້າທົວແສນທ້າວເພຍຫມື່ນ | ຂັນຄ່າຄໍ | 1200 |
| - ເຈົ້າທົວພັນຂຸນພັນ | ຂັນຄ່າຄໍ | 800 |
| - ຂຸນກວານທ້າວເພຍໃນທໍານຽມ | ຂັນຄ່າຄໍ | 600 |
| - ຊາວເມືອງ ແລະອາລັນດົກ | ຂັນຄ່າຄໍ | 400 |
| - ຄົນທຸກໄຮ້ ແລະ ຂ້າທ່ານ | ຂັນຄ່າຄໍ | 200 |
| - ບໍ່ໃຊ່ກະກຸນກິນເມືອງຂຸນຫມື່ນ | ຂັນຄ່າຄໍ | 600 |

ບັດນີ້ ຈັກຈາຂັນຄ່າຄໍທ້າວເພັຍແສນຫມື່ນຂ້າໄພນ້ອຍທ່ານແລອາລັນດົກ ອັນມີໃນກໍາພີສຸວັນນະຣັງສີ ມີດັ່ງນີ້ແລ.

- ມີເມືອງທັງ 4 ຂັນຄ່າຄໍ 200

- ແສນແທນຫມື່ນໄຊນ້ອຍ
- ພັນແສນສັນຫມື່ນກັບພອງຊຽງ - 3 ຄົນນີ້ເທົ່າກັບຂັນ
- ແສນຂັນແອກ ຄ່າຄໍຄົນລະ 1000
- ຫມື່ນກັບພອງເມືອງຊຽງ
- ຫມື່ນກັບພອງເມືອງກັດ - 4 ຂຸນນີ້ຄ່າຄໍ
- ຫມື່ນກັບພອງເມືອງຄັງ 600
- ຫມື່ນກັບພອງເມືອງໂນ
- ຈ່າເມືອງທັງ 4 ຂັນຄ່າຄໍ 500
- ຫມື່ນພອງກັບເມືອງແສນ ຂັນຄ່າຄໍ 600
- ຂຸນກາງທໍແສນພອກ ຂັນຄ່າຄໍ 500
- ຫມື່ນຊ້າງຫລວງ ຂັນຄ່າຄໍ 800
- ຫມື່ນມຸງຄຸນ ຂັນຄ່າຄໍ 800
- ຫມື່ນກັບນາຍຫລວງ ຂັນຄ່າຄໍ 800
- ຫມື່ນຊ້າງທຽມນາຍຫລວງ ຂັນຄ່າຄໍ 600
- ຫມື່ນເດັກຊາຍຫມື່ນສານ ຂັນຄ່າຄໍ 600
- ທຽມຂວາທຽມຊ້າຍ ຂັນຄ່າຄໍ 600
- ນາງເມືອງທໍກອງຂໍ່ທໍໄຊ ຂັນຄ່າຄໍ 500
- ເພັຍຂັນທໍຮັບກວານນ້ຳກິນ ຂັນຄ່າຄໍ 500

- ພູມແຫລາກວານດາບທຽມເມືອງແທນ ເມືອງນາງເມືອງທໍ ຫມື່ນເພຍ ຫມື່ນພອກຫມັ້ຽງ ຄຸມຫນ້ານາຍພາດຄ້ອງ ຫມື່ນເສບ ກວານກອງຊະບັດໄຊ ກວານທວານນາ ທັງມວນນີ້ ຂັນຄ່າຄໍ 500

- ພູມກອກພູມບາວ, ໝີ່ນຂອງ ໝີ່ນເສືອ, ໝີ່ນຮັບໝີ່ນຮານ, ໝີ່ນນ້ຳໝີ່ນອັບ, ໝາກດາຍໄຊກອນນ້ອຍ, ໝີ່ນຮັບໝີ່ນດານ ໝີ່ນແຜນເຫລົ່ານີ້ ອັບຄ່າຄໍ 600

- ພູມໄຊກອງໜ້າຫົວງາວໜ້າຫລັງ ອັບຄ່າຄໍ 500
- ຫໍງົ້ວພູມສວດຊຽງແທນ ອັບຄ່າຄໍ 500
- ພັນທຽມຊາຍ ອັບຄ່າຄໍ 600
- ກັນນາດໃນກັນນາດນ້ອຍ ອັບຄ່າຄໍ 500
- ຈ່າຊັ້ນຈ່າຫລັກຫໍແສງ ອັບຄ່າຄໍ 500
- ຫໍໄຕຈ່າເຜີ້ງ ອັບຄ່າຄໍ 500
- ພູມທຽມ ອັບຄ່າຄໍ 500
- ຈ່າພູມທຽມ ອັບຄ່າຄໍ 500
- ໝີ່ນຍາມໝີ່ນຊຽງຄຸງໝີ່ນຈາໝີ່ນຕົວ ອັບຄ່າຄໍ 600
- ຊ່າງທາງຊ່າງເປີງຊ່າງເຫລືອກສາຫອນ ອັບຄ່າຄໍ 500
- ໝີ່ນເກິງໝີ່ນເສງໝີ່ນຮາດ
  ໝີ່ນໂນໜອກ ອັບຄ່າຄໍ 600
- ໝີ່ນເມືອງຈວນໝີ່ນເມືອງມວນ ອັບຄ່າຄໍ 600
- ໝີ່ນຊົນໝີ່ນນ້ອຍ ອັບຄ່າຄໍ 800
- ໝີ່ນກາຍໝີ່ນບໍ່ໝີ່ນອອມໝີ່ນຈາ
  ໝີ່ນເມືອງອາວຫາ ອັບຄ່າຄໍ 600
- ໝີ່ນບ້ານນອກຂອກນາ ອັບຄ່າຄໍ 500
- ພະນອງພັນນອງກວານບ້ານນອກ

ຂຸມແຄວັນຂຸມຈາຫານນ້ອຍ

ຂຸມຄ້າຊາວຂາຍ ອັນຄ່າຄໍ 400

- ໄພ່ ແລະ ຂ້ອຍອັນໂຕຊາດ ອັນຄ່າຄໍ 300

- ຝູງອາລັນດົກ ອັນຄ່າຄໍ 400

ອັນຄ່າຄໍມີໃນກໍາພິຣາຊະສາດຫລວງ ມີດັ່ງນີ້ແລ ເພິງຮູ້ເທີ້ນ.

- ຣາຊະກະກຸນອັນຄ່າຄໍ 600 ອັນໄຫມ 800 ອັນຕີ 400

- ຫົວຫມື່ນຫົວແສນ ອັນຄ່າຄໍ 200 ອັນໄຫມ 600 ອັນຕີ 300

- ຫົວພັນຫົວຮ້ອຍ ອັນຄ່າຄໍ 800 ອັນໄຫມ 400 ອັນຕີ 200

- ຂຸນກວານນ້ອຍໃຫຍ່ ອັນຄ່າຄໍ 100 ອັນຕີ 500

- ຂຸມຄ້າຊາວເມືອງ ອັນຄ່າຄໍ 200 ອັນແປງ 200 ອັນແປງ 5 ບາດ ອັນໄຫມ 200 ອັນຕີ 100

- ໄພ່ອາລັນດົກໄພ່ທີນະຊາດ ອັນຄ່າຄໍ 200 ອັນແປງ 150 ອັນແປງ 2 ບາດເຟື້ອງອັນໄຫມ 100 ອັນຕີ 5 ບາດ ອັນແປງ 7 ບາດເຟື້ອງ ເປັນຂຸມໃຫ້ພິຈາລະນາຕົງທີ່ດູເທີ້ນ.

ອັນຜິດປາກ 100

ອັນຜິດປາກ 7 ບາດເຟື້ອງ

ອັນຜິດປາກ 50

ອັນຜິດປາກ 3 ບາດບັກ

ອັນຜິດປາກ 2 ບາດເຟື້ອງ ອັນສົມມາ 2 ບາດເຟື້ອງ

ອັນຜິດປາກ ບາດບັກ ອັນສົມມາ 2 ບາດບັກຊີກ

ອັນສົມມາ 3 ບາດບັກ　　　ອັນສົມມາ　ບາດບັກ

ອັນສົມມາ 2 ບາດເພື່ອງ　　　ອັນສົມມາ 2 ບັກຊີກ

ໃຫ້ພິຈາລະນາດູເຫັນມີຫລາຍຖານແລ ຖານຫນຶ່ງແກ່ ຖານຫນຶ່ງອ່ອນດາຍ ຖານຫນຶ່ງອັນສົມມາ 2 ບາດເພື່ອງ ຖານຫນຶ່ງ 2 ບັກຊີກ ຖານຫນຶ່ງບາດບັກ ຖານຫນຶ່ງ 3 ບັກສ້ຽວ ຖານຫນຶ່ງ 2 ບັກຊີກ ຖານຫນຶ່ງບັກສ້ຽວແລ.

ທີ່ນີ້ ຈັກວ່າຍັງບຸກຄະລະຜູ້ເປັນໃຫຍ່ ຄວນຮໍາເພີງພິຈາລະນາດູຍັງບຸກຄະລະ ຜູ້ມີໂທດ ຈຶ່ງຄວນໃສ່ສິນໄຫມ ຜູ້ບໍ່ມີໂທດບໍ່ຄວນໃສ່ສິນໄຫມ ບໍ່ຊອບທໍາແລ ມີໃນພະທໍາພີທໍາມະບົດ ອັນພະພຸດທະເຈົ້າຫາກເທດສະຫນາບັນຍັດໄວ້ວ່າ:

ອະທິດໂຖ ປະຣະໂຕໂທສັງ ອະນຸງຖຸລານີສສັພພະໂສ

ອິສສະໂຣປະນະໂຍທັນທັງ ສາມັງອັປປະຕິເວກຂິຍາຕິ ດັ່ງນີ້ປະນະດ້ວຍແທ້ ໂຍບຸຄຄະໂລ ອັນວ່າບຸກຄະລະຜູ້ໃດ ອິສສະໂຣອັນອັນເປັນເຈົ້າເປັນໃຫຍ່ ອະທິດໂຖອັນບໍ່ເຫັນໂທສັງຍັງໂທດ ອະນຸຖຸນລານີອັນນ້ອຍອັນໃຫຍ່ ປະຣະໂຕແຫ່ງທ່ານ ສັພພະໂສ ດ້ວຍປະການທັງມວນ ໂສປຸຄຄະໂລອັນບຸກຄະລະຜູ້ນັ້ນ ອັປປະຕິເວກຂິຍະ ບໍ່ພິຈາລະນາໃຫ້ແຈ້ງສາດ້ວຍຕົນ ນະເທຕິ ກໍບໍ່ຄວນໃສ່ທັນທັງຍັງສິນໄຫມປະຣັສສະແຫ່ງທ່ານຜູ້ອື່ນແລ.

ຜີວ່າບຸກຄະລະຜູ້ໃດ ມາເລົ່າຄໍາຂ້າງດຽວບໍ່ຄວນຟັງ ໄດ້ຍິນຄໍາສອງເບື້ອງກ່ອນຈຶ່ງຄວນຟັງ ເປັນດັ່ງພະຍາພົມມະທັດເມື່ອກ່ອນຟັງຄໍາເບື້ອງດຽວລວດຈັກຕີເສດຖີເສຍຍາມນັ້ນ ໂພທິສັດເຈົ້າເປັນ

ອາມາດ ກໍຫ້າມພະຍາດ້ວຍຄາຖາວ່າ: ອະວິທັນຕາ ທະໂຕຕິພາສີສຸງ ເຊຕວາ ຊີຕາຕິ ພາສັນຕິ ປຸພພະທະຂາຍີໂນ ຣາຊະເອກະທັຕຕັງນະ ສະປະເຫ ດັ່ງນີ້ ມະຫາຣາຊະອ້າໄທ້ມະຫາຣາຊເຈົ້າ ອະວິທັນຕາ ອັນຂ້າຕີຍັງທ່ານ ພາສີສຸງ ເຂົາກໍມາກ່າວທະໂຕອິຕິວ່າ ຂ້າຍັງຕົນ ຊະນາອັນວ່າຄົນທັງຫລາຍໃນໂລກນີ້ ເຊຕວາແພ້ທ່ານແລ້ວພາສັນຕິ ກໍມາກ່າວ ຊີໂຕອິຕິວ່າ ທ່ານແພ້ຕົນແລ ມະຫາຣາຊະອ້າໄທ້ມະຫາ ຣາຊເຈົ້າ ອັນວ່າທ້າວພະຍາມະຫາກະສັດ ນະສະທະເຫກໍບໍ່ເພິງ ເຊື່ອຍັງຖ້ອຍຄໍາ ປຸພພະທະຂາຍີໂນ ແຫ່ງຜູ້ເຂົ້າມາກ່າວກ່ອນ ເອກະ ທັຕຕັງດ້ວຍແທ້ແລ ໂພທິສັດເຈົ້າວ່າ ດູລາມະຫາຣາດ ຄົນທັງຫລາຍນີ້ ເຂົ້າຕີເພິ່ນເຂົ້າລວດມາກ່າວວ່າ ເພິ່ນມາຂ້າຕີເຂົາວ່າດັ່ງນັ້ນ ເປັນອັນມາກ ຜູ້ນັ້ນຫາກຂ້າຕີເພິ່ນແລ້ວ ປັນດິຕະຊາຕານັງ ລ້ຳຄົນ ທັງຫລາຍອັນເປັນນັກປາດມີພະຫຍາໂກ ອັນວ່າບຸກຄະລະຜູ້ໃດ ສຸເນຍຍະກໍຟັງ ວະຈະນັງຍັງຄໍາ ອິຕຣັສສ ແຫ່ງຜູ້ມາກ່າວນັ້ນຈາ ປັນດິໂຕອັນວ່ານັກປາດສຸຕວາໄດ້ຍິນແລ້ວ ຍັງຄໍາອຸພິນນັງແຫ່ງ ບຸກຄະລະສອງກ້ຳ ກະເຣກໍເພິງກະທໍາ ຍະຖາທັມມັງ ຕາມທໍາປະເວນີ ເມື່ອກ່ອນ ຕະຖາດ້ວຍປະການດັ່ງນັ້ນ ອະທິບາຍດັ່ງນີ້: ພະຍາໄດ້ຍິນ ຄໍາສອງກ້ຳ ສອງຝ່າຍກ່ອນ ຈິ່ງຄວນຕັດຕາມໂບຣານະຈາຣິດ ຈິ່ງຄວນແລ. ຄໍາບໍ່ໄດ້ຂຽນ ຢ່າຟ້າວກະທໍາຈັກຜິດເສຍແລ ອັນນີ້ ອອກໃນສຸຣິສາຣັດຖີກະຊາດົກຈະຕຸກກະນິບາດພຸ້ນແລ.

ບັດນີ້ ຈັກກ່າວລັກຂະນະແຫ່ງຜູ້ຈັກສອນທັ້ນແລ ເຂົ້າມາສູ່ ສີ່ເມືອງທັງສອງຂ້າງພ້ອມກັນ ເພິງໃຫ້ສີ່ເມືອງ ຖາມເອົາຄໍາປາກ

ຂາທັງສອງໄວ້ໃຫ້ໝັ້ນ ຢ່າໃຫ້ຜິກຄວາມໄດ້ ເມື່ອພາຍລຸນຊາຕິບຸກຄະລະຜູ້ຈັກຖຽງກັນນີ້ ທໍ່ນິຍົມຖ້ອຍອັນຂາທັງສອງ ກ່າວເປັນປະຖົມສິ່ງດຽວແລ ເຫດສັກຂີນີສັນນີ້ ປຸພເພມະວາທັງຍະຖາ ມະຫາສຸກະຕັງທຸກກະຕັງກັມມັງວາຈັງ ສັກຂີກະຣິຕວານະ ຕັສສະທັນທັງ ຕະວິສສະເຣດັ່ງນີ້ ອະທິບາຍມັກວ່າສີ່ເມືອງເຄືອງເອົາຖ້ອຍຄຳແຫ່ງບຸກຄະລະທັງສອງ ອັນເປັນປະຖົມນັ້ນເປັນອັນໝັ້ນອັນທຽງ ກ່າວຄືວ່າຖ້ອຍຄຳອັນມັນກ່າວມັນບຽນມານັ້ນເປັນຄວາມດີ ກໍຫາກເປັນສັກຂີແກ່ຄວາມມັນ ຖ້ອຍຄຳອັນມັນກ່າວມານັ້ນບໍ່ດີ ກໍຫາກເປັນສັກຂີແກ່ຄວາມມັນວິນິເສຍຍະ ກໍເພິ່ງໃສ່ສິນໄຫມເຕີມຄຳແຫ່ງມັນ ອັນບໍ່ດີນັ້ນເທີ້ນແມ່ນມັນປີ້ນຄຳດີມາເມື່ອພາຍລຸນ ກໍຢ່າໃຫ້ສີ່ເມືອງໄດ້ຟັງຄຳແຫ່ງມັນເທີ້ນ ຢ່າໃຫ້ແພ້ແກ່ ບຸກຄະລະ ຜູ້ກ່າວຄວາມດີແຕ່ເຄົ້ານັ້ນເທີ້ນເປັນສຸຄະຕິແລ. ຄຳສັນນີ້ ກໍຫາກສົມດັ່ງພະຍາອາຫາສະມຸກຂະຊາດົກອັນພະເຈົ້າເທດສະໜາໄວ້ ໃນຕີກກະນິບາດພຸ້ນເທີ້ນ. ອັນໜຶ່ງເປັນສີ່ເມືອງ ໃຫ້ຫລີງດູຖ້ອຍຄຳອັນເປັນ ມຸລລະປັດຕັນພະ ກ່າວຄືວ່າຖືເອົາເຂົ້າຂອງແຫ່ງກັນແລ ມີລາຍລັກອັກຂະຣະ ຂີດຂຽນເປັນປະໜານໄວ້ແລ ມີສັກຂີໝັ້ນແກ່ນເພິ່ງໃຫ້ສີ່ເມືອງຕັດເຕີມອັນມີສັກຂີນັ້ນເທີ້ນ. ຢ່າຊ່ອຍຄວາມຜູ້ຫາສັກຂີບໍ່ໄດ້ໃຫ້ຖ້ອຍຄວາມ ທ່ານຫາກເສຍບໍ່ດີບໍ່ຖືກອົງຄະແຫ່ງສີ່ເມືອງແຫ່ງສັກຂີສັນນີ້ : ປະນານັງລີກຂີຕັງພຸຕິສັກຂີນບັສເສທະກິຕຕັງ ເຕສະນະຍະຕະຣາພະເວ ທິພພະຍາຍັນຈະມຸຈຈະເຕດັ່ງນີ້ ອະທິບາຍໃນຄາຖາອັນນີ້ວ່າ ຖ້ອຍຄວາມບຸກຄະລະຜູ້ມາກ່າວລາຍລັກອັກຂະຣະທັມມະຣາກສາກສິໝັ້ນແກ່ນ ໃຫ້ສີ່ເມືອງ

ຕັດແຕ່ງຕາມ ຢ່າໃຫ້ເສຍວັດຖຸທ່ານ ຜີວ່າສິ່ເມືອງບໍ່ຖືເອົາຍັງຖ້ອຍຄຳ ອັນອາຈານເຈົ້າກ່າວໄວ້ດັ່ງນີ້ ຖືກອະຄະຕິຕາຍໄປຕົກນະຣົກ ສະເຫວີຍ ກຳມະວິບາກມາກນັກ ຖ້ອຍຄຳຝູງນັ້ນ ຜີບໍ່ມີລາຍລັກອັກຂະຣະ ທັມມະຣາກສາກສີ ດັ່ງນັ້ນໃຫ້ສະບົດ ຄືວ່າໃຫ້ຫລັ່ງນ້ຳແລ້ວຕັດຕາມ ສັດຈະເຫດສັກຂີນິສັນນີ້ວ່າ ນັດຖິທິຕຖັງສຸຕັງເຈວະສະປະຊັງຣາຊະ ປັນດິໂຕ ສະປະຖັງອະກະໂຣໂຍຈະຕັສສະທັນໂທ ພະວິສສະເຣດັ່ງນີ້ ອະທິບາຍໃນຄາຖາອັນນີ້ວ່າ ຄວາມຕໍ່ໃດຫາທັມມະຣາກສາກສີບໍ່ໄດ້ ຫາຜູ້ເຫັນຜູ້ໄດ້ຍິນບໍ່ໄດ້ ສິ່ເມືອງເພິ່ງໃຫ້ສະບົດ ຄືວ່າຫລັ່ງນ້ຳແລ້ວແລ ຕັດເຕີມສັດຈະອັນສະບົດນັ້ນເທີ້ນ ຜີວ່າມັນຫລັ່ງນ້ຳບໍ່ໄດ້ຊື່ວ່າມັນ ລ່າຍຫາສັດຈະບໍ່ໄດ້ຕັດເສຍ ຄືວ່າໃຫ້ໃສ່ສິນໄຫມ ແກ່ມັນເທີ້ນ. ເຫດທຳສັດຈະອະທິຖານນີ້ ຫນັກນັກເຫດພະພຸດທະເຈົ້າເທດສະຫນາ ໄວ້ໃນທະວາທັດສະນິບາດວ່າ: ຍັງມີກະສັດຕົນຫນຶ່ງ ສະເຫວີຍຣາຊະ ສົມບັດໃນເມືອງພາຣານະສີ ຍັງມີລູກຊາຍຜູ້ຫນຶ່ງຊື່ວ່າ ໂສນະກຸມານ ມີຮູບໂສມງາມຍິ່ງນັກ ເລົ່າຍັງມີລູກສາວກະສັດຕົນຫນຶ່ງຊື່ວ່າ ອຸທຸມພະຣາ ມີຮູບໂສມງາມ ມີຣັດສະຫມີຮຸ່ງເຮືອງທົ່ວຫ້ອງເຮືອນຫນຶ່ງ ຢູ່ເປັນປົກກະຕິທຸກວັນຄືນ ແມ່ນກາງຄືນກໍຮຸ່ງເຮືອງຢູ່ເປັນປົກກະຕິ ດຸດຈະດັ່ງໄຕ້ປະທີບຢູ່ນັ້ນ ດີຫລີແລ ພະຍາພາຣານະສີ ກໍໄປໂອມເອົາ ມາເປັນລູກສະໄພ້ແຫ່ງຕົນ ບໍ່ນານເທົ່າໃດໂສນະກຸມານລວດເກີດເປັນ ພະຍາດທູດເຮື້ອນທົ່ວທັງຄີງ ລວດບັງເກີດຄຳສັງເວກມັກໄຄ່ໄປບວດ ເປັນຣັດສີຢູ່ ຈິ່ງຂໍໂອກາດເຊີ່ງພະຍາຕົນ ເປັນພໍ່ ເຖິງສອງທີສາມທີ ພະຍາຈິ່ງອະນຸຍາດ ຈິ່ງອອກຫນີຈາກບ້ານເມືອງ ໄປບວດເປັນຣັດສີ

ຢູ່ໃນປ່າ ຫິມະພານ ເມື່ອເຈົ້າໂສນະກຸມານ ອັນຈັກອອກໄປບວດນັ້ນ ຈັກໄປເປັນຜູ້ຫນຶ່ງຄົນດຽວ ດັ່ງນັ້ນ ນາງອຸທຸມພະຣາ ຂໍໄປບວດດອມ ເຈົ້າໂສນະກຸມານ ທັງສອງຕ້ານເສຍເຫດເປັນພະຍາດໃນຕົນຝາງ ຮ້າຍມາກນັກ ບໍ່ເປັນທີ່ຮັກແກ່ນາງ ອັນຫນຶ່ງ ໂສນະກຸມານເລັງເຫັນ ໂພຍໄພ ອັນມີໃນປ່າຫິມະພານມາກນັກ ຈຶ່ງບໍ່ມັກໄຄ່ໃຫ້ນາງໄປດອມ ນາງກໍບໍ່ຟັງລວດຂໍໄປດອມເຈົ້າໂສນະກຸມານ ຜູ້ຜົວຕ້ານຫລາຍເລົ່າ ຫລາຍທີ ນາງກໍບໍ່ຟັງ ຈຶ່ງໃຫ້ນາງໄປດອມຫັ້ນແລ ເມື່ອນັ້ນພະຍາ ອິນທາທິຣາດ ກໍປະສາດໃຫ້ວິສຸກັມມະເທວະບຸດ ລົງມານິຣະມິດອາສົມ ບົດສາລາ ໄວ້ໃຫ້ເປັນທີ່ສ້າງສົມພຣົມະຈາຣີ ແຫ່ງກະສັດທັງສອງ ຫັ້ນແລ ເມື່ອນັ້ນ ພະກະສັດທັງສອງ ກໍຢູ່ສ້າງສະມະນະທຳຈຳສິນ ໃນພູມະສະຖານທີ່ນັ້ນສຽງ ເຈຍຣະການນານນັກ ນາງອຸທຸມພະຣາ ມີປົກກະຕິອັນກະທຳຄອງວັດ ບົວຣະບັດອັນນ້ອຍອັນໃຫຍ່ ແກ່ພະຣັດສີ ເຈົ້າບໍ່ຂາດສາຍແລ ປົກກະຕິອັນຕະເດີນຄວ່າຫາລູກໄມ້ຫົວມັນ ມາອຸປະຖາກພະກະສັດຣັດສີເຈົ້າຊູ່ວັນແລ ດ້ວຍແທ້ຍັງມີໃນວັນຫນຶ່ງ ນາງອຸທຸມພະຣາ ຕະເດີນໄປຄວ່າຫາລູກໄມ້ຫົວມັນທີ່ໄກນັກ ຈຶ່ງໄປ ຮອດສະໂບກຂະຣະນີທີ່ຫນຶ່ງ ອັນອາກຽນເດຍຣະດາດເຕັມໄປດ້ວຍ ເຂົ້າຫນົ້ນທັງຫລາຍເປັນອັນມາກ ນາງກໍລົງອາບນ້ຳໃນສະຊຳຣະ ເນື້ອຕົນເສຍທີ່ນັ້ນແລ້ວ ນາງກໍຂຸດເອົາເຂົ້າຫນົ້ນ ມາຕຳກັບບວກທີນ ຂັດສີກາຍະເນື້ອຕົນທັງມວນແລ້ວ ເມື່ອນັ້ນຍັງມີນານະວະຍັກຫນຸ່ມ ຜູ້ຫນຶ່ງ ກໍມາກຸບລູບຫຍຸມເອົາຍັງແຂນແຫ່ງນາງອຸທຸມພະຣາ ດ້ວຍ ພາວະອັນຈັກກຸມເສບເມຖຸນະທຳກັບດ້ວຍນາງ ຈັກເອົານາງເປັນເມຍ

ວ່າດັ່ງນັ້ນ ນາງຈິ່ງກ່າວວ່າ ດູລາມານະວະຍັກ ຜູ້ເປັນເຈົ້າເປັນຜົວ ແຫ່ງກູ ກໍຍັງມີຄືຫລີດາຍ ກີຍາອັນກູຈັກໃຫ້ທ່ານເສບສົມແລ ເປັນເມຍ ແຫ່ງທ່ານນີ້ ບໍ່ສົມບໍ່ຄວນແທ້ແລ ວ່າດັ່ງນັ້ນ ມານະວະຍັກຜູ້ນັ້ນກ່າວວ່າ ແມ່ນວ່າມີຜົວດັ່ງນັ້ນກໍດີ ກູກໍບໍ່ຟັງແລ ວ່າດັ່ງນັ້ນ ມານະວະຍັກກ່າວ ຖ້ອຍຄຳອັນຫຍາບຊ້າກ້າແຂງດັ່ງນັ້ນ ເມື່ອນັ້ນ ອຸທຸມພະຣາເທວີ ຈິ່ງກ່າວແກ່ເທວະດາອາຣັກ ມະເຫສັກທັງຫລາຍ ດ້ວຍສະພາວະ ອັນຕົນປະກອບດ້ວຍສັດຈະສະພາບ ແລະ ມີຈິດໃຈອັນຊື່ຕໍ່ຜົວແຫ່ງຕົນ ແລ ບໍ່ມັກໃຄ່ມານະວະຍັກເສບສົມກັບດ້ວຍຕົນດັ່ງນັ້ນ ເມື່ອນັ້ນ ຫີນບັນດຸກຳພະສີລາບາດ ອັນເປັນທີ່ນັ່ງພະອາດສະຫນາແຫ່ງ ອິນທາທິຣາດ ກໍກະດ້າງຈາກປົກກະຕິ ດ້ວຍກຳລັງປະຫຍາປັນຍາ ແຫ່ງນາງອຸທຸມພະຣາອັນຮອງຮັບ ເທວະດາອິນທາທິຣາດ ກໍເອົາ ແກ້ວວະຊິຣະເພັດ ກັບທັງຄ້ອນຈັບເຫລັກ ກໍສະເດັດລົງມາສັນທາບ ນາບຍັງມານະວະຍັກແລ ຈັບເອົາມານະວະຍັກໄປປ່ອຍເສຍທີ່ໄກ ເພື່ອກົວໄພອັນຈັກເກີດມີເມື່ອພາຍລຸນ ນາງຈິ່ງຂໍເຊີ່ງພະຍາອິນວ່າ ອ້າໄທ້ອິນທາທິຣາດ ຊາຕິຍັກຕົວຮ້າຍຫຍາບຊ້າທາຣຸນ ມັນເລົ່າຍັງ ບຸ່ນກະທຳຮ້າຍທີ່ຫນຶ່ງ ເມື່ອພາຍລຸນບໍ່ສົງກາ ຂໍແກ່ອິນທາທິຣາດເຈົ້າ ທະລົງພະຣາຊະກະຣຸນາ ໂຜດຍັກສາໂຫດໄປແດນໄກແກ່ຂ້າແດ່ເທີ້ນ ເມື່ອນັ້ນພະຍາອິນທາທິຣາດ ຈິ່ງຜູກເອົາຍັກຕົວນັ້ນ ໃສ່ຕູ້ຄອນຊອນ ເຫລັກໄປປະເສຍ ໃນຫວ່າງພູ 3 ອັນ ເປັນອັນໄກແຕ່ອາສົມທີ່ໄກແລ້ວ ກໍສະເດັດເມືອສູ່ເມືອງຟ້າດາວະດຶງສາ ອັນເປັນສະຖານທີ່ສຳຣານ ແຫ່ງຕົນວັນ ນັ້ນແລ ເມື່ອນັ້ນ ນາງອຸທຸມພະຣາຈິ່ງໄດ້ເອົານ້ຳໃນສະ

ໂບກຂະຣະນີ ມາສູ່ອາສົມບົດສາລາ ພົ້ນເວລາກາລະອັນຕົນແຮ່ງໄປປົກກະຕິເປັນອັນຍິ່ງນັກ ເຫດຍັກຕົວຮ້າຍທາກກະທຳຣາວີເຖິງຣາຕີຈິ່ງຮອດ ເມື່ອນັ້ນເຈົ້າໂສນະຣັດສີ ເຫັນເຫດອັນນາງໄປແລະ ນານມາຄ່ຳຈິ່ງຮອດອາສົມບົດສາລາ ຈິ່ງກ່າວຈາລະຈາສັນທາບຍັງນາງວ່າ ດູລານາງປົກກະຕິ ອັນນາງໄປທຸກວັນເມື່ອກ່ອນບໍ່ຫ່ອນເປັນດັ່ງນີ້ ວັນນີ້ຮອຍວ່ານາງໄປປະສົບພົບ ເມຖຸນະທຳກັບຣັດສີແລະ ທິບພະຍາທອນ ແລະ ພານປ່າ ອັນແຮງຄວ່າຕະເດີນດົ່ງ ບໍ່ສົງໄສແທ້ແລ ເມື່ອນັ້ນ ນາງຈັກສຳແດງອັນຜິເຜດຍັກຈັກເສບສົມ ໂດຍນິຍົມຈິ່ງກ່າວແຕ່ພາຍຫລັງ ໃຫ້ແຈ້ງແກ່ເຈົ້າໂສນະຣັດສີ ເມື່ອນັ້ນເຈົ້າໂສນະຣັດສີ ກໍບໍ່ຟັງຄຳແຫ່ງນາງສັງສັກອັນແລ ເມື່ອນັ້ນ ນາງຈິ່ງອໍສັດຈະອະທິຖານ ຕາມຖ້ອຍຄຳອັນມີໂດຍດັ່ງນິຍົມອັນໄດ້ກ່າວແກ່ເຈົ້າໂສນະຣັດສີນັ້ນ ຂຸ່ປະການທັ້ນແລ ເມື່ອນັ້ນ ເຈົ້າໂສນະຣັດສີຈິ່ງໃຫ້ປະຕິຍານຂານຮັບ ເອົາຄຳວ່າດັ່ງນີ້ ນາງຈັກກະທຳອະທິຖານສິ່ງໃດ ກໍຈິ່ງກະທຳເທີ້ນ ເມື່ອນັ້ນນາງຈິ່ງເອົາອາໂປກະສິນ ອັນນາງທາກເອົາມາແຕ່ສະອັນບໍຣະສຸດ ແລະ ໃສງາມມາກນັກມາຕັ້ງໄວ້ຂ້ອງໜ້າເຈົ້າໂສນະກຸມານ ແລ້ວນາງຈິ່ງກະທຳອະທິຖານ ດ້ວຍຄຳວ່າດັ່ງນີ້ ຜີວ່າຜູ້ຂ້າທາກຍັງຕົວະຍັງໂລບຈາກເຈົ້າກູ ດ້ວຍເສບເມຖຸນະທຳຈາກເຈົ້າກູ ຄືວ່າຍັງໄດ້ໃຫ້ຣັດສີ ແລະ ທິບພະຍາທອນແລຄົນຜູ້ໃດຜູ້ໜຶ່ງແລ ຍັກຜູ້ມັນທຍຸບບາຍເອົາຜູ້ຂ້າໄວ້ນັ້ນກໍດີ ຍັງໄດ້ໃຫ້ເອົາທັງຫລາຍຝູງນັ້ນເສບສົມ ຜູ້ຂ້າດັ່ງເຈົ້າກູວ່ານັ້ນ ຈິ່ງໃຫ້ຄອງວິບາດຈິບທາຍໃຫ້ເຖິງແກ່ຜູ້ຂ້າ ໃນຊາດຕິນີ້ຊາດຕິໜ້າ ໃຫ້ຜູ້ຂ້າໄດ້

ສະເຫວີຍກຳມະວິບາກ ອັນນ້ອຍອັນໃຫຍ່ໃນຊາຕິທັງມວນ ມີນະຣົກ ເປັນຕົ້ນ ແມ່ນວ່າປັດຈຸບັນນະຊາດນີ້ກໍດີ ກໍຍ່າໄດ້ວຸດທີແກ່ຂ້າ ເທົ່າວັນເທີ້ນ ຜີວ່າຜູ້ຂ້າຫາກບໍ່ໄດ້ເສບເມຖຸນະທຳ ກັບດ້ວຍຊາຍຜູ້ອື່ນ ເປັນກຳອັນຜິດ ທຸດຈະຣິດອັນບໍ່ຊອບດັ່ງນັ້ນ ສັດຈະທຳແຫ່ງຜູ້ຂ້າລູກນີ້ ຈິ່ງມາຊຳຣະຍັງທູດຊາດບາດຫລວງ ໃນເນື້ອຄີງແຫ່ງເຈົ້າກູເສຍໃຫ້ ຫມົດສ້ຽງບັດນີ້ ຄືວ່າ ໃນກາຍະເນື້ອຕົນແຫ່ງເຈົ້າກູ ທັງມວນດ້ວຍ ນ້ຳອັນນີ້ເທົ່າວັນເທີ້ນ ນາງກ່າວຄຳສັດຈະອະທິຖານສັນນີ້ແລ້ວ ກໍຈິ່ງຍໍເອົາຍັງນ້ຳອັນນັ້ນ ຫົດກາຍະເນື້ອຕົນເຈົ້າໂສນະກຸມານຣັດສີ ອັນນັ້ນທັ້ນແລ ຍາມນັ້ນທູດເຮື້ອນເຈົ້າຣັດສີ ກໍກັບກາຍຫາຍເສຍ ໃນຂະນະບັດດຽວນັ້ນທັ້ນແລ ທີ່ນັ້ນຄຳສົງກາກໍຫາຍເສຍສ້ຽງ ແກ່ເຈົ້າຣັດສີ ຕົນເປັນຜົວທັ້ນແລ ບໍ່ນານເທົ່າໃດກະສັດທັງສອງ ກໍເອົາກັນຄືນເມືອສູ່ບ້ານເມືອງ ດ້ວຍສີສະຫວັດສະດີ ກໍດ້ວຍອະນຸພາບ ສັດຈະທຳດວງປະເສີດນັ້ນແລ ພະຍາຕົນເປັນພໍ່ ແລະ ແມ່ ກໍອາຣາດ ທະນາສະເຫວີຍຣາຊະສົມບັດ ດ້ວຍທົດສະຣາຊະທຳ 10 ປະການເປັນ ສັນນັ້ນກໍມີແລ ຊາຕິສັດຈະທຳດວງປະເສີດນີ້ ກໍຫຽນຍ່ອມໃຫ້ເຖີງ ວຸດທິທຳ 4 ປະການ ຄື: ອາຍຸ ວັນນະ ສຸຂະ ພະລະແລ ປະຕິພານະ ອັນຖ້ວນ 5 ອະທິປະຕິສຳປັດໄຕຍະອັນຖ້ວນ 6 ແລ ສຳປັຕໄຕຍະ ອັນຖ້ວນ 7 ກໍຈິ່ງສະເດັດເຂົ້າມາຮັກສາ ຍັງຂັນທະສັນຕານແຫ່ງເຈົ້າ ໂສນະກຸມານກໍມີແລ ເຈົ້າໂສນະກຸມານປາງນັ້ນ ບັດນີ້ແມ່ນພະຍາ ປະເສນາທິໂກສົນແລ ນາງອຸທຸມພະຣາວັນນັ້ນ ບັດນີ້ແມ່ນນາງມັນລິກາ ເທວີແລ ເຫດດັ່ງນັ້ນ ສັບພັນຍູເຈົ້າຈິ່ງເທດສະຫນາວ່າ ສັຈຈັງທີປະຣະ

ມັງໂລເກສັຈຈັງໂລເປ ປັຈຈານະຕາ ສັຈຈັນທະວິຊຊະມະນັນທິ ສັພພະທາດັ່ງນີ້ແລ ປະຣະມັງສຸຂັງ ເປັນສຸກຍິ່ງກວ່າສຸກທັງມວນ ໂລເກໃນໂລກຄືວ່າ ເມືອງຟ້າ ແລະ ເມືອງຄົນທັງມວນແລ.

ບັດນີ້ ຈັກຈາອານາຈັກ ແລະ ທັມມະຈັກສາດແລ ຣາຊັດທີສາດ 11 ຣາຊະສາດແລ ສຸພາສິດແລ ພີນ 3 ສາຍແລ ສ້ອຍສາຍຄຳ ມາແປງເປັນຫົນລະດີໂລກ ຄະດີທຳປຣບກັນແລ ທີຣາ ອັນວ່ານັກປາດ ວິນິດສະໂຍ ອັນວ່າອາຈານ ຜູ້ເພິ່ງພິຈາລະນາຕັດໃຫ້ຂາດ ເອຕຖະ ວະຈະເນໃນຄຳອັນສັພພັນຍູເຈົ້າ ປັນຍັດຕັງທາກຕັ້ງໄວ້ ນັກປາດເພິ່ງຣູ້ ດັ່ງວິສັດຊະນາທຣມນອກນີ້ເທີ້ນ. ສັງຄານິດສັກຄີ 3 ຕົວຈີ່ງ ເປັນປະຣາຊິກ ຈາເປັນອັນມີ 4 ຮ້ອຍບາດແລ ທຸກກົດເຂົ້າອາບັດ 3 ຕົວ ຈີ່ງເປັນສັງຄາອັນມີ 2 ຮ້ອຍບາດແລ ອາບັດເຂົ້າທຸບພາສິດ 4 ຕົວ ຈີ່ງເປັນປາຈິດຕີອັນມີຮ້ອຍໜຶ່ງແລ ທຸກກົດຮ້ອຍ 4 ບາດແລ ປາຕິເທດສະນີ 5 ບາດແລ ທຸບພາສິດ 3 ບັກ ໜັກ 2 ລຳຖ່ອງ ຖຸນລະໄຈຮ້ອຍແລ ຜີວ່າຣາຊະກະກຸນລູກທ້າວພະຍາ ອັນຄ່າຄໍພັນ 6 ຮ້ອຍອັນແປງ 4 ຮ້ອຍແລ ເມືອງແສນ ເມືອງຈັນອັນຄ່າຄໍ 8 ໝື່ນ ເງິນ ເມືອງຊ້າຍ ເມືອງຂວາ ອັນຄ່າຄໍ 6 ໝື່ນແລ ຊຽງໄຕ້ ຊຽງເໜືອ ອັນຄ່າຄໍ 5 ໝື່ນເງິນແລ ບໍ່ປາກເສຍເມືອງໃຫ້ໄວ້ ຊອບແລ. ຫົວແສນໃນນາອັນຄ່າຄໍ 1000 ອັນໄໝ 500 ອັນຕີ 2 ຮ້ອຍ 5 ບາດ ອັນສິນມາເບັ້ຍເຟື້ອງແລ ຫົວໝື່ນອັນຄ່າຄໍ 8 ຮ້ອຍ ອັນໄໝ 4 ຮ້ອຍ ອັນແປງ 2 ຮ້ອຍແລ ຫົວພັນ ຂຸນນິດໄສນາຍຊ້າງ ນາຍມ້າ ອັນຄ່າຄໍ 6 ຮ້ອຍ ອັນແປງ 4 ບາດ. ຫົວສິບອັນຄ່າຄໍ 4

ຮ້ອຍ ຂັນໄຫມ 2 ຮ້ອຍ ຂັນແປງຮ້ອຍຫນຶ່ງແລ. ເພຍຫົວ 5 ໃນນາ ຂັນຄ່າຄໍຮ້ອຍຫົກ ຂັນໄຫມ 8 ຮ້ອຍ ຂັນຕີ 5 ຮ້ອຍຊອບແລ. ເພັຍຫົວ 4 ໃນນາຂັນຄ່າຄໍຮ້ອຍສາມ ຂັນໄຫມ 6 ຮ້ອຍ 5 ບາດ ຂັນຕີ 3 ເບັ້ຍ ຂັນສົມມາຮ້ອຍ 6 ບາດ. ຫມ່ອມບ່າວນອກນາ ຂັນຄ່າຄໍ 6 ຮ້ອຍ ຂັນໄຫມ 3 ຮ້ອຍ 5 ບາດ ຂັນຕີຮ້ອຍ 7 ບາດ ຂັນສົມມາ 6 ບາດແລ. ຫົວ 5 ນອກນາແລ ຫົວ 4 ນອກນາທໍ່ຂັນແປງໃນນາແລ. ແສນນອກນາ ທໍ່ຂັນຫມ່ອມບ່າວໃນນາແລ. ຫມ່ອມບ່າວນອກນາ ຂັນຄ່າຄໍ 6 ຮ້ອຍ ຂັນໄຫມ 2 ຮ້ອຍ 5 ບາດ ຂັນຕີຮ້ອຍເຟື້ອງ ຂັນສົມມາ 6 ບາດ. ຂັນຫວາຍຄ້າເສດຖີ ທໍ່ຂັນແສນໃນນາແລ. ກະກຸມນ້ອຍກະດຸມຜິດ ທໍ່ຂັນຫມ່ອມບ່າວໃນນາແລ. ຂັນອາຈານ ທໍ່ຂັນແສນໃນນາ ຂັນຄ່າຄໍ 1000 ຂັນໄຫມ 500 ຂັນຕີ 2 ຮ້ອຍ 5 ບາດ ຂັນທິດທໍ່ຫມ່ອມບ່າວໃນນາແລ. ຂັນຊຽງທໍ່ຫມ່ອມບ່າວ ນອກນາແລ. ຂັນເຊື້ອຊາດຣາຊະວົງສາ ຂັນຄ່າຄໍ 3000 ຂັນໄຫມ 5 ຮ້ອຍ ຂັນຕີ 7 ບາດ ຂັນສົມມາ 3 ຮ້ອຍ 7 ບາດເຟື້ອງ. ຄົນທຸກເປັນພໍ່ມົ້ນແມ່ມີ້ ຂັນຄ່າຄໍ 4 ຮ້ອຍ ຂັນໄຫມ 2 ຮ້ອຍ ຂັນແປງ 3 ເບັ້ຍ. ຄົນທີນະຊາດ ແລະ ຄົນສິບເຜິ້ງ ຂັນຄ່າຄໍ 2 ຮ້ອຍ ຂັນໄຫມຮ້ອຍ 11 ຂັນແປງ 6 ສະຫລຶງຊອບແລ. ຫົບວິໄນ ພະເຈົ້າມີດັ່ງນີ້ ສັງຄາ 13 ຕົວເຫດປາລີວ່າດັ່ງນີ້ ເຕຣະສະສັງຄາ ທີເສສາທັມມາດັ່ງນີ້ ແຈກເປັນຂັນຄົນ 13 ຂັນແລ 2 ຮ້ອຍເງິນແລ ອາບັດປະຣາຊິກມີ 4 ຕົວ ເຫດວ່າ ຈັຕຕາໂຣ ປະຣາຊິກກາ ທັມມາປີແຈກ ເປັນຂັນຄົນ 4 ຂັນແລ ຂັນແລ 4 ຮ້ອຍເງິນແລ.

ອະນິຍົດມີ 2 ຕົວ ເຫດວ່າປາລີວ່າທະເວອະນິຍະຕາທັມມາດັ່ງນີ້ແລ ແຈກເປັນອັນຄົນເປັນ 2 ອັນແລ ອັນ 5 ບາດເງິນແລ. ອາບັດທຸບພາສິດມີ 3 ຕົວ ຜີແຈກເປັນອັນຄົນເປັນ 3 ອັນແລ 3 ບັກຊີກແລ. ອາບັດທຸກກົດມີ 2 ຕົວ ຜີແຈກເປັນອັນຄົນ 2 ອັນແລ 5 ບາດ ໄນຍະໜຶ່ງປາຈິດຕີມີ 8 ບາດ ນິດສັກຄີ 6 ບາດເຟື້ອງແລ ຜີແຈກເປັນອັນຄົນແລອັນແລ 2 ບາດເງິນແລ. ອາບັດປາຈິດຕີມີ 92 ຕົວ ປາລີວ່າດັ່ງນີ້ ທະເວນະວຸຕິ ປາຈິຕຕີຍາ ທັມມາດັ່ງນີ້ ແຈກເປັນອັນຄົນແລ 92 ອັນມີ 8 ບາດແລ.

ອັນຄ່າຄໍເພຍ 8 ຮ້ອຍ ອັນໄຫມ 4 ຮ້ອຍ 8 ບາດ ອັນແປງ 6 ບາດ ໃຫ້ຫລີງດູຍົດເພຍເທີ້ນ. ຜີວ່າຫົວແສນ ອັນຄ່າຄໍ 6 ຮ້ອຍ ອັນໄຫມ 3 ຮ້ອຍ 5 ບາດ ອັນແປງບາດໜຶ່ງ ຜີວ່າຫົວໝື່ນໝ່ອມບ່າວ ຫົວທ້າວອັນຄ່າຄໍ 4 ຮ້ອຍ ອັນໄຫມ 2 ຮ້ອຍ ອັນຕີ 6 ເບັ້ຍ ອັນແປງ 4 ບາດ. ອັນຄ່າຄໍຄົນນ້ອຍມີ 8 ຕຳລຶງ. ຜີວ່າຜູ້ຍິງ 4 ຕຳລຶງ ອັນຄ່າຄໍທ້າວເພຍ 16 ຕຳລຶງ ອັນຄ່າຄໍນາງເພຍ 8 ຄຳລຶງ ຜີວ່າອັນຄ່າຄໍຜູ້ຍິງ 2 ຮ້ອຍ ອັນໄຫມເບັ້ຍໜຶ່ງ ອັນຕີ 4 ບາດ ອັນແປງ 6 ສະຫລຶງແລ.

ບັດນີ້ ຈັກຈາຫ້ອງມິດສາຈານໃຫ້ແຈ້ງກ່ອນແລ ຜີວ່າ ຣາຊະກະກຸນທ້າວພະຍາມິດສາຈານກັບເມຍທ່ານ ໃສ່ອັນຄ່າຄໍ 1600 ແລ ແຕ່ຈັບມືຖືນົມ ໃສ່ອັນໄຫມ 8 ຮ້ອຍ ແຕ່ກ່າວເລົ່າໂລມ ໜັງສືໜັງສັຣນ ໃສ່ອັນແປງ 4 ຮ້ອຍ. ຂຸນນາງສູ່ເມຍໄພ່ໂທດຊາຍຖືກປະຣາຊີກ 8 ຊາຍ 35 ຕຳລຶງ ຍິງຖືກປະຣາຊີກຕົວຕົ້ນ 2 ຕຳລຶງ

24/7 ຫ້າມຈຳໜ່າຍ

ໄພ່ສູ່ເມຍຂຸນນາງ ຊາຍຖືກປະຣາຊີກ 4 ໂທດຕຳລືງ 2 ບາດ ຍີງຖືກປະຣາຊີກຕົ້ນໂທດ 2 ຕຳລືງ. ໄພ່ສູ່ນັກສະຫນົມກົມມະວັງ ຊາຍຖືກປະຣາຊີກ 9 ໂທດ 4 ຕຳລືງ ຍີງຖືກປະຣາຊີກ 4 ຕີຊາຍ 500 ຕີຍີງ 250 ເອົາເຂົ້າຄຸກຄົບ 3 ເດືອນ ເອົາອອກມາເປັນຂ້ອຍຫຍ້າຊ້າງມ້າ ຄົບ 3 ປີ ຈີ່ງຫມົດໂທດແລ. ໄພ່ສູ່ເມຍກັບ ຜົວໄປທຳການເມຍຫລີ້ນຊູ້ທາງຫລັງ ໃສ່ໂທດ 12 ຕຳລືງ 2 ບາດ ຜົວໄປທຸຣະຄ້າຂາຍ ເມຍຫລີ້ນຊູ້ທາງຫລັງ ໃສ່ໂທດ 8 ຕຳລືງ ຄັນວ່າຜົວຢູ່ບ້ານເມຍຫລີ້ນຊູ້ໃສ່ໂທດ 6 ຕຳລືງ ຫົວຄູສັງຄະຣາດສູ່ເມຍເສນາອາມາດໂທດຊາຍຖືກປະຣາຊີກ ໂທດ 40 ຕຳລືງ ຍີງຖືກປະຣາຊີກ 5 ແລ 20 ຕຳລືງ ຫົວຊາພະພີ່ນ້ອງສູ່ເມຍຂຸນນາງ ຜູ່ຊາຍເປັນປະຣາຊີກ 20 ຕຳລືງ ຍີງຖືກປະຣາຊີກຕົ້ນ 10 ຕຳລືງ. ຜູ້ໃດໄປນອນດອມເມຍທ່ານໆໄດ້ກັບບ່ອນຂ້າຕາຍບໍ່ເປັນໂທດ ແຕ່ບາບແລ.

ລູກເຂີຍສູ່ແມ່ເມຍບໍ່ມີຜົວ ໃສ່ໂທດຜູ່ຊາຍ 2 ບາດ ຍີງ 3 ບາດ ໃຫ້ເຖົ້າແກ່ກິນບາດຫນຶ່ງ ເຈົ້າໂລດບາດຫນຶ່ງ ຄາຣະວະຫລັກຄຳ 3 ບາດຫມົດໂທດແລ. ລູກເຂີຍສູ່ແມ່ເມຍມີຜົວ ໃສ່ໂທດຜູ່ຊາຍ 3 ບາດ ຍີງຕຳລືງຫນຶ່ງ ໃຫ້ເຖົ້າແກ່ກິນ 2 ບາດ ຄາຣະວະຫລັກຄຳ 2 ບາດ ສົມມາເຈົ້າໂລດເບື້ອງຜົວ 2 ບາດຫມົດໂທດແລ. ພີ່ເຂີຍສູ່ນ້ອງເມຍບໍ່ມີຜົວໃຫ້ເຖົ້າແກ່ເອົາໂທດ 6 ບາດ ເຖົ້າແກ່ກິນ 2 ບາດ ສົມມາພໍ່ 2 ບາດ ເຈົ້າໂລດເຜົ້ງພັນຫນຶ່ງຫມົດໂທດແລ. ພີ່ເຂີຍສູ່ນ້ອງເມຍມີຜົວໂທດຊາຍຖືກປະຣາຊີກ 4 ຍີງຖືກປະຣາຊີກຕົວສະຫງັດ ນ້ອງເຂີຍຫລີ້ນພີ່ເມຍ ບໍ່ມີຜົວໃຫ້ເຖົ້າແກ່ເອົາໂທດ

ມີເງິນຄົນຮ້ອຍ ໃຫ້ເຖົ້າແກ່ກິນບາດໜຶ່ງ ສົມມາພໍ່ບາດໜຶ່ງ ໝົດໂທດແລ. ນ້ອງເຂີຍສູ່ພີ່ເມຍມີຜົວ ໂທດຊາຍຖືກປະຣາຊີກ 2 ຍິງຖືກປະຣາຊີກຕົ້ນແລ. ພໍ່ສູ່ລູກສາວບໍ່ມີຜົວ ໂທດຊາຍເປັນສັງຄາ ຍິງຖືກອັນທຸກກົດໃຫ້ເຖົ້າແກ່ກິນ 5 ບາດ ຄາຣະວະຫລັກຄຳ 2 ບາດ ໃຫ້ແມ່ 3 ບາດ ໂຄດ 2 ບາດ ໝົດໂທດແລ. ພໍ່ສູ່ລູກມີຜົວ ຊາຍຖືກປະຣາຊີກຕົ້ນ ຍິງຖືກປະຣາຊີກຕົວສະຫງັດແລ.

ພໍ່ຄົນສີ້ມ້າໃສ່ໂທດ 3 ຕຳລຶງ. ລູກສີ້ມ້າໃສ່ໂທດ 6 ບາດ ພໍ່ຄົນສີ້ຄວາຍໃສ່ໂທດ 10 ບາດ. ລູກສີ້ຄວາຍໃສ່ໂທດ 5 ບາດ ຫລານສີ້ຄວາຍໂທດ 10 ສະຫລຶງ. ພໍ່ຄົນສີ້ໝາໃສ່ໂທດ 6 ບາດ ລູກສີ້ໝາໃສ່ໂທດ 3 ບາດ, ຫລານສີ້ໝາໃສ່ໂທດ 6 ສະຫລຶງແລ. ເຈົ້າທັງຫລາຍເປັນໂສພາທາຣະການ ເພິງພິຈາລະນາດູເທີ້ນ. ຜູ້ໃດ ກຸມສີ້ເມຍທ່ານ ຜີວ່າຜູ້ຍິງມີກຳລັງແຮງກວ່າຕົນເຮັດບໍ່ໄດ້ໃຫ້ໃສ່ ອັນໄໝ 2 ຮ້ອຍເບັ້ຍເທີ້ນ. ສ້ອຍສາຍຄຳວ່າມີດັ່ງນີ້ແລ.

ບັດນີ້ ຈັກຈາຫ້ອງໝາຍສາວ ເປັນເມຍອັນຄວນໄດ້ ແລະ ບໍ່ຄວນໄດ້ກ່ອນແລ. ມີບຸກຄະລະຜູ້ໜຶ່ງ ໄປໝາຍສາວລູກຍິງ. ທ່ານໃຫ້ເຈົ້າຂຸນຜູ້ເປັນດີເອົາຫໍ່ໝາກ ໄປໝາຍສາວເດືອນໜຶ່ງ ພໍໃຫ້ສົມມາຫໍ່ໝາກ ບໍ່ເອົາແທ້ດັ່ງນັ້ນ ໃຫ້ແມ່ສາວທາຜົວໃຫ້ລູກສາວ ເອົາເສຍເທີ້ນ. ຢ່າໃຫ້ຜູ້ໝາຍວ່າສັງເທີ້ນ ອັນໜຶ່ງ ຜູ້ຊາຍ ຢາຍຫໍ່ໝາກສາວທ່ານຕ້ານຕໍ່ພໍ່ແມ່ສາວແທ້ ທໍ່ລູກສາວບໍ່ມັກ ຫລີກໜີໄປເຮືອນທີ່ມັນມັກເພິງໃຈນັ້ນ ໃຫ້ໄໝຕາມຄອງເມືອງ ມີເງິນຮ້ອຍໜຶ່ງແລ ຖ້າວ່າສາວຜູ້ທ່ານໄປໝາຍນັ້ນ ທາກໂລ່ງໃຈ

ແລະ ຮັບທີ່ຫມາກແລ້ວ ວັນດີຈັກມາເອົາວ່າດັ່ງນັ້ນ ເມື່ອພາຍລຸນ ມັນບໍ່ມັກຫນີໄປສັກສູ່ທີ່ມັກ ກໍໃຫ້ໄຫມ 2 ຮ້ອຍເບ້ຍ ຄໍາຫມາກ ໃຫ້ຄືນແລ. ຜີວ່າເຈົ້າເຮືອນທີ່ມັນໄປນັ້ນ ຮູ້ວ່າທ່ານຫມາຍດັ່ງນັ້ນ ໃຫ້ໄຫມ 6 ບາດແລ. ຜີຫາກຮູ້ວ່າທ່ານຫມາຍແລ້ວ ຫາກດົນເອົາ ໃຫ້ໄຫມ 2 ຮ້ອຍແລ. ຜີວ່າບໍ່ມັກ ພໍ່ແມ່ຫາກກຸມເອົາໃຫ້ບໍ່ໄດ້ ສາວຫນີໄປເອົາຕ່າງເຮືອນເສຍ ຢ່າວ່າສັງທີ່ວ່າໃຫ້ຄືນເສຍເທື່ນ ຊອບແລ. ຄັນຫມາຍສາວເປັນເມຍຢ່າໃຫ້ກາຍ 3 ປີເທື່ນ. ຜີສາວເອົາມາມອບເງິນໄວ້ ມີຊາຍຄົນອື່ນມາລັກສູ່ເປັນກັນ ໃຫ້ຕັດ ໂທດໃສ່ຜູ້ຊາຍ 8 ຕໍາລຶງ ຍິງ 5 ຕໍາລຶງແລ. ຜູ້ຫນຶ່ງໄຖ່ຂ້ອຍມາ ເປັນເມຍແລ ມາມີລູກຍິງຊາຍດອມກັນ ພໍ່ເຈົ້າເຮືອນຕາຍເສຍ ທີ່ໃຫ້ເອົາຂາແມ່ລູກອອກເປັນໄທແລ. ເຈົ້າຂອງທັງຫລາຍ ຜີວ່າ ໂອກາດກໍໃຫ້ເທົ່າໃດ ຈິ່ງໄດ້ຕາມຄໍາຜູ້ຕາຍສັ່ງນັ້ນແລ. ຜີວ່າດັ່ງນັ້ນ ຕາມແມ່ເຈົ້າເຮືອນເຜິງໃຫ້ໄດ້ເທົ່າໃດກໍດີ ແມ່ນບໍ່ໃຫ້ກໍບໍ່ໄດ້ແລ. ເຫດແມ່ໄດ້ເປັນໄທ ກໍເພື່ອລູກເທົ່ານັ້ນດາຍ ຜີວ່າບໍ່ມີລູກ ແມ່ກໍຍັງ ເປັນຂ້ອຍດັ່ງເກົ່າແລ ເຫດວ່າຜົວເມຍສ້າງດອມກັນ ກໍຈິ່ງໄດ້ໄຖ່ ເອົາມັນຜູ້ແມ່ມາເປັນເມຍບໍ່ຄວນໃຫ້ເພື່ອອັນແລ. ອັນຫນຶ່ງຜູ້ຫນຶ່ງ ມີເມຍ 2 ຄົນ ໄດ້ກ່າວຕາມໂອນເອົາທັງ 2 ຜີວ່າເມຍຫລວງກໍມີລູກ ເມຍນ້ອຍກໍມີລູກ ພໍ່ຕາຍເສຍ ຍັງທີ່ລູກຂາທັງສອງ ຂອງພໍ່ແມ່ຂາ ຍັງເທົ່າໃດໃຫ້ປັນເປັນ 3 ສ່ວນໆຫນຶ່ງໃຫ້ແກ່ລູກເມຍນ້ອຍ ສອງສ່ວນ ໃຫ້ແກ່ລູກແມ່ຫລວງແລ ດ້ວຍແທ້ພໍ່ຮັກຜູ້ໃດ ກໍໃຫ້ຕາມຜູ້ຕາຍສັ່ງ ນັ້ນແລ.

ບັດນີ້ ຈັກຈາເມຍ 12 ຈຳພວກກ່ອນແລ. ຈຳພວກຫນຶ່ງ ຊື່ວ່າກີດຕິກາ ກູ້ເອົາວັດຖຸເຂົ້າຂອງເຜິ່ນແລ້ວ ຫາສິ່ງໃຫ້ບໍ່ໄດ້ລອດໄຖ່ ມາເປັນເມຍ ມັນຫາກທຳມິດສາຈານກັບດັ່ງນັ້ນ ໃຫ້ຜົວເອົາເປັນ ຂ້ອຍດັ່ງເກົ່າແລ ຊາຍໃສ່ອັນໄຫມຄຳກໍຊອບແລ. ທຽມດັ່ງເຈົ້າຣັດສີ ລ້ຽງ ຫມາຈີກຈອກຕົວຫນຶ່ງ ຫມາຕົວນັ້ນກໍບົວຣະບັດເຈົ້າ ຣັດສີດີນັກ ຣັດສີເຫັນຄຸນມັນຈຶ່ງເປົ່າໃຫ້ເປັນຄົນ ແລ້ວມັນກໍຕະເດີນໄປເຫັນ ລູກສາວພະຍາເມືອງຫນຶ່ງ ມັນຈັກເອົາເປັນເມຍດັ່ງນັ້ນ ມັນກໍກົວ ພະຍາຈະຖາມຫາໂຄດວົງມັນໆຈຶ່ງລະນຶງໃນໃຈມັນວ່າ ເຈົ້າຣັດສີ ເປັນພໍ່ມັນໆກໍກົວ ເຈົ້າຣັດສີວ່າມັນເປັນຫມາ ຈຶ່ງຄືນເມືອວ່າຈັກຂ້າ ເຈົ້າຣັດສີເສຍແລ້ວຈຶ່ງຊິເອົາເປັນເມຍແລ ວ່າດັ່ງນັ້ນເຈົ້າຣັດສີ ກະສ່ອງເຫັນດ້ວຍຕາທິບແຫ່ງຕົນແລ ເຈົ້າຣັດສີກໍເລົ່າໃຫ້ເປັນຫມາ ດັ່ງເກົ່າທັ້ນແລ. ເຫດວ່າຫາຄຸນບໍ່ໄດ້ແລ. ມັນຜູ້ນັ້ນກໍເປັນຂ້ອຍ ດັ່ງເກົ່າຊອບແລ ເມຍ 12 ຈຳພວກນັ້ນຊື່ວ່າ ສັນທະວາສີນີແລ ຍັງມີຊາຍຜູ້ຫນຶ່ງໄປຊູເອົາຍິງນັ້ນ ມັນກໍທຳມິດສາຈານກັບດັ່ງນັ້ນ ໃຫ້ໃສ່ອັນໄຫມ 5 ບາດແລ. ຜີວ່າຊາຍຫນີຈາກຍິງນັ້ນມັນກະທຳ ມີແລ. ຫມົດທໍ່ນີ້ແລເຈົ້າເຮີຍ.

(ສ້ອຍສາຍຄຳ ສະຫມັນປາຕິໂມກ ມີ 37 ໃບປາຍຫນ້າ ປາຍແຖວຖ່ອງ. ຫນັງສືຂະຫນັບນ້ຳໂມງສ້າງເອົາໄວ້ ທຽມໃນ ທຽມນອກແລເຈົ້າເຮີຍ. ສັງກຣາດຣາຊາໄດ້ 1233 ຕົວ ປີມະແມ ຕີນີສົກເດືອນ 10 ແຮມ 5 ຄ່ຳ ວັນ 2 ມື້ເປີກສັນຂະຫນັບນັບ ທັມມະວົງສາ ບັນຍາລິກຂິຕະ ຂຽນຫນັງສື ສ້ອຍສາຍຄຳແລ

ສະຫມັນປາຕິໂມກຂະໄວ້ເປັນອັນຫມັ້ນຄົງອຸດທີ ມີໄຊຊະນະແຜ້ນານ 5 ປະການແລເຈົ້າເຮີຍ ).



## ຊີວະປະຫວັດຫຍໍ້

ຂອງຜູ້ຂຽນ

**ສຳລິດ ບົວສີສະຫວັດ**

| | | |
|---|---|---|
| ວັນເດືອນປີເກີດ | : | ວັນທີ 25 ກັນຍາ ປີ 1923 |
| ທີ່ເກີດ | : | ບ້ານຫີນສິ່ວ ເມືອງໂຂງ ແຂວງຈຳປາສັກ |
| ຊົນຊັ້ນ | : | ຄອບຄົວຊາວນາສາມັນ ຊົນຊັ້ນລາວລຸ່ມ ເຜົ່າລາວລຸ່ມ ສາດສະໜາພຸດ |
| ລະດັບການສຶກສາ | : | ປ.3 ລະບົບເກົ່າ (ຊັ້ນ ອະວະສານລາວ) ນ.ທ.ເອກ, ປ.ທ.5, ສາສະນະສາດບັນດິດ ປະກາດສະນີຍະບັດຄູ ມ, ປ.ປ., ປ.ມ. (ພິເສດໄທ). |
| ອາຊີບ | : | ພະນັກງານການສຶກສາ ແລະ ວັດທະນະທຳ |
| ປັດຈຸບັນ | : | ເປັນນັກຄົ້ນຄວ້າອິດສະລະ, ທີ່ປຶກສາ ໂຄງການຂຶ້ນບັນຊີໜັງສືໃບລານ ແຕ່ປີ 1988-94, ໂຄງການປົກປັກຮັກສາໜັງສືໃບລານລາວ ແຕ່ 1992 ມາຮອດປັດຈຸບັນ. |